ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
HELVETAS LAOS

# ໂຄງການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງຄວາມຮັບຮູ້ ໃຫ້ແກ່ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ

# ຄູ່ມືການຝຶກອົບຮົມສຳລັບຄູຝຶກ

ຫົວຂໍ້ທີ 1: ສິດທີ່ດິນຕາມປະເພນີ ແລະ ທັກສະການຮຽນຮູ້ທີ່ຫຼາກຫຼາຍສຳລັບການເປັນຜູ້ອຳນວຍຄວາມສະດວກ

# The Public Information and Awareness Services for Vulnerable Communities Project

# Training of Trainer Manual

#1: Basic Knowledge on Customary Land Rights and Facilitation Skills

ໃຫ້ທຶນສະໜັບສະໜູນໂດຍ/ Funded by:

Government of Japan
JSDF Japan Social Development Fund
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

THE WORLD BANK
IBRD • IDA | WORLD BANK GROUP

ມັງກອນ 2023

# ສາລະບານ

**ໜ້າ**

## ພາກທີ I: ໂຄງການ LIFE


ປື້ມຄູ່ມື: ທັກສະການຮຽນຮູ້ທີ່ຫຼາກຫຼາຍເພື່ອນຳໃຊ້ເຂົ້າໃນການເປັນຜູ້ອຳນວຍຄວາມສະດວກສຳລັບຄູຝຶກ...............1-33

ເອກະສານປະກອບການຝຶກອົບຮົມ..........................................................................................34-44

ເຄື່ອງມືສຳລັບການຝຶກອົບຮົບ (ໂພສເຕີ້ ແລະ ພາບປະກອບ)....................................................................45-46

**ເອກະສານ ແລະ ເຄື່ອງມືເພີ່ມເຕີມ.........................................................https://bit.ly/3xpwWYS**


**ຫຼື ສະແກນຜ່ານ QR Code**

# ປຶ້ມຄູ່ມື

ທັກສະການຮຽນຮູ້ທີ່ຫຼາກຫຼາຍເພື່ອນຳໃຊ້ເຂົ້າໃນການເປັນຜູ້ອຳນວຍຄວາມສະດວກສຳລັບຄູຝຶກ

# ທັກສະການຮຽນຮູ້ທີ່ຫຼາກຫຼາຍ ເພື່ອນຳໃຊ້ເຂົ້າໃນ ການເປັນຜູ້ອຳນວຍຄວາມສະດວກສຳລັບຄູຝຶກ




ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
Village Focus International
MRLG Mekong Region Land Governance
DALaM

# ຄຳນຳ

ຫຼັກສູດໄລຍະສັ້ນນີ້ ແມ່ນສ້າງຂຶ້ນເພື່ອສ້າງຄວາມເຂົ້າໃຈໃຫ້ບັນດາຄູຝຶກກ່ຽວກັບບັນດາຫຼັກການພື້ນຖານຂອງການຮຽນຮູ້ແບບຫຼາກຫຼາຍ, ພ້ອມດ້ວຍປະສົບການ ແລະ ເຄື່ອງມື ເພື່ອນຳໃຊ້ເຂົ້າໃນການເປັນຜູ້ອຳນວຍຄວາມສະດວກ. ຈຸດປະສົງ ແມ່ນເພື່ອສ້າງທັກສະໃຫ້ບັນດາຄູຝຶກໃຫ້ມີປະສົບການໃນການນຳໃຊ້ບັນດາເຄື່ອງມືແບບງ່າຍດາຍເພື່ອສົ່ງເສີມການມີສ່ວນຮ່ວມ, ການວິເຄາະ, ການສົນທະນາ ແລະ ການຮຽນຮູ້. ບັນດາເຄື່ອງມືເຫຼົ່ານີ້ຈະໄດ້ຖືກນຳໃຊ້ຊ້ຳກັນຫຼາຍຄັ້ງ, ເພື່ອແກ້ໄຂບັນຫາທີ່ມັກເກີດຂຶ້ນໃນການທົບທວນ, ການວິເຄາະ ແລະ ການສົນທະນາຜ່ານບັນດາຫຼັກສູດ ທີ່ຊ່ວຍສ້າງຫຼັກສູດການຝຶກອົບຮົມ ຂອງໂຄງການ ການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ (LIFE). ນອກຈາກນັ້ນ, ບັນດາເຄື່ອງມືເຫຼົ່ານີ້ຍັງສາມາດນຳໃຊ້ເຂົ້າໃນການຝຶກສອນ ແລະ ການຕິດຕາມການລົງປະຕິບັດຕົວຈິງ. ເພື່ອນຳໃຊ້ບັນດາເຄື່ອງມືນີ້ຊ້ຳຄືນຫຼາຍຄັ້ງເພື່ອເຮັດໃຫ້ບັນດາຄູຝຶກ ແລະ ຜູ້ເຂົ້າຮ່ວມມີຄວາມຄຸ້ນເຄີຍພຽງພໍເພື່ອໃຫ້ນຳໃຊ້ ແລະ ດັດປັບເອົາບັນດາເຄື່ອງມືດັ່ງກ່າວໃຫ້ເຂົ້າກັບເນື້ອໃນໂດຍອີງຕາມສະພາບຕົວຈິງ.

# ສາລະບານ


ພາກທີ 1 ກິດຈະກຳແນະນຳຕົນເອງ..........
ພາກທີ 2 ເກມຕົບມືເອີ້ນຊື່..........
ພາກທີ 3 ການແນະນຳວາລະການຝຶກອົບຮົມ..........
ພາກທີ 4 ການແນະນຳກິດຈະກຳການວັດລະດັບຕົວເອງ..........
ພາກທີ 5 ຄວາມຄາດຫວັງ, ຄວາມກັງວົນ ແລະ ການແກ້ໄຂຄວາມກັງວົນ..........
ພາກທີ 6 ການຂຽນບັນທຶກ..........
ພາກທີ 7 ທິດສະດີຄວາມຫຼາກຫຼາຍທາງດ້ານທັກສະການຮຽນຮູ້ທີ່ຫຼາກຫຼາຍ..........
ພາກທີ 8 ກິດຈະກຳຄຶງທ່ອນເຈ້ຍ..........
ພາກທີ 9 ທິດສະດີຄວາມຫຼາກຫຼາຍທາງປັນຍາຂອງກາດເນີ້..........
ພາກທີ 10 ການຈຳແນກການຮຽນຮູ້ຂອງທິດສະດີບຣູບ..........
ພາກທີ 11 ແຜນທີ່ແນວຄວາມຄິດຂອງທັກສະການຮຽນຮູ້ທີ່ຫຼາກຫຼາຍ..........
ພາກທີ 12 ວຽກບ້ານກ່ຽວກັບການເປັນຜູ້ນຳ..........
ພາກທີ 13 ກິດຈະກຳຄຶງທອນເຈ້ຍ..........
ພາກທີ 14 ທັກສະການສ້າງພື້ນທີ່ການຮຽນຮູ້..........
ພາກທີ 15 ທວນຄືນມື້ທີໜຶ່ງ..........
ພາກທີ 16 ວົງຈອນຄວາມຄິດສ້າງສັນ..........
ພາກທີ 17 ເກມໃຊ້ຊື່ແບບມ່ວນຊື່ນ..........
ພາກທີ 18 ການປຶກສາຫາລືກ່ຽວກັບເຄື່ອງມື..........
ພາກທີ 19 ສາຍນ້ຳຂອງຫູ້ກສູດ..........
ພາກທີ 20 ເປົ້າໝາຍແບບSMART (ການຂຽນແຜນ)..........
ພາກທີ 21 ການວັດລະດັບຕົວເອງ..........

## ຈຸດປະສົງ
## ເວລາ 2 ວັນ

ເພື່ອສ້າງຄວາມເຂົ້າໃຈໃຫ້ບັນດາຄູຝຶກໃຫ້ມີຄວາມເຂົ້າໃຈກ່ຽວກັບບັນດາຫຼັກການພື້ນຖານຂອງການຮຽນຮູ້ທີ່ຫຼາກຫຼາຍ, ພ້ອມດ້ວຍປະສົບການ ແລະ ເຄື່ອງມື ເພື່ອນໍາໃຊ້ເຂົ້າໃນການເປັນຜູ້ອໍານວຍອວາມສະດວກ ແລະ ການຮຽນຮູ້ທີ່ຫຼາກຫຼາຍ.

## ຜູ້ເຂົ້າຮ່ວມ

ສາມາດມີໄດ້ເຖິງ 10-12 ຄົນ, ສໍາລັບຜູ້ເຂົ້າຮ່ວມຝຶກອົບຮົມແມ່ນບໍ່ຢາກໃຫ້ມີຄວາມແຕກຕ່າງກັນຫຼາຍທາງດ້ານຄວາມຮູ້.

## ອຸປະກອນ

- ຂາຕັ້ງເຈັ້ຍແຜ່ນໃຫຍ່ສອງອັນ.
- ເຄື່ອງສາຍພາບ ແລະ ຄອມພິວເຕີ.
- ເຈັ້ຍແຜ່ນໃຫຍ່ (100 ໃບ).
- ເຈັ້ຍ A4 (100ໃບ)
- ບິກເຟີດ (ຫຼາຍໆສີ) ໄວ້ຂຽນກັບເຈັ້ຍແຜ່ນໃຫຍ່.
- ສໍສີ, ທຽນສີ ສໍສໍາລັບແຕ້ມຮູບ.
- ເຈັ້ຍຕິດນ້ອຍ ສອງສີ.
- ສະກ໊ອດເຈັ້ຍ.
- ປື້ມຂຽນບັນທຶກ 12ຫົວ ຫຼື ຄິບຈໍານວນຜູເຂົ້ຮ່ວມ.

## ສະຖານທີ່

ມີລັກສະນະເປັນຫ້ອງດ່ຽວ, ເນື້ອທີ່ເປີດກ້ວາງພຽງພໍໃຫ້ 10 ຫາ 12 ຜູ້ເຂົ້າຮ່ວມນັ່ງຢູ່ພື້ນເປັນວົງມົນ ປະມານ 5 ຫາ 10 ແມັດ, ໂດຍມີເນື້ອທີ່ຝາຫ້ອງທີ່ສາມາດຕິດບັນດາເຈັ້ຍກິດຈະກໍາ ແລະ ໂປສເຕີ້ທີ່ກ່ຽວຂ້ອງກັບຫົວຂໍ້ຝຶກອົບຮົມ. ໃນບາງຄັ້ງບໍ່ຈໍາເປັນຕ້ອງໃຊ້ໂຕະ, ຕັ່ງ ເຮົາສາມາດປູສາດນັ່ງພື້ນກໍ່ໄດ້ ແຕ່ຕ້ອງເປັນຫ້ອງໂລ່ງ.

## ບັນດາເຄື່ອງມືຫຼັກທີ່ໄດ້ໃຊ້ລວມມີ:

- **ການຈັດວົງມົນ** ແມ່ນວິທີການສື່ສານວິທີໜຶ່ງທີ່ສ້າງສະພາບແວດລ້ອມໃຫ້ມີການຕັ້ງ ໃຈຟັງ ແລະ ແລກປ່ຽນຊຶ່ງກັນ ແລະ ກັນ.
- **ກິດຈະກໍາຄົງທ່ອນເຈັ້ຍ** ເປັນກິດຈະກໍາສ້າງຄວາມລຶ້ງເຄີຍກັນ ແລະ ການຝຶກຫັດທີ່ມີເນື້ອໃນບົດຮຽນ ແລະ ການປະກອບຄໍາເຫັນກ່ຽວກັບການອໍານວຍຄວາມສະດວກ, ການສື່ສານ, ຄວາມເປັນຜູ້ນໍາ ແລະ ການຮຽນຮູ້.
- **ແຜນທີ່ແນວຄວາມຄິດ** ແມ່ນເຄື່ອງມືໜຶ່ງທີ່ດຶງເອົາບັນດາແນວຄວາມຄິດຕ່າງໆເຂົ້າມາເປັນອັນດຽວກັນ, ເຮັດໃຫ້ຜູ້ເຂົ້າຮ່ວມສາມາດທວນຄືນບົດຮຽນ ແລະ ເຫັນພາບ ລວມ ພ້ອມທັງສົ່ງເສີມການເຮັດວຽກເປັນທີມໃນການທົບທວນບັນດາບົດຮຽນ ແລະ ເນື້ອໃນຕ່າງໆຮ່ວມກັນ.
- **ເຕັກນິກການວິເຄາະດ້ານບວກ,ດ້ານລົບ ແລະ ຄວາມໜ້າສົນໃຈ** ແມ່ນເຄື່ອງມືທີ່ງ່າຍດາຍ ແລະ ສາມາດປັບຕາມສະພາບຕົວຈິງທີ່ໃຊ້ເຂົ້າໃນການວິເຄາະ ແລະ ການຄິດໄຕ່ຕອງ.
- **ສາຍນໍ້າ** ແມ່ນເຄື່ອງມືໜຶ່ງທີ່ສາມາດເຮັດໃຫ້ພວກເຮົາທົບທວນເຖິງສະພາບ, ປະເມີນຜົນ ແລະ ຮຽນຮູ້ຈາກການເບິ່ງຄືນບັນດາຂະບວນການ ຊຶ່ງຈະມັກນໍາໃຊ້ໃນຕອນທ້າຍຂອງຫຼັກສູດ.
- **ການຮຽນຮູ້ກ່ຽວກັບຫົວ, ຫົວໃຈ, ມື** ແມ່ນກອບວຽກເພື່ອຮັບປະກັນໃຫ້ພວກເຮົາໄດ້ຄິດຫາຄຸນລັກສະນະຄວາມຮູ້, ທັດສະນະຄະຕິ ແລະ ທັກສະຢ່າງຄົບຖ້ວນ ທີ່ຈໍາເປັນຕ້ອງມີໃນການປະຕິບັດບົດບາດໜ້າທີ່ວຽກ

ງານທີ່ກ່ຽວຂ້ອງ.

- **ການນໍາໃຊ້ການຈໍາແນກຄວາມຮູ້ຕາມທິດສະດີບລູມ ແລະ ສະຕິປັນຍາທີ່ຫຼາກຫຼາຍຂອງກາດເນີ້** (Blooms taxonomy ແລະ Gardners multiple intelligences)ແມ່ນຖືກແນະນໍາໂດຍເປັນກອບວຽກໜຶ່ງທີ່ຈະຮັບປະກັນການຮຽນຮູ້ໃຫ້ມີຄວາມເຂົ້າ ໃຈ ແລະ ສາມາດນໍາໃຊ້ໄດ້ຕົວຈິງ.
- **ການສ້າງບັນຍາກາດທີ່ເປັນກັນເອງ, ການຕັ້ງຄໍາຖາມແບບເໝາະສົມ ແລະ ການຈັດເປັນວົງມົນແບບສ້າງສັນໃນຂະບວນການຂອງຫຼັກສູດ** ແມ່ນຍັງຈະຊ່ວຍຮັບປະກັນປະສິດທິພາບຂອງການເຮັດວຽກແບບມີສ່ວນຮ່ວມໂດຍສະເພາະໃນສະພາບຄວາມເປັນຈິງ ແລະ ວັດທະນະທໍາລາວ.

ສໍາລັບລາຍລະອຽດເພີ່ມເຕີມກ່ຽວກັບບັນດາເຄື່ອງມືເຫຼົ່ານີ້ ໃຫ້ເບິ່ງເອກະສານຊຸດເຄື່ອງມືທີ່ໃຫ້ມາພ້ອມນີ້.

## ຕາຕະລາງວາລະຝຶກອົບຮົມ

| ມື້ທີ 1 | ມື້ທີ 2 |
|---|---|
| ການແນະນໍາ, ປ້າຍຊື່, ການຮຽນຮູ້ຊື່ກັນ ແລະ ກັນ, ນັ່ງອ້ອມເປັນວົງມົນ, ຫຼິ້ນເກມເພື່ອສ້າງບັນຍາກາດໃນການຮຽນຮູ້ຮ່ວມກັນ | ທວນຄືນບົດຮຽນໃນມື້ທີໜຶ່ງ, ພວກເຮົາໄດ້ບັນລຸຈຸດປະສົງຂອງພວກເຮົາຮອດໃສ ແລ້ວໂດຍການຈົດບັນທຶກ, ແນະນໍາຕາຕະລາງຂອງມື້ນີ້ |
| ນໍາສະເໜີວາລະການຝຶກອົບຮົມ, ການວັດລະດັບຕົນເອງ, ກິດຈະກໍາຄວາມຄາດຫວັງ ແລະ ຄວາມກັງວົນຂອງຜູ້ເຂົ້າຮ່ວມ, ການກໍານົດກົດລະບຽບການຝຶກອົບຮົມຮ່ວມກັນ, | ກິດຈະກໍາຄຶງທ່ອນເຈັ້ຍ |
| ກິດຈະກໍາການຈົດບັນທຶກບົດຮຽນ | ກິດຈະກໍາ ຫົວ, ຫົວໃຈ ແລະ ມື, ວົງຈອນຄວາມຄິດສ້າງສັນ, |
| ການຮຽນຮູ້ທີ່ຫຼາກຫຼາຍ | ການຈົດບັນທຶກກ່ຽວກັບບົດຮຽນໃນ ພາກເຊົ້າ |
| ພັກຮັບປະທານອາຫານທ່ຽງ | ພັກຮັບປະທານອາຫານທ່ຽງ |
| ກິດຈະກໍາສ້າງຄວາມມ່ວນຊື່ນ, ກິດຈະກໍາຄຶງທ່ອນເຈັ້ຍ | ກິດຈະກໍາສ້າງຄວາມມ່ວນຊື່ນ, ຫຼິ້ນເກມ |
| ທິດສະດີຄວາມຫຼາກຫລາຍທາງດ້ານປັນຍາຂອງກາດເນີ (Gardners Multiple Intelligences) | ການສົນທະນາກ່ຽວກັບເຄື່ອງມື ແລະ ອຸປະກອນຂອງຜູ້ອໍານວຍຄວາມສະດວກ |
| ການຈໍາແນກທາງດ້ານຄວາມຮູ້ຕາມທິດສະດີຂອງບູລມ (Blooms Taxonomy) | ສາຍນໍ້າຂອງຫຼັກສູດນີ້, ແຜນທີ່ແນວຄວາມຄິດ |
| ແຜນທີ່ແນວຄວາມຄິດ, ການຮຽນຮູ້ທີ່ຫຼາກຫຼາຍ | ເປົ້າໝາຍແບບ SMART |

## ພາກທີ 1: ກິດຈະກຳແນະນຳຕົນເອງ
## ເວລາ: 15 ນາທີ



### ຈຸດປະສົງ:

ຊຶ່ງກິດຈະກຳນີ້ແມ່ນການສ້າງຄວາມລຶ້ງເຄີຍກັນ, ສ້າງສາຍສຳພັນ, ຄວາມຮູ້ສຶກທີ່ເປັນກັນເອງ ແລະ ຍັງສົ່ງເສີມໃຫ້ມີສ່ວນຮ່ວມນຳກັນອີກດ້ວຍ.

### ວິທີການ ແລະ ຂັ້ນຕອນດຳເນີນກິດຈະກຳ:

1. ຄູຝຶກແນະນຳຂັ້ນຕອນວິທີການສ້າງປ້າຍຊື່, ອະທິບາຍໃຫ້ຜູ້ເຂົ້າຮ່ວມຮູ້ວ່າ, ມັນບໍ່ສຳຄັນວ່າພວກເຂົາຈະແຕ້ມຮູບເປັນ ຫຼື ບໍ່, ແຕ່ຢາກໃຫ້ເຂົາເຈົ້າສະແດງສັນຍາລັກບາງສິ່ງກ່ຽວກັບພວກເຂົາ ເພື່ອໃຫ້ພວກເຮົາເຫັນວ່າພວກເຂົາແມ່ນໃຜ, ຄວາມເປັນບຸກຄົນ ຫຼື ບຸກຄະລິກຂອງພວກເຂົາເປັນຄືແນວໃດ.
2. ກະຕຸກຊຸກຍູ້ໃຫ້ຜູ້ເຂົ້າຮ່ວມຄິດຫາສີ ແລະ ສັນຍາລັກທີ່ພວກເຂົາສາມາດໃຊ້ເພື່ອບົ່ງບອກລັກສະນະຕົວຕົນຂອງພວກເຂົາເອງ.
3. ປ້າຍຊື່ຊ່ວຍໃຫ້ຄົນຈື່ຊື່ຂອງກັນ ແລະ ກັນ ແລະ ອະທິບາຍໄດ້ກ່ຽວກັບລັກສະນະ ແລະ ຈຸດພິເສດຂອງແຕ່ລະບຸກຄົນ, ຊຶ່ງວ່າເຂົາເຈົ້າສາມາດແລກປ່ຽນຄວາມຄິດເຫັນນຳກັນໄດ້ງ່າຍຂຶ້ນ.

ໃຫ້ຜູ້ເຂົ້າຮ່ວມສ້າງປ້າຍຊື່ ຂອງພວກເຂົາເອງໂດຍນຳໃຊ້ແຜ່ນສະກ໋ອດຕິດ (ໃຫ້ເວລາພວກເຂົາ 2-3 ນາທີ).

### ຄຳແນະນຳສຳລັບຄູຝຶກ:

- ໃຫ້ເບິ່ງສະໄລ້ (ຈັດໃຫ້ລະອຽດວ່າແມ່ນສະໄລ້ທີເທົ່າໃດໃສ່ໝາຍເລກPowerPoint).

## ພາກທີ 2: ເກມຕົບມືເອີ້ນຊື່ (ນັ່ງເປັນວົງມົນ)
## ເວລາ: 25 ນາທີ



## ຈຸດປະສົງ

ເພື່ອສ້າງສະພາບແວດລ້ອມທີ່ເປັນກັນເອງ ແລະ ສະແດງໃຫ້ເຫັນເຖິງການຮຽນຮູ້ແບບມີປະສິດທິພາບຮ່ວມກັນ. ຮູບແບບນີ້ແມ່ນຍັງໄດ້ກວມເອົາເນື້ອໃນທິດສະດີທີ່ຈະໄດ້ຮຽນຮູ້ໃນຊ່ວງຕໍ່ໄປຂອງຫຼັກສູດ, ຊຶ່ງຊຶ່ງແມ່ນວົງຈອນຂອງຄວາມຄິດສ້າງສັນ.

## ວິທີການ

1) ໃຫ້ຜູ້ເຂົ້າຮ່ວມນັ່ງຢູ່ພື້ນເປັນວົງມົນ.
2) ແນະນຳຂໍ້ສຳຄັນຂອງການຫຼິ້ນກິດຈະກຳໃຫ້ທຸກຄົນຮັບຊາບວ່າ: ແຕ່ລະຄົນເລືອກເອົາຊື່ຕົນເອງພຽງ ສອງປະໂຫຍກ (ເນັ້ນວ່າ: ຊື່ທີ່ຕ້ອງການໃຫ້ຜູ້ເຂົ້າຮ່ວມທຸກຄົນເອີ້ນ ຫຼື ຈື່ຈຳຕະຫຼອດການຝຶກອົບຮົມ).
3) ຄູຝຶກແນະນຳວິທີການ ແລະ ຂັ້ນຕອນຫຼິ້ນເກມ ພ້ອມສາທິດໃຫ້ເບິ່ງ ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດປະຕິບັດໄດ້ງ່າຍຂຶ້ນ, ຊຶ່ງມີລຳດັບດັ່ງລຸ່ມນີ້:
   - ໃຫ້ທຸກຄົນເອົາມືວາງໃສ່ຂາທັງສອງເບື້ອງ.
   - ຍົກມືທັງສອງເບື້ອງຂຶ້ນ ແລ້ວຕົບມືທັງສອງລົງໃສ່ຂາຕຸ່ນສອງຂ້າງ.
   - ຍົກມືແລ້ວຕົບມືທັງສອງຂ້າງເຂົ້າຫາກັນ.
   - ດີດນິ້ວເບື້ອງຂວາມື ພ້ອມກັບເອີ້ນຊື່ ປະໂຫຍກທີ1.
4) ໃຫ້ຕົບມືສິ່ງຕໍ່, ໂດຍເວົ້າຊື່ແລ້ວຖາມວ່າ:
   - ຍ້ອນຫຍັງເຮົາຈຶ່ງນັ່ງເປັນວົງມົນຢູ່ພື້ນ?
   - ຍ້ອນຫຍັງເຮົາຈຶ່ງນັ່ງອ້ອມເປັນວົງມົນຢູ່ຕັ່ງ?
5) ຍ້ອນຫຍັງເຮົາຈຶ່ງຫຼິ້ນເກມແນະນຳຊື່? ຄູຝຶກອະທິບາຍ ຄວາມແຕກຕ່າງກັນແນວໃດ ລະຫວ່າງກຸ່ມທີ່ບໍ່ມີຄວາມເຊື່ອໝັ້ນຊຶ່ງຊຶ່ງກັນ ແລະ ກັນ ກັບກຸ່ມທີ່ມີຄວາມເຊື່ອໝັ້ນນຳກັນສູງ?
6) ຄູຝຶກນຳພາການສົນທະນາກັບຜູ້ເຂົ້າຮ່ວມ.
7) ສຸດທ້າຍ ຄູຝຶກສະຫຼຸບໂດຍລວມເອົາບັນດາຈຸດສຳຄັນດັ່ງນີ້:
   - ພວກເຮົານັ່ງຢູ່ພື້ນເພາະວ່ານີ້ແມ່ນສິ່ງທີ່ເຮັດໃນຂັ້ນບ້ານ; ພວກເຮົາທຸກຄົນມີຄວາມຮູ້ສຶກເປັນກັນເອງ; ພວກເຮົາທຸກຄົນຢູ່ໃນລະດັບດຽວກັນ. ບໍ່ມີອຸປະສັກຫຍັງມາຂັ້ນພວກເຮົາ.
   - ພວກເຮົານັ່ງເປັນວົງມົນຍ້ອນວ່າວິທີນີ້ພວກເຮົາທຸກຄົນແມ່ນມີຄວາມສະເໝີພາບກັນ, ມີສິດເທົ່າກັນ; ທຸກຄົນສາມາດແນມໜ້າກັນ, ສາມາດຈ້ອງຕາກັນ ແລະ ເບິ່ງເຫັນໝົດທຸກຄົນ; ການນັ່ງອ້ອມກັນເປັນວົງມົນແມ່ນທຸກຄົນສາມາດເບິ່ງສິ່ງທີ່ຢູ່ທາງຫຼັງຂອງກັນ ແລະ ກັນໄດ້.
   - ພວກເຮົາຫຼິ້ນເກມຕົບມືເອີ້ນຊື່ຍ້ອນວ່າມັນເປັນວິທີທີ່ສຳຄັນໃນການສ້າງຄວາມເຊື່ອໝັ້ນ ແລະ ສາຍສຳພັນ; ພວກເຮົາສະໜັບສະໜູນໃຫ້ແຕ່ລະຄົນສະເໜີແນວຄວາມຄິດ ແລະ ສິ່ງທ້າທາຍ ໃໝ່ໆ; ຫຼິ້ນມ່ວນຊື່ນ, ຍອມຮັບກັບຄວາມຜິດພາດທີ່ເກີດຂຶ້ນໂດຍບໍ່ມີການລົງໂທດ; ການຫຼິ້ນມ່ວນຊື່ນເປັນການຊຸກຍູ້ໃຫ້ໃຫ້ທຸກຄົນມີຄວາມພະຍາຍາມປະກອບສ່ວນ.

## ພາກທີ 3: ການແນະນຳວາລະການຝຶກອົບຮົມ

### ຈຸດປະສົງ

ເພື່ອແນະນຳໃຫ້ຜູ້ເຂົ້າຮ່ວມ ເຫັນພາບການດຳເນີນການຝຶກອົບຮົມຮ່ວມກັນໃນ 2 ວັນ, ຊຶ່ງຈະລວມມີບັນດາກິດຈະກຳຕ່າງໆ ແລະ ບັນດາຫົວຂໍ້ທິດສະດີທີ່ຈະນຳສະເໜີ ເພື່ອສ້າງຄວາມເຂົ້າໃຈໃຫ້ກັບຜູ້ເຂົ້າຮ່ວມໃນການຮຽນຮູ້ທີ່ຫຼາກຫຼາຍ.

### ວິທີການ

ຄູຝຶກນຳສະເໜີ ວາລະການຝຶກອົບຮົມ ການນຳສະເໜີອາດຈະຜ່ານໃນຄອມພິວເຕີ ຫຼື ເຈ້ຍແຜ່ນໃຫຍ່ກໍໄດ້. ຈາກນັ້ນ,ຖາມວ່າຜູ້ເຂົ້າຮ່ວມມີຫຍັງບໍ່ເຂົ້າໃຈຈະແຈ້ງ,ຖ້າວ່າທຸກຄົນມີຄວາມເປັນເອກະພາບກໍສາມາດດຳເນີນການຝຶກອົບຮົມຕາມວາລະຫົວຂໍ້ໄດ້.

### ຄຳແນະນຳສຳລັບຄູຝຶກ

1. ຕ້ອງກຳໄດ້ເນື້ອໃນສຳຄັນຂອງແຕ່ລະຫົວຂໍ້ທີ່ຈະດຳເນີນຮ່ວມກັບຜູ້ເຂົ້າຮ່ວມ.
2. ນຳສະເໜີແບບສັງລວມ ແລະ ຊັດເຈນ ບໍ່ເວົ້າສັບໜ້າສັບຫຼັງ.
3. ໃຫ້ຜູ້ເຂົ້າຮ່ວມມີສ່ວນຮ່ວມໃນການສະແດງຄຳຄິດຄຳເຫັນ.

## ພາກທີ 4: ການແນະນຳກິດຈະກຳການວັດລະດັບຕົວເອງ
## ເວລາ: 25 ນາທີ




### ຈຸດປະສົງ

ກ່ອນດຳເນີນການຝຶກອົບຮົມ ພວກເຮົາໄດ້ມີການນຳສະເໜີກ່ຽວກັບກິດຈະກຳການວັດລະດັບຕົວເອງ:

- ເພື່ອເປັນເຄື່ອງມືການຮຽນຮູ້ທີ່ເປັນຮູບປະທຳ (ພວກເຮົາຈະເຊື່ອມຕໍ່ກິດຈະກຳນີ້ເຂົ້າກັບທິດສະດີສະຕິປັນຍາແບບຫລາກຫລາຍຂອງກາດເນີ້ (Gardners Multiple intelligences) ໃນໄລຍະຖັດໄປຂອງຫຼັກສູດນີ້. ແລະ
- ເພື່ອກະຕຸ້ນຜູ້ເຂົ້າຮ່ວມໃຫ້ມີການສົນທະນາ ແລະ ຊ່ວຍກັນອອກຄຳຄິດຄຳເຫັນ. ທັງໝົດນີ້ແມ່ນສະແດງໃຫ້ເຫັນເຖິງວິທີການທີ່ພວກເຮົາຈະນຳໃຊ້ເຂົ້າໃນການອຳນວຍຄວາມສະດວກໃຫ້ແກ່ການຮຽນຮູ້ທີ່ຫຼາກຫຼາຍ.
- ເພື່ອວັດລະດັບຂອງຜູ້ເຂົ້າຮ່ວມແຕ່ລະຄົນມີການປ່ຽນແປງແນວໃດກ່ອນ ແລະ ຫຼັງການຝຶກອົບຮົມ, ໂດຍສະເພາະແມ່ນຈຸດທີ່ແຕ່ລະຄົນຢືນວັດລະດັບໄດ້ມີການປ່ຽນແປງໜ້ອຍຫຼາຍສ່ຳໃດ.

## ວິທີການ

1. ຄູຝຶກຂຽນເລກເປີເຊັນ (%) ແຕ່ 10%, 20%, 30%, 40%, 50%, 60%, 70%, 80%, 90% ແລະ 100% ຕິດໄວ້ຢູ່ຂ້າງຝາໃນຫ້ອງຝຶກອົບຮົມ.
2. ໃຫ້ຜູ້ເຂົ້າຮ່ວມຢືນລຽງຕາມລຳດັບ ຈາກຜູ້ທີ່ມີປະສົບການໃນການເປັນຜູ້ອຳນວຍຄວາມສະດວກຈາກລະດັບໜ້ອຍຫາຜູ້ທີ່ມີປະສົບການຫຼາຍແລ້ວໃຫ້ຜູ້ທີ່ມີປະສົບການຫຼາຍທີ່ສຸດຍ່າງມາຢືນກົງກັນຂ້າມກັບຜູ້ທີ່ມີປະສົບການໜ້ອຍທີ່ສຸດ ແຕ່ຫັນໜ້າເຂົ້າຫາກັນ ແລະ ຜູ້ຕໍ່ໆໄປກໍ່ເຮັດແບບດຽວກັນ, ຜູ້ທີ່ມີປະສົບການຫຼາຍຮອງລົງມາກໍຢືນເຊິ່ງໜ້າກັບຜູ້ທີ່ມີປະສົບການໜ້ອຍຖັດຈາກຜູ້ສຸດທ້າຍ.
3. ໃຫ້ຜູ້ເຂົ້າຮ່ວມຈັບຄູ່ກັນ ແລະ ຈື່ວ່າຄູ່ພວກເຂົາແມ່ນໃຜເພາະຄູ່ດັ່ງກ່າວຈະເປັນຄູ່ທີ່ພວກເຂົາຈະໄດ້ນັ່ງ ແລະ ປະກອບຄວາມຄິດເຫັນນຳກັນໂດຍຖືເປັນຄູ່ຮຽນນຳກັນ.
4. ໃຫ້ຜູ້ເຂົ້າຮ່ວມປະກອບຄຳຄິດເຫັນ ວ່າເຂົາເຈົ້າຄິດວ່າພາກນີ້ໄດ້ສະແດງໃຫ້ເຫັນຫຼັກການຂອງການຮຽນຮູ້ທີ່ຫຼາກຫຼາຍແນວໃດ?
5. ຄູຝຶກສະຫຼຸບວ່າ: ກິດຈະກຳການວັດລະດັບຕົວເອງ (Sociometry) ແມ່ນກະຕຸ້ນໃຫ້ທຸກຄົນມີສ່ວນຮ່ວມ, ທຸກຄົນຕ້ອງໄດ້ຄິດຫາວິທີການເຊື່ອມສາຍສຳພັນຈາກຕົວພວກເຂົາກັບຜູ້ອື່ນ, ໝູນວຽນໄປໃຫ້ທົ່ວເຖິງ,ໂອ້ລົມກັນ ແລະ ປຽບທຽບຕົວພວກເຂົາກັບຄົນອື່ນ. ໂດຍການໝູນວຽນໄປມາ, ພວກເຂົາຕ້ອງໄດ້ຊອກຕຳແໜ່ງຢືນທີ່ຄິດວ່າກົງກັບຂອງຕົນ ແລະ ເຫັນວ່າພວກເຂົາຢືນຢູ່ຈຸດໃດໂດຍສົມທຽບກັບຜູ້ອື່ນ.

## ຄຳແນະນຳສຳລັບຄູຝຶກ

1. ຄູຝຶກຕ້ອງໄດ້ອະທິບາຍ ແລະ ສະແດງໃຫ້ເຫັນວ່າພວກເຮົາບໍ່ໄດ້ມີການຈຳແນກ ຫຼື ຕັດສິນໃດໆ, ເພື່ອໃຫ້ຜູ້ເຂົ້າຮ່ວມຮູ້ສຶກສະບາຍໃຈ ແລະ ສາມາດຈັດລຽງລຳດັບຈຸດຢືນຂອງພວກເຂົາ ແລະ ຮູ້ວິທີຊ່ວຍເຫຼືອກັນໄດ້.
2. ໃນການວັດລະດັບຕົນເອງໃນການເປັນຜູ້ອຳນວຍຄວາມສະດວກໃນມື້ທຳອິດຄວນຖ່າຍຮູບໄວ້ ແລະ ມື້ສຸດທ້າຍຂອງການຝຶກອົບຮົມ ຈະໄດ້ເຮັດກິດຈະກຳວັດລະດັບຕົນເອງອີກຄັ້ງໜຶ່ງ ເພື່ອປຽບທຽບເບິ່ງຜົນໄດ້ຮັບຫຼັງຈາກການຝຶກອົບຮົມ.
3. ໃນຕອນທ້າຍຫຼັງຈາກຈົບການຝຶກອົບຮົມ ຄູຝຶກກໍສົນທະນາກັບຜູ້ເຂົ້າຮ່ວມວ່າ ແມ່ນປັດໃຈໃດທີ່ເຮັດໃຫ້ເກີດມີການປ່ຽນແປງໃນດ້ານຄວາມສາມາດໃນການເປັນຜູ້ອຳນວຍຄວາມສະດວກຂອງຜູ້ເຂົ້າຮ່ວມ.

## ພາກທີ 5: ຄວາມຄາດຫວັງ, ຄວາມກັງວົນ ແລະ ການແກ້ໄຂຄວາມກັງວົນ
## ເວລາ: 45 ນາທີ

| ຄວາມຄາດຫວັງ | ຄວາມກັງວົນ | ວິທີແກ້ໄຂຄວາມກັງວົນ |
|---|---|---|
| | | |

## ຈຸດປະສົງ:

- ເພື່ອສ້າງຄວາມເປັນເຈົ້າການຂອງຜູ້ເຂົ້າຮ່ວມ ໃຫ້ປະສົບຜົນສຳເລັດຕາມຈຸດປະສົງຕາມວາລະຂອງການຝຶກອົບຮົມນີ້.
- ເພື່ອຊຸກຍູ້ໃຫ້ຜູ້ເຂົ້າຮ່ວມກຳນົດຄວາມຕ້ອງການຂອງພວກເຂົາ, ສາມາດວັດແທກຄວາມຄືບໜ້າຂອງຕົນເອງ.
- ເພື່ອໃຫ້ມີຂໍ້ຕົກລົງຮ່ວມກັນກ່ຽວກັບກິດລະບຽບຂອງການຝຶກອົບຮົມ.

## ວິທີການ ແລະ ຂັ້ນຕອນ:

1) ຄູຝຶກກະກຽມເຈັ້ຍຂາວແຜ່ນໃຫຍ່ຕິດໄວ້ຝາໃນຫ້ອງຮຽນ ພ້ອມກັບຂຽນຄຳວ່າ ຄວາມຫວັງ, ຄວາມກັງວົນ ແລະ ວິທີແກ້ໄຂຄວາມກັງວົນ
2) ແຈກຢາຍເຈ້ຍບັດຄຳ ສອງ ສີ ໃຫ້ຜູ້ເຂົ້າຮ່ວມທຸກຄົນ (ແນະນຳໃຫ້ຈະແຈ້ງວ່າ ສີໃດແມ່ນສຳລັບຄວາມຫວັງ ແລະ ສີໃດແມ່ນສຳລັບຄວາມກັງວົນ).
3) ອະທິບາຍ ຄວາມໝາຍຂອງຄຳວ່າ:
    - **"ຄວາມຫວັງ"** ແມ່ນສິ່ງທີ່ພວກເຮົາຈະຮຽນ ຫຼື ຕ້ອງການຢາກຮຽນ ແລະ ວິທີທີ່ພວກເຮົາຈະຮຽນ.
    - **"ຄວາມກັງວົນ"** ແມ່ນສິ່ງທີ່ເປັນປັດໄຈອາດຈະເຮັດໃຫ້ຄວາມສາມາດໃນການຮຽນຮູ້ ແລະ ການນຳໃຊ້ຄວາມຮູ້ຂອງພວກເຮົາລົດໜ້ອຍລົງ.
4) ແບ່ງຜູ້ເຂົ້າຮ່ວມອອກເປັນ 2 ຄູ່.
5) ໃຫ້ແຕ່ລະຄູ່ (ຄູ່ດຽວກັນກັບທີ່ເຂົາເຈົ້າຫຼິ້ນກິດຈະກຳແນະນຳຕົນເອງ) ແລກປ່ຽນຄວາມຫວັງທີ່ພວກເຂົາທີ່ພວກເຂົາເຈົ້າມີຕໍ່ການມາຝຶກອົບຮົມຄັ້ງນີ້ ແລະຄວາມກັງວົນທີ່ເຂົາເຈົ້າມີໃຫ້ກັນຟັງ(ແມ່ນຫຍັງຈະເປັນສິ່ງຢັບຢັ້ງການຮຽນຮູ້ຂອງທ່ານ ແລະ ຄວາມສາມາດໃນການເອົາບົດຮຽນຄັ້ງນີ້ໄປນຳໃຊ້.
6) ໃຫ້ພວກເຂົາສົນທະນາ, ເລືອກເອົາຄວາມຫວັງ ແລະ ຄວາມກັງວົນທີ່ສຳຄັນທີ່ສຸດຂອງພວກເຂົາ ແລະ ຂຽນລົງໃນເຈັ້ຍຕິດບັດຄຳ.
7) ຫຼັງຈາກນັ້ນ ໃຫ້ແຕ່ລະຄົນເອົາເຈັ້ຍບັດຄຳທີ່ມີຂໍ້ຄວາມກ່ຽວກັບ ຄວາມຫວັງ ແລະ ຄວາມກັງວົນມາຕິດໃສ່ເຈັ້ຍແຜ່ນໃຫຍ່ບ່ອນທີ່ຄູຝຶກໄດ້ກຽມເອົາໄວ້ແລ້ວ.
8) ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ ຢືນອ້ອມເຈັ້ຍຂາວແຜ່ນໃຫຍ່ (ແນະນຳໃຫ້ໝົດທຸກຄົນຢືນໃນມຸມທີ່ສາມາດເບິ່ງເຫັນເຈັ້ຍຂາວແຜ່ນໃຫຍ່ທີ່ຕິດໄວ້ຂ້າງຝາ).
9) ໃຫ້ຜູ້ເຂົ້າຮ່ວມຈັດເອົາເຈັ້ຍບັດຄຳອັນທີ່ມີຄວາມໝາຍຄ້າຍຄືກັນເຂົ້າເປັນກຸ່ມ ຄວາມຫວັງ ແລະ ຄວາມກັງວົນ. (ໃຫ້ຕົກລົງນຳກັນ ແລະ ກັນກ່ຽວກັບ 3 ຫຼື 4 ຢ່າງທີ່ເປັນຄວາມຫວັງທີ່ສຳຄັນທີ່ສຸດທີ່ພວກເຮົາສາມາດວັດແທກໄດ້ ແລະ ນຳໃຊ້ເພື່ອປະເມີນວ່າການຝຶກອົບຮົມນີ້ເປັນແນວໃດ, ພາຍໃນສອງມື້ນີ້) ຈາກນັ້ນ, ໃຫ້ສົນທະນາປຶກສາຫາລືກັນໃນກຸ່ມໃຫຍ່ ວ່າຄວນຈະເຮັດແນວໃດ ເພື່ອເພີ່ມຄວາມຫວັງໃຫ້ໄດ້ສູງສຸດ ແລະ ຫຼຸດຄວາມກັງວົນໃຫ້ເຫຼືອໜ້ອຍທີ່ສຸດ ເພື່ອເຮັດໃຫ້ພວກເຮົາສາມາດຮຽນໄດ້ດີ.
10) ຫຼັງຈາກ,ຜູ້ເຂົ້າຮ່ວມສົນທະນາກັນແລ້ວຜົນທີ່ໄດ້ຈາກສົນທະນາຈະຖືກເລືອກເອົາມາຂຽນເປັນວິທີແກ້ໄຂຄວາມກັງວົນ.
11) ຄູຝຶກສະຫຼຸບຜົນໄດ້ຮັບຈາການປະຕິບັດກິດຈະກຳດັ່ງກ່າວວ່າມີຄວາມສຳຄັນແນວໃດໂດຍອີງໃສ່ຄວາມໝາຍຂອງຄວາມຫວັງ, ຄວາມກັງວົນ ແລະ ວິທີການແກ້ໄຂຄວາມກັງວົນ ທີ່ທຸກຄົນໄດ້ກຳນົດຮ່ວມກັນໃນກຸ່ມໃຫຍ່. ພ້ອມທັງເຊື່ອມໂຍງໃສ່ຫົວຂໍ້ບົດຮຽນທີ່ຄູຝຶກໄດ້ອອກແບບຫຼັກສູດມາ ເພື່ອໃຫ້ຜູ້ເຂົ້າຮ່ວມໝັ້ນໃຈຕໍ່ກັບການຝຶກອົບຮົມຄັ້ງນີ້.
12) ໃຫ້ກຸ່ມກຳນົດກິດລະບຽບການຝຶກອົບຮົມ ແລະ ພະຍາຍາມໃຫ້ເປັນໃນຮູບແບບສັ້ນໆ ແລະ ກະທັດຫັດ, ຊຸກຍູ້ໃຫ້ຜູ້ເຂົ້າ
ຮ່ວມສຸມໃສ່ກິດລະບຽບທີ່ສຳຄັນທີ່ສຸດເທົ່ານັ້ນ. ກິດລະບຽບການຝຶກອົບຮົມທີ່ໄດ້ສ້າງຂຶ້ນ ຄວນຖືເປັນຫຼັກການ (ດີກວ່າ

ເປັນຂໍ້ບັງຄັບ ແບບລະບຽບການ) ເຊັ່ນວ່າ: ນັບຖືຊຶ່ງກັນ ແລະ ກັນ, ຄວາມມຸ່ງໝັ້ນໃນການຮຽນ, ການຢາກຮູ້ຢາກເຫັນ ແລະ ອື່ນໆ.(10 ນາທີ).

## ຄໍາແນະນໍາສໍາລັບຄູຝຶກ

1. ໃຫ້ຈື່ສໍາຄັນວ່າການຊ່ວຍໃຫ້ຜູ້ເຂົ້າຮ່ວມສັງລວມເອົາຄວາມຄິດຄ້າຍໆກັນເຂົ້າເປັນກຸ່ມດຽວ ວິທີນີ້ແມ່ນເອີ້ນວ່າ ການຈັດກຸ່ມຂໍ້ມູນ ແລະ ກໍເປັນເຄື່ອງມືໃຫ້ຄວາມສະດວກອັນໜຶ່ງເພື່ອຮັບປະກັນໃຫ້ປະເດັນທັງຫຼາຍມີຄວາມຈະແຈ້ງແລະຫຼີກລ່ຽງຄວາມສັບສົນທີ່ເກີດຂຶ້ນຈາກການມີຂໍ້ມູນຫຼາຍເກີນໄປ.ນອກນັ້ນ,ຍັງເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຫ້າວຫັນໃນການທວນຄືນຄໍາຄິດເຫັນຂອງທຸກຄົນ, ເພື່ອໃຫ້ເຂົາເຈົ້າວິເຄາະດ້ວຍຕົນເອງ.
2. ພວກເຮົາຕ້ອງການໃຫ້ຜູ້ເຂົ້າຮ່ວມເຂົ້າໃຈຈະແຈ້ງວ່າ ຄວາມສໍາເລັດເປັນຄືແນວໃດ, ເພື່ອວັດແທກຄວາມກ້າວໜ້າຂອງຜູ້ເຂົ້າຮ່ວມມີຫຼາຍສໍ່າໃດ? (ສາມາດຍົກຕົວຢ່າງປະກອບໄດ້) ເຮັດໃຫ້ພວກເຮົາສາມາດຕີລາຄາໄດ້ຢ່າງຊັດເຈນທັງຈາກສໍາເລັດການຝຶກອົບຮົມວ່າຜົນໄດ້ຮັບອອກມາເປັນທີ່ເພິ່ງພໍ ໃຈແລ້ວ ຫຼື ຕ້ອງມີການປັບປຸງຕື່ມ.
3. ພວກເຮົາຄວນຊຸກຍູ້ ຜູ້ເຂົ້າຮ່ວມໃຫ້ສາມາດຄົ້ນຄິດ ແລະ ວາງແບບແຜນການຮຽນຮູ້ຂອງເຂົາເຈົ້າເອງໃຫ້ມີປະສິທິພາບ, ດີກວ່າໃຫ້ເປັນພຽງແຕ່ຜູ້ຮັບຮູ້ເທົ່ານັ້ນ. ນີ້ແມ່ນອົງປະກອບສໍາຄັນທັງອັນໜຶ່ງຂອງການຮຽນຮູ້ທີ່ຫຼາກຫຼາຍ.
4. ຕ້ອງຮັບປະກັນໃຫ້ເອົາເຈັ້ຍແຜ່ນໃຫຍ່ທີ່ມີຂໍ້ມູນຄໍາວ່າຄວາມຫວັງ ແລະ ຄວາມຢ້ານກົວໄປຕິດຢູ່ຝາຫ້ອງ, ໃນບ່ອນທີ່ສາມາດເຮັດການທວນຄືນເນື້ອໃນດັ່ງກ່າວໄດ້ງ່າຍດາຍ,

## ພັກດື່ມນໍ້າຊາ ກາເຟ ແລະ ອາຫານວ່າງ



## ພາກທີ 6: ການຂຽນບັນທຶກ
## ເວລາ 30 ນາທີ



## ຈຸດປະສົງ

ເພື່ອແນະນໍາການບັນທຶກການຮຽນເປັນເຄື່ອງມືໃນການເປັນຜູ້ອໍານວຍຄວາມສະດວກ, ທີ່ຊຸກຍູ້ໃຫ້ມີການປະກອບຄໍາຄິດເຫັນ ແລະ ມີຄວາມກະຕືລືລົ້ນໃນການສະຫຼຸບບົດຮຽນ, ຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ມີຄວາມເປັນເຈົ້າການໃນການຮຽນຂອງພວກເຂົາເອງ ແລະ ສາມາດພິຈາລະນາເອົາບົດຮຽນໄປນໍາໃຊ້ໃນຕົວຈິງ.

## ວິທີການ

1) ແຈກຢາຍປຶ້ມບັນທຶກສ່ວນຕົວ ແລະ ແບບຟອມບັນທຶກການຮຽນຮູ້ປະຈໍາວັນ ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ.
2) ຄູຝຶກແນະນໍາໃຫ້ຜູ້ເຂົ້າຮ່ວມຂຽນຊື່ຂອງຕົນເອງໃສ່ໜ້າປົກປຶ້ມ, ເພາະວ່າປຶ້ມທີ່ແຈກຢາຍໃຫ້ຜູ້ເຂົ້າຮ່ວມສາມາດເກັບຮັກສາໄວ້ ເພື່ອນໍາໃຊ້ເຂົ້າໃນການຂຽນບັນທຶກໃນການຝຶກອົບຮົມອື່ນໆຂອງ LIFE.
3) ອະທິບາຍໃຫ້ເຫັນ ການຂຽນບັນທຶກສອງປະເພດນີ້ ວ່າເວລາໃດທີ່ຈະໃຊ້ປຶ້ມບັນທຶກເຫຼົ່ານີ້ ແລະ ຈະໃຊ້ແນວໃດ.
4) ຄູຝຶກອະທິບາຍໃຫ້ລະອຽດຈະແຈ້ງ ກ່ຽວກັບຄວາມແຕກຕ່າງລະຫວ່າງປຶ້ມບັນທຶກສ່ວນຕົວ ແມ່ນໃຫ້ຂຽນກ່ຽວກັບບົດຮຽນທີ່ຖອດຖອນໄດ້ຈາກການຝຶກອົບຮົມ (ຂຽນແລ້ວເກັບໄວ້ນໍາຕົນເອງ) ແລະ ແບບຟອມບັນທຶກການຮຽນຮູ້ປະຈໍາວັນ ແມ່ນມີຄໍາຖາມທົບທວນຄືນ ເພື່ອສະແດງໃຫ້ເຫັນເຖິງການປະເມີນຜົນຕົນເອງຂອງຜູ້ເຂົ້າຮ່ວມຕໍ່ກັບບົດຮຽນທີ່ສໍາຄັນໃນແຕ່ລະຫົວຂໍ້ (ຂຽນແລ້ວມື້ສຸດທ້າຍຂອງການຝຶກອົບຮົມແມ່ນໃຫ້ເອົາສົ່ງຄູຝຶກ).

## ຄໍາແນະນໍາສໍາລັບຄູຝຶກ

1. ມີປຶ້ມບັນທຶກ 2 ຫົວ - ຫົວໜຶ່ງແມ່ນປຶ້ມບັນທຶກສ່ວນຕົວໃຫ້ແກ່ຜູ້ເຂົ້າຮ່ວມເພື່ອບັນທຶກດ້ວຍຕົນເອງ, ອີກຫົວໜຶ່ງແມ່ນ "ແບບຟອມບັນທຶກຕະຫລອດການຝຶກອົບຮົມທີ່ໃຊ້ໃນຫຼັກສູດຂອງໂຄງການ LIFE ຊຶ່ງສາມາດເປັນສ່ວນໜຶ່ງຂອງລະບົບຕິດຕາມ ແລະ ປະເມີນຜົນຂອງໂຄງການ.
2. ໃຫ້ຜູ້ເຂົ້າຮ່ວມຄິດຫາສິ່ງທີ່ພວກເຂົາໄດ້ຮຽນມາກ່ຽວກັບການຮຽນຮູ້ທີ່ຫຼາກຫຼາຍ ແລະ ມັນຈະຊ່ວຍໃຫ້ພວກເຂົາກາຍເປັນຜູ້ອໍານວຍຄວາມສະດວກດ້ານການພັດທະນາທີ່ເຂັ້ມແຂງໄດ້ຄືແນວໃດ.
3. ເວລາແນະນໍາການຂຽນບັນທຶກ, ຕ້ອງຮັບປະກັນວ່າຜູ້ເຂົ້າຮ່ວມເຂົ້າໃຈເຖິງຈຸດປະສົງຂອງປຶ້ມບັນທຶກ ບາງຄົນອາດຈະບໍ່ມີຄວາມລຶ້ງເຄີຍກັບການຂຽນບັນທຶກໂດຍສ່ວນຕົວ. ໃຫ້ຜູ້ເຂົ້າຮ່ວມຂຽນຫຼືແຕ້ມຕາມສິ່ງທີ່ພວກເຂົາເຂົ້າໃຈໃນແຕ່ລະພາກ ຫຼື ໃນເວລາຝຶກຫັດ. ທ່ານອາດຈະໃຊ້ຄໍາຖາມເປີດເພື່ອກະຕຸ້ນການອອກຄໍາເຫັນ. ຜູ້ເຂົ້າຮ່ວມສາມາດໃຊ້ວິທີການແຕ້ມແຜນທີ່ຄວາມຄິດ, ສາຍນໍ້າແຫ່ງຊີວິດ, ສັນຍາລັກ, ຈິດພາຍເຖິງຕົວຂອງພວກເຂົາເອງ, ຫຼື ຂຽນແບບວິທີໃດກໍໄດ້ທີ່ພວກເຂົາຄິດວ່າເປັນວິທີທີ່ມີປະສິດທິພາບໃນການສື່ສານກັບຕົວພວກເຂົາເອງ.
4. ຕ້ອງໃຫ້ຜູ້ເຂົ້າຮ່ວມເຂົ້າໃຈກ່ຽວກັບຄວາມແຕກຕ່າງລະຫວ່າງການຂຽນບັນທຶກ (journal) ແລະ ການຂຽນບັນທຶກຊີວິດປະຈໍາວັນ (diary) - ການຂຽນບັນທຶກບໍ່ແມ່ນການບັນທຶກເຫດການ ແລະ ກໍບໍ່ແມ່ນສະຖານທີ່ສໍາລັບການຈົດບັນທຶກ. ມັນແມ່ນເຄື່ອງມືສໍາລັບການປະກອບຄໍາເຫັນ ແລະ ການຮຽນຮູ້.

**ເນັ້ນໜັກໃຫ້ເຫັນຄວາມເປັນສ່ວນຕົວຂອງການຂຽນບັນທຶກ ເພື່ອໃຫ້ເກີດສະມາທິຈິດຕໍ່ກັບສິ່ງທີ່ກໍາລັງຄິດ ແລະຂຽນ.**

# ພາກທີ 7: ທິດສະດີຄວາມຫຼາກຫຼາຍທາງດ້ານທັກສະການຮຽນຮູ້ທີ່ຫຼາກຫຼາຍ
# ເວລາ: 60 ນາທີ

## ຈຸດປະສົງ:

ເພື່ອສະທ້ອນຄືນປະສົບການຂອງພວກເຮົາທີ່ເປັນເຄີຍເປັນຜູ້ອຳນວຍຄວາມສະດວກ ແລະ ເຊື່ອມຕໍ່ສິ່ງນີ້ໃສ່ກັບບັນດາຫຼັກການຂອງການຮຽນຮູ້ທີ່ພວກເຮົາຈະນຳໃຊ້.

## ວິທີການ

1. ນຳສະເໜີບົດຮຽນນີ້ ແລະ ຈຸດປະສົງໂດຍຫຍໍ້, ເນັ້ນປະເດັນສຳຄັນທີ່ວ່າການກະກຽມພ້ອມເປັນຜູ້ອຳນວຍຄວາມສະດວກແມ່ນການອຳນວຍຄວາມສະດວກຫຼາຍກວ່າການສອນສະນັ້ນພວກເຮົາຈະໄດ້ມີການປະຕິບັດຕາມຫຼັກການໃນການໃຫ້ຄວາມສະດວກ ແລະ ຊອກຫາວິທີເຂົ້າໃຈ ແລະ ປຶກສາສິ່ງທີ່ພວກເຮົາຮູ້ກ່ຽວກັບການການເປັນຜູ້ອຳນວຍຄວາມສະດວກກ່ອນການຮຽນດ້ານທິດສະດີ
2. ແບ່ງຜູ້ເຂົ້າຮ່ວມເປັນ 4-6 ກຸ່ມ ແລະ ໃຫ້ກຳນົດບັນດາຫຼັກການ ການເປັນຜູ້ອຳນວຍຄວາມສະດວກ, ເຄື່ອງມື ຫຼື ວິທີການ ແລະ ຮູບແບບການຮຽນຮູ້ທີ່ຫຼາກຫຼາຍທີ່ພວກເຮົາໄດ້ນຳໃຊ້ໃນຊຸດຝຶກອົບຮົມນີ້. ພ້ອມທັງບອກພ້ອມວ່າທີ່ຜ່ານມາການນຳໃຊ້ບັນດາຫຼັກການເຫຼົ່ານັ້ນໄດ້ມີປະສິດທິຜົນແນວໃດເທົ່າ (15 ນາທີ).
3. ໃຫ້ຜູ້ເຂົ້າຮ່ວມຈັບຄູ່ (ຈາກກິດຈະກຳເຊື່ອມຕໍ່ກັນ) ແລະ ສົນທະນາຫາວິທີທີ່ແຕກຕ່າງຈາກສິ່ງທີ່ພວກເຂົາໄດ້ຮຽນມາແລ້ວຕາມປະສົບການຂອງເຂົາເຈົ້າ (10 ນາທີ).
4. ກັບຄືນໄປສູ່ກິດຈະກຳວົງມົນ ແລະ ການທວນຄືນບົດຮຽນທີ່ໄດ້ຮຽນມາໃນ ສອງ ກິດຈະກຳຝຶກຫັດ ແລະ ອອກຄຳເຫັນກ່ຽວກັບວິທີການຮຽນວິທີໃດທີ່ເອົາໄປນຳໃຊ້ໄດ້ສຳລັບເຂົາເຈົ້າ (15 ນາທີ).
5. ຫຼິ້ນເກມ EM3W ເພື່ອສະແດງໃຫ້ເຫັນວ່າຫຼາຍຄົນມີຫຼາຍຄວາມຄິດທີ່ແຕກຕ່າງກັນ, ພວກເຮົາແຕ່ລະຄົນມີວິທີການຮຽນຮູ້ໃນທິດທາງທີ່ແຕກຕ່າງກັນ(ຊຶ່ງຈະມີລາຍລະອຽດໃນທິດສະດີການຮຽນຮູ້ຂອງກາດເນີ)(10ນາທີ).
6. ຕັ້ງຄຳຖາມ: ຖ້າພວກເຮົາຮູ້ວິທີຜູ້ໃຫຍ່ຮຽນແລ້ວ, ເຮົາຈະຊ່ວຍໃຫ້ຄວາມສະດວກພວກເຂົາໃຫ້ຮຽນໄດ້ດີແນວໃດ?
7. ໃຫ້ແຕ່ລະຄົນສົນທະນາປະກອບຄຳເຫັນໃນກຸ່ມໃຫຍ່, ຈາກນັ້ນໃຫ້2-3ຄົນປະກອບຄຳເຫັນຕາງໜ້າກຸ່ມໃຫຍ່.
8. ຄູຝຶກ ສະຫຼຸບຫຍໍ້ໆ ໂດຍເອົາໃຈຄວາມສຳຄັນຫຼັກຂອງບັນດາບົດຮຽນ ແລະ ໃຫ້ແຕ່ລະຜູ້ເຂົ້າຮ່ວມສ່ອງແສງວ່າພວກເຂົາຈະນຳໃຊ້ສິ່ງທີ່ຮຽນຮູ້ໃນບົດຮຽນເຫຼົ່ານັ້ນແນວໃດ(ພວກເຂົາສາມາດຂຽນໃນປື້ມບັນທຶກການຮຽນ (10ນາທີ)

ຄູຝຶກສະຫຼຸບບົດຮຽນ ໂດຍເນັ້ນວ່າ: ພວກເຮົາ (ຜູ້ໃຫຍ່)ຈະຮຽນຮູ້ໄດ້ດີທີ່ສຸດໃນເວລາ:

1. ການຮຽນນັ້ນແມ່ນອີງຕາມປະສົບການຂອງແຕ່ລະຄົນ;
2. ການຮຽນຮູ້ນັ້ນແມ່ນສຸມໃສ່ເຫດການຕົວຈິງໃນຊີວິດ ບັນຫາທີ່ເກີດຂຶ້ນແທ້ ແລະ ອີງໃສ່ທິດສະດີ
3. ສາມາດກຳນົດວິທີຕ່າງໆໄດ້ດ້ວຍຕົວເອງ.

## ຄຳແນະນຳສຳລັບຄູຝຶກ

1. ຜູ້ເຂົ້າຮ່ວມ (ຊາວບ້ານ) ມີເບື້ອງຫຼັງ, ຄວາມຮູ້ ແລະ ປະສົບການທີ່ແຕກຕ່າງກັນ. ພວກເຂົາເຫັນສິ່ງຕ່າງໆໃນມຸມທີ່ແຕກຕ່າງກັນ (ຕົວຢ່າງຜູ້ຍິງມັກຈະມີຄວາມຕ້ອງການ ແລະ ຄວາມຄິດເຫັນທີ່ແຕກຕ່າງຈາກຜູ້ຊາຍ)
2. ພວກເຮົານຳໃຊ້ຮູບແບບການຮຽນໂດຍໃຫ້ຜູ້ຮຽນເປັນໃຈກາງ,ການຮຽນຮູ້ແມ່ນມາຈາກຜູ້ຮຽນ/ນັກຮຽນ/ຜູ້ເຂົ້າຮ່ວມເອງ. ສິ່ງນີ້ແມ່ນສິ່ງສຳຄັນສຳລັບຜູ້ໃຫຍ່, ຜູ້ທີ່ມີປະສົບການ ແລະ ຄວາມຮູ້ຫຼາຍແລ້ວ ແລະ ສ້າງໃຫ້ເກີດແຮງຜັກດັນໃຫ້ມີການຝຶກອົບຮົມທີ່ກົງກັບສິ່ງທີ່ພວກເຂົາຮູ້ມາກ່ອນແລ້ວ.

## ພາກທີ 8: ກິດຈະກຳຄຶງທ່ອນເຈັ້ຍ
## ເວລາ: 30 ນາທີ



### ຈຸດປະສົງ :

ເພື່ອສ້າງການຮຽນຮູ້ໃນຮູບແບບຮູບປະທຳ, ສະແດງໃຫ້ເຫັນວ່າກິດຈະກຳສ້າງຄວາມຄຶກຄື້ນກໍສາມາດເປັນບົດຮຽນ ແລະ ເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ສະທ້ອນເຫັນຮູບແບບການເປັນຜູ້ອຳນວຍຄວາມສະດວກໃນການຮຽນໃນແບບຂອງເຂົາເຈົ້າ

### ວິທີການ

1) ໃຫ້ແຕ່ລະຄົນຈັບຄູ່ກັນ ແລະ ເຮັດທ່ອນເຈັ້ຍເອງ ໂດຍເອົາເຈັ້ຍຂາວແຜ່ນໃຫຍ່ກໍ້ເຂົ້າກັນໃຫ້ເປັນທໍ່ໜັ້ນໆ.
2) ໃຫ້ທັງສອງຄົນ (ແຕ່ລະຄູ່) ຖືທ່ອນເຈັ້ຍຄົນລະສົ້ນໂດຍໃຫ້ໃຊ້ນີ້ວດຽວກົດແຕ່ລະສົ້ນເຂົ້າກັນ (ທ່ອນເຈັ້ຍຈະສາມາດຕັ້ງຊື່ໄດ້ກໍ່ຕໍ່ເມື່ອທັງສອງຄົນໃຊ້ແຮງກົດຢູ່ສົ້ນພ້ອມກັນ).
3) ຄູຝຶກອະທິບາຍຂັ້ນຕອນການຫຼິ້ນກິດຈະກຳ ພ້ອມທັງທົດລອງໄປພ້ອມໆກັບຜູ້ເຂົ້າຮ່ວມ, ປະຕິບັດຕາມແຕ່ລະຂັ້ນຕອນ ຄື:
    - ຂັ້ນຕອນທີ 1: ໃຫ້ຜູ້ໜຶ່ງເປັນຜູ້ນຳພາ.
    - ຂັ້ນຕອນທີ 2: ໃຫ້ຜູ້ຕາມເປັນຜູ້ນຳພາ.
    - ຂັ້ນຕອນທີ 3: ໃຫ້ທັງສອງເປັນຜູ້ນຳ ແລະ ຜູ້ຕາມ ໃນເວລາດຽວກັນ.
4) ເລີ່ມປະຕິບັດຕົວຈິງ: ທຳອິດ ໃຫ້ຜູ້ເຂົ້າຮ່ວມແຕ່ລະຄູ່ເຄື່ອນຍ້າຍທ່ອນເຈັ້ຍຊ້າໆ ແລະ ອ່ອນໂຍນ, ຈົນກວ່າພວກເຂົາມີຄວາມໝັ້ນໃຈ. ຈາກນັ້ນ, ພວກເຂົາສາມາດເຄື່ອນຍ້າຍຕົວພວກເຂົາເອງໄປອ້ອມໆຫ້ອງ. (ໃຫ້ຜູ້ໜຶ່ງຢູ່ໃນແຕ່ລະຄູ່ເປັນຜູ້ນຳພາທາງທີ່ຄວນຈະກົດທ່ອນເຈັ້ຍໄປທາງໃດ ແລະ ຈະໄປແນວໃດ, ແຕ່ຫ້າມເວົ້າ). ຫຼິ້ນເກມນີ້ປະມານ 10 ນາທີ ແລະ ໃຫ້ມີການປ່ຽນຜູ້ນຳພາເລື້ອຍໆກ່ອນຈະຈົບເກມ.
5) ພາຍຫຼັງກິດຈະກຳ, ໃຫ້ທຸກຄົນນັ່ງອ້ອມວົງມົນໃຫຍ່ ແລະ ສົນທະນາກ່ຽວກັບການສະທ້ອນຄວາມຄິດເຫັນ ແລະ ບົດຮຽນຂອງພວກເຂົາ. (ສ້າງຄຳຖາມກະທັດຮັດເພື່ອຊ່ວຍຜູ້ເຂົ້າຮ່ວມສາມາດເຊື່ອມຕໍ່ເກມນີ້ໄປເລື້ອຍໆ ເພື່ອຄວາມເຂົ້າໃຈດ້ານການຮຽນຮູ້ທີ່ຫຼາກຫຼາຍ).

### ຄຳຖາມສຳລັບການສະແດງຄວາມຄິດເຫັນ:

- ເຈົ້າຮູ້ສຶກແນວໃດໃນເວລາທີ່ເປັນຜູ້ນຳ, ເຈົ້ານຳພາແນວໃດເພື່ອເຮັດໃຫ້ຜູ້ຕາມສາມາດເຮັດຕາມໄດ້ງ່າຍດາຍ?
- ເຈົ້າຮູ້ສຶກແນວໃດເວລາເຈົ້າຖືກເປັນຄົນນຳຕາມ? ເວລາປ່ຽນບົດບາດນຳພາເຈົ້າຮູ້ສຶກແນວໃດ ແລະ ເຈົ້າຮັບມືກັບມັນແນວໃດ?
- ຫຼັງຈາກທີ່ຫຼິ້ນເກມນີ້ມັນໄດ້ຊ່ວຍໃຫ້ພວກທ່ານຮຽນຮູ້ຫຍັງເພີ່ມເຕີມແດ່?

6) ສຸດທ້າຍ ຄູຝຶກສະຫຼຸບ: ກິດຈະກຳຄຶງທ່ອນເຈັ້ຍ ແມ່ນມີເນື້ອໃນກ່ຽວກັບສາຍສຳພັນ, ການຕອບໂຕ້, ແລະການ

ເປັນຜູ້ນຳ, ມັນຊ່ວຍສ້າງໃຫ້ມີພື້ນທີ່ເປີດກ້ວາງໃນທີມຂອງຜູ້ເຂົ້າຮ່ວມ ແລະ ຊ່ວຍສ້າງທັກສະການສັງເກດການ ແລະ ການສື່ສານ.

7) ຈົບກິດຈະກຳໂດຍໃຫ້ຜູ້ເຂົ້າຮ່ວມຂຽນຂໍ້ມູນບາງອັນໃສ່ປື້ມບັນທຶກສ່ວນຕົວ,ພ້ອມທັງຕັ້ງຄຳຖາມສຸດທ້າຍເຊັ່ນ:
- ສາຍສຳພັນເຮົາເປັນແນວໃດ?
- ພວກເຮົາໄດ້ມີສ່ວນຮ່ວມນຳກັນ ແລະ ກັນ ໃນທາງທີ່ແຕກຕ່າງກັນບໍ່, ມັນເປັນສິ່ງທີ່ດີບໍ່?
- ບົດຮຽນໃດທີ່ພວກເຮົາບໍ່ເຂົ້າກັນ?

## ຄຳແນະນຳສຳລັບຄູຝຶກ

1. ໃນເວລາຫຼິ້ນແຕ່ລະຂັ້ນຕອນ ໃຫ້ຜູ້ເຂົ້າຮ່ວມຫຼິ້ນໄປປະມານ 1 ນາທີ ແລ້ວປ່ຽນກັນເປັນຜູ້ນຳ ຫຼື ຜູ້ຕາມ.
2. ໃນເວລາຫຼິ້ນເກມ, ໃຫ້ຢຸດການເຄື່ອນໄຫວໃນເກມ ແລະ ຖາມຄຳຖາມກັບຜູ້ເຂົ້າຮ່ວມເພື່ອຊ່ວຍພວກເຂົາໃຫ້ມີຄວາມຕື່ນຕົວ ແລະ ສະທ້ອນເຖິງບັນຍາກາດ ແລະ ບົດຮຽນທີ່ມີຢູ່ໃນເກມ. ແນະນຳຄວາມຄິດທີ່ເປັນ.
3. ສຽງພາຍໃນ ເພື່ອເຮັດໃຫ້ພວກເຂົາໄດ້ສະແດງຄວາມຮູ້ສຶກຂອງພວກເຂົາຖ້າບັນດາຜູ້ເຂົ້າຮ່ວມຕ້ອງການຄວາມຊ່ວຍເຫຼືອເລັກນ້ອຍກ່ຽວກັບບົດຮຽນຈາກການຝຶກກິດຈະກຳ, ທ່ານສາມາດໃຫ້ຄຳແນະນຳກະທັດຫັດໄດ້ໂດຍແນະນຳໃຫ້ພວກເຂົາຄິດຫາ: ຄວາມເປັນຜູ້ນຳ, ການປ່ຽນແປງ ແລະ ລະດັບການປ່ຽນແປງ, ຄວາມເປັນກັນເອງຄວາມຜ່ອນຄາຍສະບາຍໃຈ, ການສື່ສານ ແລະ ການຕອບໂຕ້.

## ພາກທີ 9: ທິດສະດີຄວາມຫຼາກຫຼາຍທາງປັນຍາຂອງກາດເນີ້
## ເວລາ: 75 ນາທີ




## ຈຸດປະສົງ:

ເພື່ອນຳສະເໜີທິດສະດີ ແລະ ພິຈາລະນາກ່ຽວກັບອົງປະກອບຕົວຈິງ ເພື່ອຊ່ວຍການຮຽນຮູ້ໃນຫຼາກຫຼາຍຮູບແບບຂອງຜູ້ເຂົ້າຮ່ວມ.

## ວິທີດຳເນີນ:

1) ແນະນຳກ່ຽວກັບທິດສະດີປັນຍາແບບຫລາກຫລາຍຂອງກາດເນີ້ (Gardners Multiple Intelligences).
2) ສົນທະນາລະຫວ່າງຜູ້ເຂົ້າຮ່ວມທີ່ນັ່ງອ້ອມເປັນວົງມົນໃຫຍ່.
3) ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນບັນທຶກວິທີທີ່ພວກເຂົາໄດ້ຮຽນຮູ້ຜ່ານຮູບພາບ, ການເຮັດວຽກເປັນທີມງານ, ການແຕ້ມຮູບການຫຼິ້ນເກມ, ສະແດງ ແລະ ອື່ນໆ ໃນຊີວິດປະຈຳວັນຂອງພວກເຂົາ, ວິທີໃດກໍໄດ້ທີ່ແຕກຕ່າງຈາກສິ່ງທີ່ມີຢູ່ໃນການສອນແບບເກົ່າ.(15 ນາທີ).

4) ໃຫ້ຜູ້ເຂົ້າຮ່ວມກຳນົດວິທີທີ່ພວກເຂົາມັກທີ່ຈະຮຽນທີ່ສຸດ (15 ນາທີ) ລວມທັງການສົນທະນາກ່ຽວກັບສິ່ງທີ່ພວກເຂົາໄດ້ຮຽນມາ).
5) ແບ່ງເປັນ 3 ກຸ່ມນ້ອຍເພື່ອກະກຽມ ແລະ ນຳສະເໜີແຜນການຝຶກອົບຮົມເພື່ອສະໜັບສະໜູນການຮຽນຮູ້ການເປັນຜູ້ອຳນວຍຄວາມສະດວກທີ່ສຸມໃສ່ຄວາມສະຫຼາດໃນຫຼາຍດ້ານ (10 ນາທີສຳລັບການກະກຽມ, 5 ນາທີຕໍ່ກຸ່ມສຳລັບການນຳສະເໜີ ແລະ 10 ນາທີ ສຳລັບການສົນທະນາ PMI).
6) ໃນເວລາແຕ່ລະກຸ່ມນຳສະເໜີ, ໃຫ້ກຸ່ມອື່ນເຮັດກິດຈະກຳ PMI (ນຳສະເໜີ ແລະ ອະທິບາຍ PMI)
7) ສະຫຼຸບລວມບົດຮຽນ ແລະ ຖາມຜູ້ເຂົ້າຮ່ວມວ່າ "ແລ້ວແນວໃດ" ເພື່ອຈົບກິດຈະກຳໃນພາກນີ້.

## ຄຳແນະນຳສຳລັບຄູຝຶກ

ທິດສະດີປັນຍາທີ່ຫລາກຫລາຍຂອງກາດເນີ້ (Gardners multiple intelligences)ສະແດງໃຫ້ເຮົາເຫັນວ່າຄົນເຮົາຮຽນຮູ້ໃນຫຼາຍແບບທີ່ແຕກຕ່າງກັນ ແລະ ຫຼັກສູດຂອງພວກເຮົາຕ້ອງການຕອບສະໜອງໂດຍການເປີດໂອກາດການຮຽນຮູ້ໃຫ້ເກີດຂຶ້ນໃນຫຼາຍຮູບແບບ ພວກເຮົາຕ້ອງການໃຫ້ທຸກຄົນຮຽນຮູ້ໃນຫຼາຍແບບທີ່ພວກເຂົາຮຽນໄດ້ເອງແບບເປັນທຳມະຊາດ ແລະ ມີປະສິດທິພາບຕໍ່ຕົວພວກເຂົາເອງ.

## ພາກທີ 10: ການຈຳແນກການຮຽນຮູ້ຕາມທິດສະດີຂອງບຣູມ
## ເວລາ: 45 ນາທີ




## ຈຸດປະສົງ

ເພື່ອແນະນຳເນື້ອໃນກ່ຽວກັບການຈຳແນກການຮຽນຮູ້ຕາມທິດສະດີຂອງບລູມ ແລະ ນຳໃຊ້ທິດສະດີດັ່ງກ່າວເພື່ອເນັ້ນໜັກໃຫ້ເຫັນວ່າ ຫຼັງຈາກຝຶກອົບຮົມຜູ້ເຂົ້າຮ່ວມແມ່ນຕ້ອງມີການພັດທະນາຫຼາຍກວ່າການຮຽນຮູ້ເພື່ອເຮັດໃຫ້ເກີດປະສິດທິຜົນ ແລະ ເປັນການຝຶກອົບຮົມທີ່ມີຄຸນນະພາບ.

## ວິທີການ

1) ອະທິບາຍທິດສະດີຂອງບຣູມ ໂດຍມີພາບບົດຮຽນປະກອບ ສາຍເທິງໜ້າເວທີ.
2) ແນະນຳການຈຳແນກການຮຽນຮູ້ຕາມທິດສະດີຂອງບູລມ, ໂດຍອະທິບາຍໄປແຕ່ລະຂັ້ນ, ໃຫ້ຜູ້ເຂົ້າຮ່ວມຍົກຕົວຢ່າງ ແລະ ອະທິບາຍແຕ່ລະຂັ້ນໝາຍຄວາມວ່າແນວໃດຕົວຢ່າງທີ່ຈະແຈ້ງວ່າແຕ່ລະຂັ້ນຈະເປັນແນວໃດໃນຮູບການຝຶກອົບຮົມຕົວຈິງ (ໃນນີ້ອາດຈະຍົກກິດຈະກຳໃດໜຶ່ງທີ່ເຮັດຮ່ວມກັບຊຸມຊົນຂຶ້ນມາເວົ້າເພື່ອໃຫ້ເຫັນພາບທີ່ຊັດເຈນຂຶ້ນ) ພິເສດແມ່ນໃຫ້ມີຄວາມກ່ຽວຂ້ອງກັບບົດຮຽນທີ່ຮຽນມາໃນມື້ນີ້ໃຫ້ຫຼາຍທີ່ສຸດ.

3) ສະຫຼຸບລວມບົດຮຽນຄືນວ່າ ເປັນຫຍັງພວກເຮົາຈຶ່ງຈຳເປັນຕ້ອງໃຫ້ແຜນວຽກທິດສະດີບູລມ ແລະ ກາດເນີ້ ເປັນສິ່ງທີ່ສຳຄັນທີ່ສຸດແມ່ນເພື່ອສ້າງຂະບວນການຮຽນຮູ້ໃນແບບຮຽນຮູ້ທີ່ຫຼາກຫຼາຍໃນການຝຶກອົບຮົມຂອງພວກເຮົາໃຫ້ມີປະສິດທິພາບຫຼາຍຂຶ້ນ. ດັ່ງຕົວຢ່າງຂອງແບບການສອນຜູ້ໃຫຍ່ ແລະ ການພັດທະນາ ແລະ ໃຫ້ແບ່ງມັນອອກເປັນຫຼັກການຮຽນຮູ້ທີ່ແຕກຕ່າງກັນ.
4) ຖາມຜູ້ເຂົ້າຮ່ວມວ່າ "ແລ້ວແນວໃດ" ໃນກຸ່ມວົງມົນໃຫຍ່ ເພື່ອສິ້ນສຸດຫົວຂໍ້ນີ້ພວກເຂົາຄິດວ່າຈະນຳໃຊ້ແຜນວຽກເຫຼົ່ານີ້ໄດ້ແນວໃດ.
5) ສຸດທ້າຍ, ໃຫ້ເວລາຜູ້ເຂົ້າຮ່ວມຈົດບັນທຶກ ເພື່ອໃຫ້ພວກເຂົາເກັບກຳບັນດາບົດຮຽນ ແລະ ວິທີຕ່າງໆ. ໃຫ້ຈື່ໄວ້ວ່າ,ໃນພາກຕໍ່ໄປ ແຜນທີ່ຄວາມຄິດ ຈະຊ່ວຍໃຫ້ເຂົາເຈົ້າສະຫຼຸບ ແລະ ຮວບຮວມຄວາມຄິດຂອງພວກເຂົາກ່ຽວກັບການສຶກສາແບບວິທີການທີ່ຫຼາກຫຼາຍ ແລະ ວິທີທີ່ພວກເຮົາສາມາດອຳນວຍຄວາມສະດວກໄດ້ດີ.

## ຄຳແນະນຳສຳລັບຄູຝຶກ

ອະທິບາຍກ່ຽວກັບການຈຳແນກການຮຽນຮູ້ຕາມທິດສະດີຂອງບລູມໃນແຕ່ລະຂັ້ນຊຶ່ງຊຶ່ງວ່າມີລາຍລະອຽດໃນອີກເບື້ອງໜຶ່ງຂອງບ່ອນໝາຍເຫດ ໃນບົດນຳສະເໜີພາວເວີພ້ອຍ.

(ລາຍລະອຽດທີ່ມາຈາກເວັບໄຊ໌ Wikipedia). ຄູຝຶກ ຄວນອະທິບາຍຄວາມໝາຍຂອງແຕ່ລະຂັ້ນ **ທິດສະດີການຈຳແນກການຮຽນຮູ້ຕາມທິດສະດີຂອງບຣູມ** ໂດຍອີງໃສ່ເນື້ອໃນດັ່ງລຸ່ມນີ້:

## ການຈື່ຈຳ

ການສະແດງໃຫ້ເຫັນຄວາມຈຳຂອງເນື້ອໃນຂອງສິ່ງທີ່ໄດ້ຮຽນຮູ້ມາໂດຍການລົ້ມຄືນຂໍ້ມູນຄວາມຈິງ, ຄຳສັບ, ແນວຄວາມຄິດພື້ນຖານ ແລະ ບັນດາຄຳຕອບ.

ຄວາມຮັບຮູ້ໃນສິ່ງໃດໜຶ່ງສະເພາະ, ຄຳສັບ, ຂໍ້ມູນຄວາມຈິງສະເພາະເຈາະຈົງຄວາມຮູ້ກ່ຽວກັບວິທີ ແລະ ເຄື່ອງມືໃນການແກ້ໄຂບັນຫາສະເພາະ,ການພົບປະສົນທະນາ,ທິດທາງ ແລະການຈັດລຽງລຳດັບ,ການຈັດໝວດໝູ່ ແລະ ປະເພດ, ເງື່ອນໄຂ, ວິທີການຄວາມຮູ້ທີ່ກ້ວາງຂວາງ ແລະ ສາມາດກັ່ນຕອງເອົາເນື້ອໃນໃນແຕ່ລະຫົວຂໍ້, ບັນດາຫຼັກການ ແລະ ແນວຄວາມຄິດໂດຍທົ່ວໄປ, ທິດສະດີ ແລະ ໂຄງຮ່າງ.

<u>ຄຳຖາມເຊັ່ນວ່າ:</u> ຜົນປະໂຫຍດດ້ານສຸຂະພາບຈາກການກິນໝາກແອັບເປີ້ນແມ່ນຫຍັງ?

## ຄວາມເຂົ້າໃຈ

ສະແດງໃຫ້ເຫັນຄວາມເຂົ້າໃຈກ່ຽວກັບບັນດາຂໍ້ມູນຄວາມຈິງແລະແນວຄວາມຄິດໂດຍການຈັດແຈງ,ສົມທຽບ, ແປ, ຕີຄວາມໝາຍ, ພັນລະນາ ແລະ ລະບຸບັນດາແນວຄວາມຄິດຫຼັກ.

- ການແປ
- ການຕີຄວາມໝາຍ
- ການຄາດຄະເນ

<u>ຄຳຖາມເຊັ່ນວ່າ:</u> ໃຫ້ປຽບທຽບຜົນປະໂຫຍດທາງດ້ານສຸຂະພາບລະຫວ່າງການກິນ ໝາກແອັບເປີ້ນກັບໝາກກ້ຽງ.

## ການນຳເອົາຄວາມຮູ້ໄປນຳໃຊ້

ການນຳໃຊ້ຄວາມຮູ້ທີ່ໄດ້ຮຽນຮູ້ມາເຂົ້າໃນການແກ້ໄຂບັນຫາໃນເຫດການໃໝ່ໆໂດຍນຳໃຊ້ຄວາມຮູ້ທີ່ໄດ້ຮຽນຮູ້ມາ,ຂໍ້ມູນຕົວຈິງ, ເຕັກນິກ ແລະ ຫລັກການໃນການແກ້ໄຂ.

<u>ຄຳຖາມເຊັ່ນວ່າ:</u> (ໝາກແອັບເປີ້ນ ສາມາດປ້ອງກັນພະຍາດທີ່ເກີດຂຶ້ນຍ້ອນການຂາດວິຕາມິນ C ໄດ້ບໍ່?

## ການວິເຄາະ

ຄິດ ແລະ ໄຈ້ແຍກບັນດາຂໍ້ມູນອອກເປັນຫລາຍສ່ວນໂດຍການລະບຸແຮງຈູງໃຈ ຫຼື ສາເຫດ. ສ້າງຂໍ້ສະຫຼຸບ ແລະ ຊອກຫາບັນດາຫຼັກຖານເພື່ອສົ່ງເສີມການຕີຄວາມໝາຍແບບກວມລວມ.

- ການວິເຄາະອົງປະກອບຕ່າງໆ
- ການວິເຄາະຄວາມສຳພັນ
- ການວິເຄາະບັນດາຫຼັກການຂອງການຈັດຕັ້ງ

<u>ຄຳຖາມເຊັ່ນວ່າ:</u> ຈົ່ງລະບຸ ສີ່ ວິທີໃນການເຮັດອາຫານໂດຍນຳໃຊ້ໝາກແອັບເປີ້ນ ແລະ ອະທິບາຍວ່າວິທີໃດມີຜົນປະໂຫຍດທາງດ້ານສຸຂະພາບຫຼາຍທີ່ສຸດ, ພ້ອມທັງໃຫ້ຂໍ້ມູນອ້າງອີງເພື່ອສະໜັບສະໜູນຄວາມຄິດຂອງທ່ານດ້ວຍ.

## ການປະເມີນ

ນຳສະເໜີ ແລະ ປ້ອງກັນບັນດາແນວຄວາມຄິດໂດຍຕັດສິນ-ຕີລາຄາຂໍ້ມູນ, ຄວາມຄິດທີ່ສາມາດນຳໃຊ້ໄດ້ ຫຼື ວຽກງານທີ່ມີຄຸນນະພາບໂດຍອີງໃສ່ເງື່ອນໄຂ ຊຸດໜຶ່ງ.

- ການຕັດສິນກ່ຽວກັບ ຫຼັກຖານພາຍໃນ
- ການຕັດສິນກ່ຽວກັບ ເງື່ອນໄຂພາຍນອກ

ຄຳຖາມເຊັ່ນວ່າ: ໝາກແອັບເປີ້ນປະເພດໃດແມ່ນເໝາະສົມທີ່ສຸດໃນການເຮັດເຂົ້າໜົມພາຍ (pie) ແລະ ຍ້ອນຫຍັງ?

## <u>ການປັບປຸງ ຫຼື ສ້າງຫຼັກການໃໝ່ (ການກັ່ນຕອງ)</u>

ສ້າງໂຄງຮ່າງ ຫຼື ແບບແຜນຈາກອົງປະກອບຫຼາຍໆອັນ; ອັນນີ້ ສາມາດໝາຍເຖິງການນຳພາກສ່ວນຕ່າງໆເຂົ້າມາໂຮມກັນເປັນອັນດຽວ (Omari 2006). ຮວບຮວມບັນດາຂໍ້ມູນເຂົ້າກັນດ້ວຍວິທີແຕກຕ່າງກັນໂດຍນຳເອົາອົງປະກອບເຂົ້າກັນເປັນແບບແຜນໃໝ່ ຫຼື ຂຶ້ນແຜນສ້າງວິທີການແກ້ໄຂ ໃໝ່

- ການສ້າງແບບສື່ສານທີ່ມີເອກະລັກຂອງມັນເອງ.
- ການສ້າງແຜນການ ຫຼື ຂຶ້ນແຜນລະບົບການປະຕິບັດງານ.

ແຫຼ່ງທີ່ມາຂອງລະບົບຄວາມສຳພັນທີ່ເປັນນາມປະທຳ.

ຄຳຖາມເຊັ່ນວ່າ: ຖ້າປ່ຽນວິທີເຮັດອາຫານແບບ "ບໍ່ດີຕໍ່ສຸຂະພາບ" ດ້ວຍເຂົ້າໜົມພາຍແອັບເປີ້ນ (Apple pie) ເປັນວິທີເຮັດອາຫານແບບ "ດີຕໍ່ສຸຂະພາບ" ໂດຍໃຫ້ທ່ານຕື່ມບັນດາສ່ວນປະສົມທີ່ທ່ານເລືອກເອງ. ຈົ່ງອະທິບາຍຜົນປະໂຫຍດດ້ານສຸຂະພາບຂອງບັນດາສ່ວນປະສົມທີ່ທ່ານເລືອກກັບສ່ວນປະສົມດັ້ງເດີມຂອງມັນ.

# ພາກທີ 11: ແຜນທີ່ແນວຄວາມຄິດຂອງທັກສະການຮຽນຮູ້ທີ່ຫຼາກຫຼາຍ
# ເວລາ: 40 ນາທີ

## ແຜນວາດແນວຄວາມຄິດ




## ຈຸດປະສົງ

ເພື່ອນຳສະເໜີແຜນທີ່ຄວາມຄິດ ເປັນເຄື່ອງມືໃນການຮຽນຮູ້ແບບສະຫລຽວສະຫຼາດຊຶ່ງສາມາດເຫັນພາບລວມທີ່ພວກເຮົາສາມາດເຮັດໄດ້ຜູ້ດຽວ (ສ້າງແນວຄວາມຄິດດ້ວຍຕົວເອງ) ຫຼື ແບບກິດຈະກຳເປັນທີມ (ສ້າງແນວຄວາມຄິດກັບຜູ້ຄົນອື່ນໆ).

ເພື່ອສະແດງຄຸນຄ່າຂອງກິດຈະກຳດັ່ງກ່າວໃນກຸ່ມນ້ອຍໃນການຮວບຮວມແນວຄວາມຄິດ ແລະ ສະຫຼຸບບົດຮຽນ ແລະ ການປະຍຸກໃຊ້ສິ່ງທີ່ພວກເຂົາໄດ້ຮຽນຮູ້ໃນວິທີທີ່ເຮັດໃຫ້ພວກເຂົາໄດ້ນຳໃຊ້ການຈຳແນກການຮຽນຮູ້ຕາມທິດສະດີຂອງບລູມ.

## ວິທີການ

1) ອະທິບາຍວ່າແຜນທີ່ຄວາມຄິດແມ່ນຫຍັງ?
2) ສະແດງແຜນທີ່ຄວາມຄິດທີ່ງ່າຍດາຍໃຫ້ເບິ່ງເປັນຕົວຢ່າງພ້ອມກັບການອະທິບາຍ ອົງປະກອບຂອງການສ້າງແຜນທີ່ແນວຄວາມຄິດ ເຊັ່ນ: ເນັ້ນການໃຊ້ຫຼາຍສີ, ຮູບ, ສັນຍາລັກ, ເສັ້ນ ຫຼື ຈຸດເຊື່ອມຕໍ່. ເພື່ອຊ່ວຍທຸກຄົນໃຫ້ເຫັນວ່າຕ້ອງລະບຸແບບສະເພາະເຈາະຈົງ ແລະ ຈາກນັ້ນນຳໃຊ້ທິດສະດີບລູມເພື່ອເຮັດການເຊື່ອມຕໍ່ ແລະ ຄິດຄຳນຶງຫາການປະຍຸກໃຊ້. (15 ນາທີ).
3) ແບ່ງກຸ່ມນ້ອຍປະມານ 3 ຫຼື 4 ກຸ່ມ ແລະ ໃຫ້ພວກເຂົາສ້າງແຜນທີ່ຄວາມຄິດ ນຳໃຊ້ບັນດາສັນຍາລັກ ແລະ ຮູບພາບ ເພື່ອຊ່ວຍສື່ສານບັນດາຄວາມຄິດເຫັນ ແລະ ນຳໃຊ້ການແຕ້ມເສັ້ນ, ສີ, ລູກສອນ, ກ້ານໄມ້ ຫຼື ວິທີອື່ນທີ່ສະແດງໃຫ້ເຫັນຄວາມກ່ຽວພັນກັນລະຫວ່າງແນວຄວາມຄິດທີ່ຢູ່ໃນແຜນທີ່ຄວາມຄິດດັ່ງກ່າວ. (25 ນາທີ ໃຫ້ວາງສະແດງແຜນທີ່ຄວາມຄິດແລ້ວຢ່າງອ້ອມ ( 5 ນາທີ )

## ຄຳແນະນຳສຳລັບຄູຝຶກ

1. ຄຳນິຍາມ ເພື່ອອະທິບາຍວ່າ ແຜນທີ່ຄວາມຄິດ ແມ່ນແຜນຜັງທີ່ໃຊ້ເພື່ອສະແດງໃຫ້ເຫັນບັນດາແນວຄວາມຄິດ,ປະເດັນ, ເຫດການ, ບັນຫາ ແລະ ອື່ນໆທີ່ມີຄວາມເຊື່ອມຕໍ່ໃສ່ກັບແນວຄວາມຄິດທີ່ເປັນໃຈກາງຫຼັກ. ມັນເຄີຍຖືກນຳໃຊ້ເພື່ອສ້າງພາບສະແດງທີ່ເຊື່ອມຕໍ່ບັນດາບົດຮຽນໃນແຕ່ລະຫົວຂໍ້ເຂົ້າກັນ ແລະ ເປັນເຄື່ອງຊ່ວຍໃນການຈັດລະບຽບ, ຈັດປະເພດ, ແກ້ໄຂ ແລະ ຕັດສິນບັນຫາ. ມັນຈະຊ່ວຍໃຫ້ພວກເຮົາສາມາດທວນຄືນ ແລະ ຮວບຮວມບັນດາແນວຄວາມຄິດຈາກໝົດມື້ນັ້ນໆ. ມັນເປັນຫຼາຍກວ່າກິດຈະກຳລະບຸຫາສິ່ງທີ່ໄດ້ເຮັດມາຊຶ່ງຊຶ່ງເປັນສິ່ງທີ່ພວກເຮົາຄວນສຸມໃສ່,ຊຶ່ງໂດຍສະເພາະແມ່ນບົດຮຽນທີ່ພວກເຮົາໄດ້ຮຽນມາມີຫຍັງແດ່, ແລະ ພວກເຮົາຈະນຳໃຊ້ມັນໄດ້ແນວໃດ.
2. ແຜນທີ່ຄວາມຄິດ ຊ່ວຍໃຫ້ຜູ້ນຳໃຊ້ສາມາດກຳນົດຄວາມເຊື່ອມຕໍ່ຂອງແຕ່ລະຢ່າງ, ນຳໃຊ້ ແລະ ຈື່ຈຳໄດ້ງ່າຍດາຍ.
3. ໃຫ້ບອກຜູ້ເຂົ້າຮ່ວມວ່າພວກເຮົາຢາກເຫັນການເຮັດວຽກເປັນທີມງານທີ່ດີ (ທຸກໆຄົນຄວນມີສ່ວນຮ່ວມໃນການສົນທະນາ ແລະ ແຕ້ມ/ຂຽນ).
4. ຄູຝຶກ ຕ້ອງຫຼີກລ້ຽງການລົ້ມຄືນສິ່ງທີ່ບໍ່ຈຳເປັນ.

## ພາກທີ 12: ວຽກບ້ານກ່ຽວກັບການເປັນຜູ້ນຳ
## ເວລາ: 10 ນາທີ

## ຈຸດປະສົງ

ເຮັດໃຫ້ສະພາບຫ້ອງຝຶກອົບຮົມເປັນ ບ່ອນສົ່ງເສີມການມີສ່ວນຮ່ວມແບບກະຕືລືລົ້ນ ແລະ ສົ່ງເສີມການຮຽນ ແລະ ສາມາດຈື່ຈຳຄືນບົດຮຽນໄດ້.

## ວິທີການ

1) ເລືອກເຈ້ຍແຜ່ນໃຫຍ່ທີ່ສະແດງໃຫ້ເຫັນບົດຮຽນໃນມື້ທີ 1 ແລະ ນຳເຈ້ຍດັ່ງກ່າວຕິດໃສ່ຝາ, ຊຶ່ງຈະເຮັດໃຫ້ຜູ້ເຂົ້າຮ່ວມຈື່ໄດ້ບັນດາເນື້ອໃນທີ່ຮຽນໃນມື້ອື່ນ. ຖ້າເຫັນວ່າສຳຄັນ, ແມ່ນໃຫ້ຕື່ມຄຳສັບທີ່ເປັນຄຳສັບຫຼັກ ແລະ ເຄື່ອງໝາຍທີ່ສຳຄັນໃສ່ເພື່ອເພີ່ມໃຫ້ການແນະນຳ ແລະ ສະແດງຄວາມຄິດເຫັນສຳລັບກິດຈະກຳໃນມື້ນັ້ນ.
2) ຮັບປະກັນວ່າຫ້ອງທີ່ນຳໃຊ້ແມ່ນເບິ່ງຄືເປັນລະບຽບ, ບໍ່ໃຫ້ມີສິ່ງຮົກເຮື້ອ, ມີຫລາຍສິ່ງທີ່ເຫັນໄດ້ ເພື່ອໃຫ້ຈື່ວຽກພວກເຮົາໄດ້ເຮັດໃນມື້ນີ້ ແລະ ໃຫ້ມີສະພາບແວດລ້ອມການຮຽນຮູ້ທີ່ດີຊຶ່ງເຮັດໃຫ້ມີຄວາມພ້ອມສຳລັບມື້ຕໍ່ໄປ.
3) ໃນຕອນສຸດທ້າຍຂອງມື້ນີ້ໃຫ້ມີການທວນຄືນເນື້ອໃນວຽກທີ່ໄດ້ເຮັດໃນກຸ່ມນ້ອຍ ແລະ ສິ່ງທີ່ໄດ້ຮຽນຮູ້ມາໃນມື້ນີ້.

# ວາລະຝຶກອົບຮົມມື້ທີສອງ

| ມື້ທີ 1 | ມື້ທີ 2 |
|---|---|
| ການແນະນຳ, ປ້າຍຊື່, ການຮຽນຮູ້ຊື່ຊຶ່ງກັນ ແລະ ກັນ, ອ້ອມເປັນວົງມົນ, ຫຼິ້ນເກມ ແລະ ໃຫ້ມີຄວາມຮູ້ສຶກເປັນກັນເອງ. | ທວນຄືນບົດຮຽນມື້ທີ 1,ພວກເຮົາໄດ້ບັນລຸຈຸດປະສົງຂອງພວກເຮົາຮອດໃສແລ້ວ, ແນະນຳຕາຕະລາງຂອງມື້ນີ້ |
| ແນະນຳກ່ຽວກັບຫຼັກສູດ, ກິດຈະກຳການວັດແທກລະດັບຕົວເອງ, ຄວາມຫວັງ ແລະ ຂໍ້ກັງວົນ, ເປົ້າໝາຍ ແລະ ກົດລະບຽບພື້ນຖານ | ກິດຈະກຳຄຶງຫ່ອນເຈັ້ຍ |
| ການຈົດບັນທຶກ | ການທົບທວນບັນດາບົດຮຽນ,<br>ກິດຈະກຳກ່ຽວກັບຫົວ, ຫົວໃຈ ແລະ ມືຂອງຜູ້ອຳນວຍຄວາມສະດວກ,ຕາຕະລາງຂອງຫຼັກສູດ |
| ການຮຽນທີ່ຫຼາກຫຼາຍ | ວົງຈອນຄວາມຄິດສ້າງສັນ |
| ພັກຮັບປະທານອາຫານທ່ຽງ | ພັກຮັບປະທານອາຫານທ່ຽງ |
| ກິດຈະກຳສ້າງຄວາມມ່ວນຊື່ນ, ກິດຈະກຳຄຶງຫ່ອນເຈັ້ຍ | ກິດຈະກຳສ້າງຄວາມມ່ວນຊື່ນ, ຫຼິ້ນເກມ |
| ທິດສະດີຄວາມຫຼາກຫລາຍທາງດ້ານປັນຍາແບບຂອງກາດເນີ(Gardners Multiple Intelligences) | ທົບທວນກ່ຽວກັບອຸປະກອນຂອງຜູ້ອຳນວຍຄວາມສະດວກຂອງພວກເຮົາ |
| ການຈຳແນກທາງດ້ານຄວາມຮູ້ຕາມທິດສະດີຂອງບລູມ (Blooms Taxonomy) | ສາຍນ້ຳຂອງຫຼັກສູດນີ້,<br>ແຜນທີ່ແນວຄວາມຄິດ |
| ແຜນທີ່ແນວຄວາມຄິດ,<br>ການຮຽນຮູ້ທີ່ຫຼາກຫຼາຍ | ເປົ້າໝາຍແບບ SMART |

## ພາກທີ 13: ກິດຈະກຳຄັງຫ່ອນເຈັ້ຍ
## ເວລາ: 25 ນາທີ



### ຈຸດປະສົງ:
ເພື່ອສະແດງໃຫ້ເຫັນວ່າເຮົາສາມາດປັບໃຊ້ເກມຫ່ອນເຈັ້ຍເພື່ອສ້າງຜົນໄດ້ຮັບທາງການຮຽນທີ່ແຕກຕ່າງກັນ.

### ວິທີການ:
1) ບອກຜູ້ເຂົ້າຮ່ວມວ່າມື້ວານນີ້ພວກເຮົາໄດ້ນຳພາຫຼິ້ນກິດຈະກຳນີ້ໄປແລ້ວ. ມື້ນີ້ເຮົາຈະມາຫຼິ້ນອີກ, ແຕ່ໃຫ້ເນັ້ນຄວາມມິດງຽບ, ເປັນຂະບວນການທີ່ເປັນໃຈກາງຫຼາຍກວ່າມື້ວານນີ້.
2) ໃຫ້ຕາງໜ້າຜູ້ເຂົ້າຮ່ວມເປັນຜູ້ນຳພາຫຼິ້ນເກມ, ໂດຍການອະທິບາຍຂັ້ນຕອນການຫຼິ້ນເກມຄືດັ່ງຄູຝຶກເຄີຍນຳພາ ແລະ ເນັ້ນໜັກໃຫ້ຮູ້ວ່າພວກເຮົາຕ້ອງການສຸມໃສ່ຄຸນນະພາບ, ສະນັ້ນພວກເຮົາຈະເຮັດກິດຈະກຳນີ້ແບບຊ້າໆ, ພ້ອມກັບຄວາມເອົາໃຈໃສ່ກັບລາຍລະອຽດ. ຄຸນນະພາບຂອງກິດຈະກຳນີ້ແມ່ນການມີສະມາທິ ແລະ ສະຕິສູງ. ອອກຄຳສັ່ງໃຫ້ທຸກຄົນປະຕິບັດຕາມຂັ້ນຕອນດັ່ງນີ້:
   - ຂັ້ນຕອນທີ 1: ໃຫ້ຜູ້ໜຶ່ງເປັນຜູ້ນຳພາ.
   - ຂັ້ນຕອນທີ 2: ໃຫ້ຜູ້ຕາມເປັນຜູ້ນຳພາ.
   - ຂັ້ນຕອນທີ 3: ໃຫ້ທັງສອງເປັນຜູ້ນຳ ແລະ ຜູ້ຕາມ ໃນເວລາດຽວກັນ.
3) ຫຼັງຈາກ 2-3 ນາທີຜ່ານໄປ, ໃຫ້ປ່ຽນໜ້າທີ່ຜູ້ນຳພາເລື້ອຍໆກ່ອນຈະຈົບເກມ (10 ນາທີ). ພາຍຫຼັງກິດຈະກຳ, ໃຫ້ທຸກຄົນ

ນັ່ງອ້ອມວົງມົນໃຫຍ່ ແລະ ນຳພາສົນທະນາກ່ຽວກັບການສະທ້ອນຄວາມຄິດເຫັນ ແລະ ບົດຮຽນຂອງພວກເຂົາ. (ສ້າງຄຳຖາມກະທັດຮັດເພື່ອຊ່ວຍຜູ້ເຂົ້າຮ່ວມສາມາດເຊື່ອມຕໍ່ເກມນີ້ໄປເລື້ອຍໆ ເພື່ອຄວາມເຂົ້າໃຈດ້ານການຮຽນຮູ້ທີ່ຫຼາກຫຼາຍ

### ຄຳຖາມສຳລັບການສະແດງຄວາມຄິດເຫັນ:
- ເຈົ້າຮູ້ສຶກແນວໃດໃນເວລາທີ່ເປັນຜູ້ນຳ, ເຈົ້ານຳພາແນວໃດເພື່ອເຮັດໃຫ້ຜູ້ຕາມສາມາດເຮັດຕາມໄດ້ງ່າຍດາຍ?
- ເຈົ້າຮູ້ສຶກແນວໃດເວລາເຈົ້າຖືກເປັນຄົນນຳຕາມ? ເວລາປ່ຽນບົດບາດນຳພາເຈົ້າຮູ້ສຶກແນວໃດ ແລະ ເຈົ້າຮັບມືກັບມັນແນວໃດ?

ຫຼັງຈາກທີ່ຫຼິ້ນເກມນີ້ມັນໄດ້ຊ່ວຍໃຫ້ພວກທ່ານຮຽນຮູ້ຫຍັງເພີ່ມເຕີມແດ່?

### ຄຳແນະນຳສຳລັບຄູຝຶກ
1. ໃນເວລາຫຼິ້ນເກມ, ໃຫ້ຢຸດການເຄື່ອນໄຫວໃນເກມ ແລະ ຖາມຄຳຖາມກັບຜູ້ເຂົ້າຮ່ວມເພື່ອຊ່ວຍພວກເຂົາໃຫ້ມີຄວາມຕື່ນຕົວ ແລະ ສະທ້ອນເຖິງບັນຍາກາດ ແລະ ບົດຮຽນທີ່ມີຢູ່ໃນເກມ. ແນະນຳຄວາມຄິດທີ່ເປັນສຽງພາຍໃນຄວາມຮູ້ສຶກ, ເພື່ອເຮັດໃຫ້ພວກເຂົາໄດ້ສະແດງຄວາມຮູ້ສຶກຂອງພວກເຂົາ.
2. ສຸມໃສ່ການສົນທະນາກ່ຽວກັບຄຸນນະພາບ, ວິທີທີ່ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຄິດແບບສະເພາະເຈາະຈົງ, ມີລາຍລະອຽດ, ຕັ້ງໃຈ - ແລະ ສິ່ງດັ່ງກ່າວມີຜົນກະທົບຕໍ່ການຮຽນຮູ້ຄືແນວໃດ.
3. ນອກນັ້ນ, ສົນທະນາກ່ຽວກັບຄຸນນະພາບຂອງການເປັນໃຈກາງ, ການເລີ່ມຕົ້ນມື້ນັ້ນໆດ້ວຍການກະກຽມທີ່ດີ ມິດງຽບ, ທີ່ພ້ອມ ແລະ ມີຄວາມຕັ້ງໃຈໃນການເຮັດວຽກ.

4. ສຸດທ້າຍ, ສົນທະນາຫາວິທີທີ່ທ່ານຕ້ອງໄດ້ເຮັດວຽກຮ່ວມກັນ, ຕອບສະໜອງ ແລະ ຮັບຟັງຊຶ່ງຊຶ່ງກັນ ແລະກັນເພື່ອສ້າງ ເກມນີ້ໃຫ້ດີ - ສິ່ງນີ້ມີຜົນກະທົບຕໍ່ວິທີການຮຽນຮູ້ຊຶ່ງຊຶ່ງກັນ ແລະ ກັນແນວໃດໃນມື້ນີ້?

## ພາກທີ 14: ທັກສະການສ້າງພື້ນທີ່ການຮຽນຮູ້
## ເວລາ: 45 ນາທີ



## ຈຸດປະສົງ

ເພື່ອສ້າງ ແລະ ຊ່ວຍໃຫ້ຜູ້ເຂົ້າຮ່ວມເຫັນວ່າຫ້ອງຝຶກອົບຮົມສາມາດສ້າງສະພາບແວດລ້ອມການຮຽນທີ່ດີໄດ້ ແລະ ໃຫ້ເຫັນວ່າສະພາບແວດລ້ອມສາມາດສົ່ງຜົນທີ່ແຕກຕ່າງໃນການຮຽນຮູ້ໄດ້ຄືແນວໃດ.

## ວິທີການ

1) ໃຫ້ຜູ້ເຂົ້າຮ່ວມສັງເກດເບິ່ງອ້ອມໆຫ້ອງ ແລະ ໃຫ້ພວກເຂົາເຮັດ PMI ໃນຫ້ອງນີ້ເປັນພື້ນທີ່ການຮຽນຮູ້.
2) ໃຫ້ຜູ້ເຂົ້າຮ່ວມຕີລາຄາພື້ນທີ່ດັ່ງກ່າວໃນແງ່ຂອງທິດສະດີປັນຍາແບບຫຼາກຫຼາຍຂອງກາດເນີ້, ມັນນຳໃຊ້ການຮຽນຮູ້ໃນຫຼາຍວິທີໄດ້ແນວໃດ,ໃນແງ່ຂອງທິດສະດີບລູມມີອັນໃດເຮັດໃຫ້ເຮົາສາມາດນຳໃຊ້ເຖິງຂັ້ນປະຍຸກໃຊ້, ວິເຄາະ ແລະ ການສັງເຄາະ.
3) ຖາມຜູ້ເຂົ້າຮ່ວມວ່າຫ້ອງນັ້ນເຮັດໃຫ້ເຂົາເຈົ້າຮູ້ສຶກແນວໃດ?
4) ໃຫ້ຍ່າງອ້ອມການວາງສະແດງຜົນງານ PMI ແລະ ນັ່ງອ້ອມວົງມົນ.
5) ກຳນົດວິທີກະກຽມຫ້ອງໃຫ້ເປັນຫ້ອງທີ່ມີຜົນດີຕໍ່ການຮຽນຮູ້. ເພື່ອສົນທະນານຳກັນໂດຍຫຍໍ້.
6) ຖາມຜູ້ເຂົ້າຮ່ວມ "ແລ້ວເປັນແນວໃດ?" ພວກເຂົາຈະນຳໃຊ້ສິ່ງທີ່ຮຽນຮູ້ໃນການຝຶກອົບຮົມແນວໃດ?
   - ພວກເຮົາຈະນຳໃຊ້ສິ່ງນີ້ໃນຫ້ອງການລັດຖະບານຂັ້ນບ້ານ ຫຼື ຂັ້ນເມືອງແນວໃດ?
7) ສຳເລັດກິດຈະກຳໂດຍໃຫ້ເວລາ 5 ນາທີ ເພື່ອໃຫ້ຜູ້ເຂົ້າຮ່ວມຂຽນບັນທຶກການສະທ້ອນຄວາມຄິດເຫັນ ແລະ ສິ່ງທີ່
   ເປັນບົດຮຽນສຳຄັນສຳລັບຜູ້ເຂົ້າຮ່ວມ.

# ພາກທີ 15: ທວນຄືນມື້ທີ 1
# ເວລາ: 60 ນາທີ

## ຈຸດປະສົງ:

- ເພື່ອທົບທວນບົດຮຽນໃນມື້ທີ 1 ແລະ ການນໍາເອົາບົດຮຽນເຫຼົ່ານັ້ນມາກໍານົດຫາຄວາມສາມາດຫຼັກຂອງການເປັນຜູ້ອໍານວຍຄວາມສະດວກ.
- ເພື່ອແນະນໍາໃຫ້ຮູ້ຈັກແຜນວາດຂອງຫົວ, ຫົວໃຈ ແລະ ມື ເປັນວິທີໃນການພິຈາລະນາຄວາມສາມາດຂອງຜູ້ທີ່ຈະເປັນຜູ້ອໍານວຍຄວາມສະດວກ.

## ວິທີດໍາເນີນ:

1) ສົນທະນາກັບຜູ້ເຂົ້າຮ່ວມກ່ຽວກັບທັກສະຄວາມສາມາດ ໃນການຂັບລົດຈັກໄດ້ແນວໃດ. ຍົກຕົວຢ່າງໃຫ້ເຫັນວ່າ: ພວກເຂົາຕ້ອງມີຄວາມຮູ້ດ້ານໃດແດ່ ເຊັ່ນ: ປ້າຍທົນທາງ, ກົດຈາລະຈອນ), ທັກສະ (ຮັກສາຄວາມຄົງທີ່, ປຸ່ມເກຍ) ແລະ ທັດສະນະຄະຕິ (ປະຕິບັດຕາມກົດໝາຍ, ໃຈເຢັນ, ລະມັດລະວັງ).
2) ເຊື່ອມຕໍ່ບົດຮຽນນີ້ໃສ່ ຫົວ, ຫົວໃຈ ແລະ ມືຂອງພວກເຂົາໃນແງ່ຂອງແຜນວາດແບບມີຄວາມສາມາດ.
3) ໃຫ້ຜູ້ເຂົ້າຮ່ວມຄິດຫາສິ່ງທີ່ໄດ້ຮຽນໃນມື້ວານນີ້ ແລະ ລະດົມສະໝອງປະມານ 2 ຫາ 3 ນາທີກ່ຽວກັບຄຸນສົມບັດຄວາມສາມາດ, ຫົວ, ຫົວໃຈ ແລະ ມືຂອງການເປັນຄູຝຶກທີ່ດີ.
4) ດໍາເນີນກິດຈະກໍານີ້ແບບຫຍໍ້ໆ, ພຽງແຕ່ໃຫ້ສ້າງບາງຕົວຢ່າງ ແລະ ເຮັດໃຫ້ທຸກຄົນມີຄວາມໝັ້ນໃຈວ່າພວກເຂົາມີຄໍາຕອບທີ່ຖືກຕ້ອງ ໂດຍຂຽນບາງຕົວຢ່າງລົງໃນເຈ້ຍແຜ່ນໃຫຍ່ ເພື່ອໃຫ້ທຸກຄົນສາມາດເບິ່ງເຫັນ. (ໃຫ້ເບິ່ງນິຍາມຢູ່ຄໍາແນະນໍາສໍາລັບຄູຝຶກ).
5) ແບ່ງຜູ້ເຂົ້າຮ່ວມອອກເປັນ 3 ກຸ່ມນ້ອຍ ແລະ ໃຫ້ພວກເຂົາໃຊ້ເວລາປະມານ 25 ນາທີ.
6) ກ່ອນອື່ນໝົດໃຫ້ພວກເຂົາສ້າງໝວດລາຍການຫົວ, ຫົວໃຈ ແລະ ມືຂອງການເປັນຜູ້ອໍານວຍຄວາມສະດວກທີ່ດີທີ່ດີ. ຈາກນັ້ນສ້າງໝວດລາຍການນີ້ລະບຸໃນການແຕ້ມເປັນຮູບພາບຮ່າງກາຍມະນຸດ (ເບິ່ງຕົວຢ່າງໃນບົດນໍາສະເໜີພາວເວີພອຍ)
7) ໃຫ້ຜູ້ເຂົ້າຮ່ວມ ຍ່າງອ້ອມການວາງສະແດງຜົນໄດ້ຮັບ ແລະ ຄູຝຶກຕັ້ງຄໍາຖາມທີ່ກ່ຽວຂ້ອງກັບຄຸນສົມບັດທີ່ຫຼາກຫຼາຍຂອງການເປັນຄູຝຶກ, ພ້ອມທັງເຄື່ອງມືທີ່ພວກເຂົາຈະນໍາໃຊ້ໃນບົດຮຽນທີ່ໄດ້ຮຽນມາໃນຫຼັກສູດນີ້.
8) ໃຫ້ເວລາຜູ້ເຂົ້າຮ່ວມ 10 ນາທີ ໃນການສະທ້ອນຄືນຄວາມຮູ້ສຶກ ແລະ ບັນທຶກ "ອັນໃດແມ່ນຈຸດແຂງ ແລະ ຈຸດອ່ອນຂອງຫົວ, ຫົວໃຈ ແລະ ມື" ໂດຍໃຫ້ຜູ້ເຂົ້າຮ່ວມຖາມຕົນເອງ: ຂ້ອຍຕ້ອງເຮັດແນວໃດເພື່ອໃຫ້ກາຍເປັນຄູເຝິກທີ່ດີຂຶ້ນອີກ.
9) ສຸດທ້າຍໃຫ້ຜູ້ເຂົ້າຮ່ວມນັ່ງອ້ອມເປັນວົງມົນ, ເປີດໂອກາດໃຫ້ແຕ່ລະຄົນໄດ້ແລກປ່ຽນຄໍາຄິດເຫັນກ່ຽວກັບບົດຮຽນ ແລະ ການປະຍຸກໃຊ້ບົດຮຽນຂອງເຂົາເຈົ້າ.

## ຄໍາແນະນໍາສໍາລັບຄູຝຶກ

ສໍາລັບການອະທິບາຍແຜນວາດຂອງຫົວ, ຫົວໃຈ ແລະ ມື. ນີ້ແມ່ນແຜນວາດທີ່ໃຫ້ເບິ່ງເຫັນ ເຖິງຄວາມແຕກຕ່າງຂອງຄວາມສາມາດໃນຫຼາຍອົງປະກອບ ຄື:

- ຫົວ ເຮັດໜ້າທີ່ເປັນຜູ້ຊີ້ນໍາໃນການເກັບກໍາຄວາມຮູ້, ຂໍ້ມູນ ແລະ ຂໍ້ມູນສະເພາະ ຫຼື ຄວາມຮູ້ຮອບຄອບ.
- ຫົວໃຈ ເຮັດໜ້າທີ່ເປັນຜູ້ຊີ້ນໍາຮວບຮວມເອົາຄວາມຮູ້ສຶກ, ທັດສະນະຄະຕິ ແລະ ທັກສະທາງສັງຄົມ ຫຼື ທັກສະ "ອ່ອນໂຍນ".
- ມື ເຮັດໜ້າທີ່ນໍາພາການເກັບກໍາຄວາມສາມາດ ແລະ ປະສົບການຂອງການນໍາໃຊ້ເຄື່ອງມື, ວິທີການສະເພາະ ແລະ ຄວາມສາມາດທາງດ້ານຮູບປະທໍາທີ່ຕ້ອງການ.

# ພາກທີ 16: ວົງຈອນຄວາມຄິດສ້າງສັນ
# ເວລາ: 60 ນາທີ




## ຈຸດປະສົງ

ເພື່ອນໍາສະເໜີວົງຈອນຄວາມປະດິດສ້າງ ໃນຮູບແບບຂອງແຜນວຽກໃນການຈັດການຝຶກອົບຮົມທີ່ສ້າງສະພາບແວດລ້ອມທີ່ປອດໄພ ແລະ ແນະນໍາຜູ້ເຂົ້າຮ່ວມເຂົ້າສູ່ພາກກິດຈະກໍາແບບມີປະສິດທິພາບ ແລະ ປະສິດທິຜົນ.

## ວິທີການ

1) ຄູຝຶກສະເໜີຫົວຂໍ້ບົດຮຽນ ໂດຍການບັນລະຍາຍເພື່ອນໍາສະເໜີຈຸດສໍາຄັນຂອງການສ້າງບັນຍາ ກາດທີ່ເປັນກັນເອງ ແລະ ຄວາມສ້າງສັນໃນການຮຽນຮູ້ ແລະ ການປະຍຸກໃຊ້ທີ່ມີປະສິດທິພາບໃຫ້ແກ່ຜູ້ອໍານວຍຄວາມສະດວກ.
2) ຄູຝຶກອະທິບາຍໂດຍສັງລວມກ່ຽວກັບບັນດາບາດກ້າວຫຼັກ ຈາກນັ້ນຈຶ່ງອະທິບາຍວົງຈອນ, ໃຫ້ອະທິບາຍ ໃນລັກສະນະເປີດໂອກາດໃຫ້ມີສ່ວນຮ່ວມ, ນໍາສະແດງຂັ້ນຕອນ ແລະ ເຄື່ອງມືທີ່ສອດ ຄ່ອງກັບການແນະນໍາຂ້າງລຸ່ມນີ້ ແລະ ແຕ້ມວົງຈອນຕາມຄໍາແນະນໍາໃນບັນດາຮູບແບບທີ່ມີຢູ່ໃນຄໍາອະທິບາຍ.
3) ຕັ້ງຄໍາຖາມສົນທະນາ: ພວກເຮົາສ້າງຂັ້ນຕອນການກະກຽມທີ່ເປັນກັນເອງນີ້ໄດ້ແນວໃດ?
4) ນໍາພາຜູ້ເຂົ້າຮ່ວມ ຫຼິ້ນເກມຕົບມືແບບສິ່ງຕໍ່, ຈາກນັ້ນໃຫ້ລະດົມສະໝອງຜູ້ເຂົ້າຮ່ວມ ກ່ຽວກັບອົງປະກອບຂອງຂັ້ນຕອນວົງຈອນຄວາມປະດິດສ້າງ ວ່າມັນສາມາດສົ່ງເສີມການກະກຽມທີ່ດີໄດ້ແນວໃດ.
5) ຄູຝຶກອະທິບາຍ: **ຂັ້ນຕອນການຈັດໂຄງຮ່າງລະບຽບ**ແມ່ນສະທ້ອນຜ່ານຄວາມຄິດທີ່ວ່າ "ແມ່ນແລ້ວ, ແຕ່ວ່າ", ບ່ອນທີ່ທ່ານຕັ້ງໃຈຫຼຸດທາງເລືອກຂອງທ່ານລົງ ແລະ ສຸມໃສ່ຄວາມຈິງທີ່ເປັນໄປໄດ້ທີ່ສຸດ. ມັນມີຄວາມຈໍາເປັນຕ້ອງມີການຖົມບາງຄວາມຄິດທີ່ມາຜ່ານໂດຍໃຊ້ຄໍາວ່າ: "ແມ່ນແລ້ວ-ແລະ". **ໃນຂັ້ນຕອນຂອງການນໍາສະເໜີ** ເຮັດໃຫ້ມີຜົນຂອງການປະຍຸກໃຊ້ ແລະ ມີຜົນໄດ້ຮັບທີ່ຈະແຈ້ງ. **ໃນຂັ້ນຕອນຂອງການສະທ້ອນຄືນຄວາມຄິດ** ແລະ ທວນຄືນແມ່ນການຮຽນຮູ້ກ່ຽວກັບການພິຈາລະນາສິ່ງທີ່ຜູ້ເຂົ້າຮ່ວມໄດ້ປະຕິບັດ ແລະ ເຫັນພາບຂອງບົດຮຽນວ່າທ່ານຈະເຮັດແນວໃດໃຫ້ດີຂຶ້ນໃນເທື່ອໜ້າ.
6) ເຮັດກິດຈະກໍາ (ແມ່ນແລ້ວ/ແລະ) ເລີ່ມຕົ້ນໂດຍການໃຫ້ຜູ້ເຂົ້າຮ່ວມນັ່ງອ້ອມເປັນວົງມົນ ແລະ ເລົ່າເລື່ອງນໍາກັນ, ແຕ່ລະຄົນແມ່ນປ່ຽນຜຽນກັນເລົ່າເລື່ອງເພື່ອສ້າງປະໂຫຍກ. ຄົນຕໍ່ໄປຕ້ອງສືບຕໍ່ເລົ່າເລື່ອງໂດຍເວົ້າວ່າ "ແມ່ນແລ້ວ, ແລະ" ສ້າງເລື່ອງໃຫ້ກົງກັບເລື່ອງທີ່ມີກ່ອນໜ້ານີ້ແລ້ວສືບຕໍ່ເລື່ອງ.
7) ພາຍຫຼັງທຸກຄົນໄດ້ມີຄວາມເຂົ້າໃຈຈະແຈ້ງກ່ຽວກັບວົງຈອນຄວາມສ້າງສັນແລ້ວ, ແບ່ງຜູ້ເຂົ້າຮ່ວມ ເປັນກຸ່ມນ້ອຍ ໃຫ້ຜູ້ເຂົ້າຮ່ວມສ້າງວົງຈອນຄວາມປະດິດສ້າງ ໂດຍໃຫ້ເຂົາເຈົ້າສ້າງຂັ້ນຕອນຂອງບົດຮຽນໃນເຄິ່ງມື້ ວ່າຈະກໍານົດຫົວຂໍ້ການຮຽນຮູ້ທີ່ຫຼາກຫຼາຍແນວໃດທີ່ພວກເຂົາຕ້ອງການ.
8) ເມື່ອແຕ່ລະກຸ່ມສ້າງວົງຈອນຄວາມປະດິດສ້າງແລ້ວ ແມ່ນໃຫ້ຍ່າງອ້ອມການວາງສະແດງຜົນງານ, ແລະ ບັນທຶກເປັນລາຍການລົງໃສ່ເຈ້ຍແຜ່ນໃຫຍ່ ລວມທັງບັນດາເຄື່ອງມືທີ່ແຕກຕ່າງກັນຂອງແຕ່ລະກຸ່ມໃຊ້ໃນແຕ່ລະຂັ້ນຕອນຂອງວົງຈອນ.

## ຄຳແນະນຳສຳລັບຄູຝຶກ

1. ການອະທິບາຍແບບແຜນວຽກວົງຈອນຄວາມສ້າງສັນ ແມ່ນໃຫ້ເບິ່ງຄຳອະທິບາຍການບັນລະຍາຍ ແລະ ຮູບພາບ ຢູ່ເຈັ້ຍແຜ່ນໃຫຍ່ ຊຶ່ງເປັນເຄື່ອງແນະນຳໃຫ້ຊ່ວຍເຈົ້າໃນການສອນ ແລະ ການແຕ້ມ.
2. ຂັ້ນຕອນຂອງວົງຈອນແມ່ນມີຄື:

## • ການສ້າງບັນຍາກາດທີ່ເປັນກັນເອງ

ຈຸດປະສົງ: ອຸ່ນເຄື່ອງ; ສ້າງສາຍສຳພັນ.

ພິຈາລະນາ: ປະສົມປະສານ ແລະ ໃຫ້ສິດຜູ້ຟັງ; ຄວາມອ່ອນໂຍນທາງດ້ານວັດທະນະທຳ.

ເຄື່ອງມື (ອຸປະກອນ): ໝາກບານຫຼິ້ນເກມທວາຍຊື່, ກິດຈະກຳການພົວພັນໃນສັງຄົມ.

## • ໂຄງສ້າງ (ແມ່ນ-ແລະ)

ຈຸດປະສົງ: ເປີດການສົນທະນາກ່ຽວກັບປະເດັນສຳຄັນ.

ພິຈາລະນາ: ໃຫ້ຜູ້ເຂົ້າຮ່ວມທຸກຄົນມີໂອກາດໃນການສົນທະນາ.

ເຄື່ອງມື:ສູນລວມການພັດທະນາ, ແຜນທີ່ຄວາມຄິດ, ເວທີສະແດງຄວາມຄິດເຫັນ, ສຸມໃສ່ການສົນທະນາເປັນກຸ່ມ ແລະ ການຖາມຄຳຖາມໂດຍນຳໃຊ້ຍຸດທະສາດ.

## • ໂຄງສ້າງ (ແມ່ນແລ້ວ…ແຕ່)

ຈຸດປະສົງ: ມີການວິເຄາະແບບເລິກຊຶ້ງ ແລະ ມີຈຸດສຸມ

ເຄື່ອງມື: ເພີ່ມ ຫຼື ຫຼຸດ, ໜ້າສົນໃຈ, ຜົນໄດ້ຮັບ ແລະ ຜົນຕໍ່ເນື່ອງ, ເວທີສະແດງຄວາມຄິດເຫັນ, 10ແກ່ນພືດ, ສຸມໃສ່ການສົນທະນາເປັນກຸ່ມ ແລະ ການຕັ້ງຄຳຖາມໂດຍນຳໃຊ້ຍຸດທະສາດ.

## • ການນຳສະເໜີ

ຈຸດປະສົງ: ການແລກປ່ຽນຜົນໄດ້ຮັບຂອງກິດຈະກຳ.

ພິຈາລະນາ: ພື້ນທີ່, ເວລາ ແລະ ຊັບພະຍາກອນທີ່ມີຢູ່.

ເຄື່ອງມື: ສັນຍາລັກ, ການນຳສະເໜີແບບເຫັນພາບ, ກະດານແຈ້ງການ, ແຜ່ນພັບ ແລະ ແຜ່ນໂປສເຕີ, ການສະແດງບົດບາດສົມມຸດ, ແຜນທີ່ຄວາມຄິດ.

## • ການປະກອບຄຳຄິດເຫັນ, ການຮຽນຮູ້, ການສະເຫຼີມສະຫຼອງ ແລະ ການປຽນແທນໃໝ.

ຈຸດປະສົງ: ທວນຄືນສິ່ງທີ່ເປັນໄປໄດ້ດີ ແລະ ສິ່ງທີ່ຄວນປັບປຸງໃຫ້ດີຂຶ້ນ.

ເຄື່ອງມື: ການເຫັນພາບ, ແຜນໂຄງຮ່າງເລື່ອງ, ສາຍນ້ຳຂອງການຝຶກອົບຮົມ, ການກະທຳ, ການສະທ້ອນຄືນ, ການຮຽນຮູ້, ການວາງແຜນ.

## ພາກທີ 17: ເກມໃສ່ຊື່ແບບມ່ວນຊື່ນ
## ເວລາ: 15 ນາທີ

### ຈຸດປະສົງ

- ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ປະສົບການ ໃນການຫຼິ້ນເກມໃສ່ຊື່ແບບມ່ວນຊື່ນ ແລະ ເຂົ້າໃຈວ່າ ເປັນຫຍັງພວກເຮົາຈຶ່ງສ້າງຄວາມຮູ້ສຶກທີ່ປອດໄພ ແລະ ກະກຽມສໍາລັບການຮຽນແບບມີປະສິດທິພາບນໍາກັນ.
- ເພື່ອໃຫ້ຜູ້ເຂົ້າຮ່ວມເຂົ້າໃຈໃນການຍອມຮັບການເຮັດຜິດພາດ ຫຼື ເຮັດບໍ່ຖືກ ແລະ ໄດ້ສໍາພັດປະສົບການໃນການຍອມຮັບເວລາເຮົາເຮັດຜິດ ແລະ ຍອມສ່ຽງໃນການຕັດສິດໃຈທີ່ຈະເຮັດສິ່ງໃດສິ່ງໜຶ່ງ.

ໝາຍເຫດ-ຖ້າກິດຈະກໍານີ້ຍາກເກີນໄປ ຫຼື ບໍ່ເໝາະສົມໃນການນໍາໃຊ້ເຮັດກິດຈະກໍາກັບພາກສ່ວນລັດ, ທ່ານກໍ່ບໍ່ຫຼິ້ນເກມນີ້, ທ່ານສາມາດຫຼິ້ນເກມຄຶງທ່ອນໄມ້ ຫຼື ເກມຕົບມືເອີ້ນຊື່-ແຕ່ວ່າທ່ານຈະຕ້ອງພັກດັນໃຫ້ເຂົາເຈົ້າຫຼິ້ນໄວ ຫຼື ປັບສະພາບໃຫ້ເຂົ້າກັບສິ່ງໃໝ່ໆໄດ້ໄວ.

### ວິທີການ

1) ຜູ້ອໍານວຍຄວາມສະດວກ ອະທິບາຍຂັ້ນຕອນຂອງການຫຼິ້ນເກມ ໂດຍເວົ້າໃຫ້ຈະແຈ້ງ ແລະ ໃຊ້ນໍ້າສຽງໃຫ້ເໝາະສົມ.
2) ທົດລອງນໍາພາເລີ່ມຕົ້ນໂດຍການຊີ້ມືໄປໃສ່ວັດຖຸ ແລະ ໃຫ້ເອີ້ນຊື່ຂອງວັດຖຸໄປໃນຊື່ທີ່ແຕກຕ່າງບໍ່ຄືກັບຊື່ນັ້ນແທ້. ແນະນໍາຜູ້ເຂົ້າຮ່ວມເວົ້າໃຫ້ມີສຽງດັງ ແລະ ໄວເທົ່າທີ່ພວກເຂົາຈະເຮັດໄດ້, ໃຫ້ເປັນຕາມຈິນຕະນາການ ແລະ ສ້າງສັນທີ່ສຸດເທົ່າທີ່ຈະເຮັດໄດ້, ເຮັດໃຫ້ມັນມີຄວາມມ່ວນຊື່ນ, ສົ່ງເສີມໃຫ້ເອີ້ນຊື່ທີ່ງ່າຍໆ ແລະ ເປັນຕາຢາກຫົວ.
3) ຮອບທີສອງ ແມ່ນໃຫ້ຜູ້ເຂົ້າຮ່ວມທຸກຄົນຫຼິ້ນພ້ອມກັນ ໂດຍຊີ້ໃສ່ວັດຖຸອື່ນໆຄືກັນ, ຍ່າງອ້ອມຫ້ອງແລ້ວໃສ່ຊື່ທີ່ຜິດກັບທຸກໆຢ່າງທີ່ພວກເຂົາເຫັນ;
4) ພາຍຫຼັງຫຼິ້ນເກມແລ້ວ, ຜູ້ອໍານວຍຄວາມສະດວກ ອະທິບາຍວ່າກິດຈະກໍາດັ່ງກ່າວເຊື່ອມຕໍ່ກັບການກະກຽມແນວໃດ, ເພື່ອສ້າງຄວາມຮູ້ສຶກປອດໄພ ແລະ ການຫຼຸດພົ້ນຈາກຄວາມຄິດວ່າຄໍາຕອບຕ້ອງມີແຕ່ຖືກ ແລະ ຜິດ, ແທນທີ່ຈະເຮັດແບບນັ້ນ. **(ພວກເຮົານໍາໃຊ້ກິດຈະກໍານີ້ເພື່ອເຮັດໃຫ້ມີຄວາມ ສະບາຍໃຈກັບຄໍາຕອບທີ່ສ້າງສັນ)**

### ຄໍາແນະນໍາສໍາລັບຄູຝຶກ

**ເກມໃສ່ຊື່ແບບມ່ວນຊື່ນ** ແມ່ນເກມທີ່ມີຄວາມສ້າງສັນ ແລະ ຄຶກຄື້ນ ເພື່ອອຸ່ນເຄື່ອງກັບຜູ້ເຂົ້າຮ່ວມໝົດທຸກຄົນ, ມັນຊ່ວຍໃນການກໍາຈັດອຸປະສັກ, ຊ່ວຍໃຫ້ຄົນໄດ້ຄິດແບບກວ້າງຂວາງ ແລະ ສົ່ງເສີມຄວາມສ້າງສັນ, ຍືດຍຸ່ນ ແລະ ເປີດເຜີຍ. ເປັນກິດຈະກໍາທີ່ວ່ອງໄວ ຖືວ່າເປັນການກະກຽມທີ່ດີ ແລະ ສ້າງຄວາມຮູ້ສຶກປອດໄພ, ຊຶ່ງວ່າທຸກຄົນຈະມີການໃສ່ຊື່ຜິດ, ຈິງໃຈເຮັດຜິດ ແລະ ມີປະສົບການທີ່ບໍ່ມີການຕັດສິນມີພຽງແຕ່ສຽງຫົວ.

**ເກມໃສ່ຊື່ແບບມ່ວນຊື່ນ** ຍັງມີຄວາມສໍາຄັນສໍາລັບຜູ້ເຂົ້າຮ່ວມຕ້ອງໄດ້ປະກອບຄໍາເຫັນສັງເກດເບິ່ງວ່າຜູ້ເຂົ້າຮ່ວມຮູ້ສຶກແນວໃດໃນເວລາເຮັດກິດຈະກໍານີ້ ແລະ ພວກເຂົາຖືກຕັດສິນຫຼາຍປານໃດ ຫຼື ຍັງຄາໃຈຢູ່ ຫຼື ມີຄວາມມ່ວນຊື່ນ ຫຼື ມີຄວາມທ້າທາຍໃນກິດຈະກໍານີ້. ບໍ່ມີຄໍາຕອບທີ່ຖືກ ຫຼື ຜິດກ່ຽວກັບຄວາມຮູ້ສຶກຂອງພວກເຂົາ, ມີພຽງແຕ່ຄວາມຕື່ນຕົວໃຫ້ເຫັນວິທີຂອງການສອນໃນກິດຈະກໍານີ້ມີຕໍ່ຕົວທ່ານເອງຄືແນວໃດ.

# ພາກທີ 18: ການປຶກສາຫາລືກ່ຽວກັບເຄື່ອງມື
## ເວລາ:105 ນາທີ



## ຈຸດປະສົງ

ເພື່ອເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດກຳນົດ, ສະຫຼຸບ ແລະ ຕີລາຄາບັນດາເຄື່ອງມື ທີ່ພວກເຂົາໄດ້ຮຽນຮູ້ໃນການຝຶກອົບຮົມຄັ້ງນີ້, ຊຶ່ງຊ່ວຍໃຫ້ພວກເຂົາສາມາດຄັດເລືອກ ແລະ ນຳໃຊ້ບັນດາເຄື່ອງມືເຫຼົ່ານັ້ນໄດ້ທັນທີທັນໃດ.

## ວິທີດຳເນີນ

1) ເລີ່ມຕົ້ນດ້ວຍການເຮັດກິດຈະກຳ, ແບ່ງເປັນກຸ່ມນ້ອຍ
- ແນະນຳຜູ້ເຂົ້າຮ່ວມກ່ຽວກັບຂັ້ນຕອນວິທີການ ຄື:

2) ໃຫ້ເຂົາເຈົ້າຊອກຫາບັນດາເຄື່ອງມືໃນການຮຽນຮູ້ທີ່ແຕກຕ່າງກັນທີ່ພວກເຮົາໄດ້ຮຽນໃນຫຼັກສູດນີ້ມີຫຍັງແນ່?
3) ໃຫ້ສັງເກດເບິ່ງວ່າກຸ່ມໃດຈະສາມາດບອກລາຍການບັນດາເຄື່ອງມືໃນການຮຽນໄດ້ຫຼາຍທີ່ສຸດໃນເວລາ 3 ນາທີ.
4) ທວນຄືນບັນດາລາຍການ, ເພື່ອວ່າກຸ່ມໃດມີເຄື່ອງມືໃດຍັງຂຽນບໍ່ຄົບແມ່ນສາມາດຕື່ມໃສ່ລາຍການເຄື່ອງມືຂອງພວກເຂົາໄດ້. (ວິທີນີ້ຈະເຮັດໃຫ້ທຸກກຸ່ມມີລາຍການຂອງບັນດາເຄື່ອງມືທີ່ສົມບູນຊຶ່ງພວກເຮົາໄດ້ນຳໃຊ້ມາແລ້ວ).
5) ຈາກນັ້ນອະທິບາຍ ແລະ ສະແດງໃຫ້ພວກເຂົາເຫັນແບບຄ້າວໆວິທີໃນການນຳໃຊ້ສິບແກ່ນພືດເປັນເຄື່ອງມືທີ່ເປັນບູລິມະສິດ. ເຊັ່ນ: ໃນກຸ່ມຈະໄດ້ຮັບ10 ແກ່ນພືດ (ຄົນລະແກ່ນ) ແຕ່ລະແກ່ນແມ່ນມີສິບເປີເຊັນ) ແລະ ໃຫ້ພວກເຂົາສ້າງ ແລະ ໃຫ້ຄະແນນເປັນໝວດລາຍການ (ຕົວຢ່າງ: ບຸກຄະລິກທີ່ສຳຄັນທີ່ສຸດຂອງຜູ້ອຳນວຍຄວາມສະດວກ ຫຼື ບັນດາປັດໃຈທີ່ສຳຄັນທີ່ພາໃຫ້ເກີດມີຄວາມທຸກຍາກໃນຊຸມຊົນ)
6) ແບ່ງຜູ້ເຂົ້າຮ່ວມເປັນກຸ່ມນ້ອຍ, ຈາກນັ້ນໃຫ້ພວກເຂົາເຮັດກິດຈະກຳ ສິບ ແກ່ນພືດ ເພື່ອຊອກຫາວ່າເຄື່ອງມືໃດແມ່ນເປັນປະໂຫຍດທີ່ສຸດ ແລະ ພວກເຂົາຕ້ອງການໃຊ້ເພື່ອສົ່ງເສີມການຮຽນຂອງຜູ້ໃຫຍ່.
7) ເມື່ອພວກເຂົາໄດ້ລະບຸບັນດາບູລິມະສິດຂອງພວກເຂົາແລ້ວ, ໃຫ້ກຸ່ມໃຫຍ່ທັງໝົດທວນຄືນຜົນໄດ້ຮັບ ແລະ ການແຈກຢາຍລະຫວ່າງ ສາມ ກຸ່ມທີ່ນຳໃຊ້ເຄື່ອງມືທີ່ນິຍົມທີ່ສຸດໃນກຸ່ມຂອງພວກເຂົາ.
(ຜູ້ອຳນວຍຄວາມສະດວກບັນທຶກໄວ້ ແລະ ໃຫ້ພວກເຂົາອະທິບາຍໂດຍນຳໃຊ້ຄຳເວົ້າຂອງພວກເຂົາເອງໂດຍໃຊ້ຕາຕະລາງໃນສະໄລ໌). ເຄື່ອງມືໜຶ່ງຄວນໃຊ້ເວລາ20—25ນາທີ ເພື່ອບັນທຶກສະນັ້ນແຕ່ລະກຸ່ມຄວນຕັ້ງເປົ້າໝາຍຢູ່ທີ່ເລກ 3.
8) ສ້າງການສົນທະນາປຶກສາຫາລືເຖິງສິ່ງທີ່ສະມາຊິກກຸ່ມຕົກລົງນຳກັນວ່າແມ່ນຫຍັງ. ຈາກນັ້ນ, ຜູ້ເຂົ້າຮ່ວມຈະຕ້ອງຍ້າຍຕຳແໜ່ງແກ່ນພືດໄປອ້ອມໆ, ກົງກັບແນວຄວາມຄິດຂອງພວກເຂົາ, ແຕ່ພວກເຂົາຕ້ອງເຄື່ອນຍ້າຍແກ່ນພືດ, ໂດຍອະທິບາຍເຫດຜົນທີ່ເຄື່ອນຍ້າຍພວກມັນ ແລະ ແລກປ່ຽນຄວາມຄິດເຫັນຂອງພວກເຂົາ. ເພື່ອສ້າງເວທີໃນການສົນທະນາ ແລະ ເຈລະນາຈົນກວ່າໄດ້ຂໍ້ຕົກລົງພາຍໃນກຸ່ມ.
9) ສິບນາທີກ່ອນຈົບພາກນີ້, ໃຫ້ທຸກຄົນຍ່າງເບິ່ງການວາງສະແດງຂໍ້ມູນ ເພື່ອທຸກຄົນຈະໄດ້ເຫັນແນວຄວາມຄິດຂອງກຸ່ມອື່ນ ແລະ ພວກເຮົາສາມາດຮຽນຮູ້ຊຶ່ງກັນ ແລະ ກັນໄດ້.

## ຄຳແນະນຳສຳລັບຄູຝຶກ

ເຕັກນິກ10 ແກ່ນພືດແມ່ນເຄື່ອງມື PLA ມັນມີຄວາມໝາຍສຳຄັນທີ່ເຮົາຈະເຂົ້າໃຈແນວຄວາມຄິດຂອງຊຸມຊົນ ແລະ ຖືກສ້າງຂຶ້ນມາໃຫ້ນຳໃຊ້ແກ່ນພືດ, ບໍ່ແມ່ນຄຳເວົ້າ, ເພື່ອຊຸກຍູ້ໃຫ້ຊາວບ້ານທີ່ບໍ່ຮູ້ໜັງສືເຂົ້າຮ່ວມການສົນທະນາທີ່ກ່ຽວຂ້ອງກັບການວິເຄາະສະຖານະການຂອງພວກເຂົາເທົ່ານັ້ນ.

ເຕັກນິກ10 ແກ່ນພືດຍັງເປັນສິ່ງທີ່ສຳຄັນໃນການຊ່ວຍໃຫ້ຜູ້ຄົນໄດ້ສະແດງຄວາມຄິດເຫັນຂອງເຂົ້າເຈົ້າ, ເພື່ອເບິ່ງວ່າຄົນອື່ນເບິ່ງສະຖານະການຂອງພວກເຂົາໃນມຸມມອງແຕກຕ່າງແນວໃດ.

## ພັກຜ່ອນດື່ມນ້ຳຊາ ກາເຟ ແລະ ອາຫານວ່າງ



## ພາກທີ 19: ສາຍນ້ຳຂອງຫຼັກສູດ
## ເວລາ: 45 ນາທີ




## ຈຸດປະສົງ

- ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມໄດ້ທວນຄືນ, ວິເຄາະ ແລະ ສື່ສານຂັ້ນຕອນຂອງຫຼັກສູດສອງມື້ນີ້.
- ເພື່ອວ່າພວກເຂົາຈະໄດ້ເຫັນວ່າອັນໃດມີຜົນດີ ແລະ ຮຽນຮູ້ໄດ້ດີທີ່ສຸດ.
- ເພື່ອສະແດງໃຫ້ເຫັນເຄື່ອງມືສຳລັບການສະທ້ອນຄືນຄວາມຮູ້ສຶກ ແລະ ຮູບແບບການຮຽນທີ່ດີ.

## ວິທີດຳເນີນ

1) ເລີ່ມຕົ້ນກິດຈະກຳ ສະແດງໃຫ້ຜູ້ເຂົ້າຮ່ວມເຫັນວິທີສ້າງສາຍນ້ຳ. ໂດຍການແນະນຳໃຫ້ຜູ້ເຂົ້າຮ່ວມຮັບຮູ້ວ່າ: ເຄື່ອງມືສາຍນ້ຳຂອງຫຼັກສູດ ແມ່ນເປັນຮູບແບບໜຶ່ງຂອງການສະຫຼຸບທົບທວນຄືນການຝຶກອົບຮົມ ດ້ວຍຮູບແບບນ້ຳໃຊ້ສາຍນ້ຳຂອງຫຼັກສູດ.

2) ອະທິບາຍວ່າເປັນຫຍັງ ແລະ ເຮັດແນວໃດ, ຍົກຕົວຢ່າງໂຄງການ 6 ເດືອນຂອງແມ່ນ້ຳແຫ່ງຊີວິດ (ເບິ່ງໃນສະໄລ໌ບົດນຳສະເໜີພາວເວີພ້ອຍ) ແຕ່ບອກຜູ້ເຂົ້າຮ່ວມວ່າ: ພວກເຮົາຈະເຮັດບາງຢ່າງທີ່ງ່າຍກວ່າໃນນີ້. ແມ່ນ້ຳຂອງຫຼັກສູດ ທີ່ຈະໃຫ້ຜູ້ເຂົ້າຮ່ວມເຮັດ ແມ່ນເອົາແຕ່ສອງມື້ທີຜ່ານມາ.

3) ອະທິບາຍ ອົງປະກອບສຳຄັນຂອງການສ້າງສາຍນ້ຳຂອງຫຼັກສູດ: **ພວກເຂົາອາດຕ້ອງໄດ້ມີເຄື່ອງ ໝາຍທີ່ຫຼາກຫຼາຍເຊັ່ນຂຶ້ນ:**

- ກ້ວາງມີປະສົບການດີ ຫຼື ມີການເຕີບໂຕ;
- ລົງ/ແຄບ = ປະສົບການທີ່ບໍ່ດີ ຫຼື ມີຄວາມຈຳກັດ, ແລະ ອື່ນໆ.
- ໂຕແຂ້, ນ້ຳໄຫລວົນ, ກ້ອນຫີນ ຫຼື ນ້ຳຕົກອາດເປັນອຸປະສັກ.
- ຂົວຕໍ່ແມ່ນ້ຳ ຫຼື ແມ່ນ້ຳສອງສາຍຕໍ່ ກັນອາດເປັນການພັນລະນາເຖິງຄວາມປ່ຽນແປງອັນຫຍິ່ງໃຫຍ່.
- ແມ່ນ້ຳທີ່ກຳລັງໄຫຼໄວ, ເປັນຄື້ນ ຫຼື ເປັນຟອດນ້ຳ ອາດສະແດງໃຫ້ເຫັນຄວາມປ່ຽນແປງແບບວ່ອງໄວ.
- ປາ, ເຕົ່າ ຫຼື ສັດຕ່າງໆ ອາດເປັນແງ່ມູນໃນດ້ານບວກ.

ນອກນັ້ນ, ເຄື່ອງມືຍັງສົ່ງເສີມໃຫ້ມີການເຮັດວຽກເປັນທີມ ແລະ ເປັນການສະແດງອອກດ້ານຄວາມປະດິດສ້າງທີ່ນຳພາໃຫ້ເຖິງການວິເຄາະ.ຊຶ່ງມີປະໂຫຍດຫຼາຍໂດຍສະເພາະຕໍ່ກັບເນື້ອໃນທັກສະການຂຽນໃນລະດັບຕ່ຳ ແລະ ເພື່ອນຳໃຊ້ກັບເດັກນ້ອຍ.

4) ແບ່ງຜູ້ເຂົ້າຮ່ວມເປັນກຸ່ມນ້ອຍ ແລະ ໃຫ້ເຂົາເຈົ້າສ້າງສາຍນ້ຳຂອງຫຼັກສູດນີ້.

5) ເມື່ອແຕ່ລະກຸ່ມສ້າງສາຍນ້ຳແລ້ວໆ, ໃຫ້ຍ່າງເບິ່ງຜົນງານວາງສະແດງຈາກກຸ່ມອື່ນໆ ພ້ອມທັງເປີດການສົນທະນາວ່າອັນໃດແມ່ນມີປະສິດທິພາບທີ່ສຸດທີ່ຜູ້ເຂົ້າຮ່ວມຕ້ອງການນຳໃຊ້ ແລະ ອັນໃດທີ່ໃຊ້ບໍ່ໄດ້ດີປານໃດ ແລະ ພວກເຂົາຕ້ອງເຮັດໃຫ້ແຕກຕ່າງແນວໃດ.

## ຄຳແນະນຳສຳລັບຄູຝຶກ

1. ຈົ່ງຈື່ໄວ້ພ້ອມວ່າ, ພວກເຮົາຕ້ອງການເລີ່ມສ້າງວັດທະນະທຳການຮຽນຮູ້ນຳກັນ. ບຸກຄະລິກບາງອັນແມ່ນມີຄວາມສະເພາະເຈາະຈົງ (ພວກເຮົາບໍ່ມີການໃຫ້ຄຳອະທິບາຍແບບທົ່ວໄປໄດ້, ແຕ່ໃຫ້ຕົວຢ່າງທີ່ເປັນຮູບປະທຳ), ການວິເຄາະ ແລະ ການແລກປ່ຽນວ່າພວກເຮົາຮູ້ສຶກແນວໃດ.
2. ການອະທິບາຍທີ່ຫຼາຍກວ່າ ແລະ ການວິເຄາະເຫດການ ແລະ ຄວາມຮູ້ສຶກໃນທາງບວກ ແລະ ລົບ. ມັນເປີດໂອກາດໃຫ້ຜູ້ເຂົ້າຮ່ວມເຫັນວ່າເຫດການຕ່າງໆສາມາດກ່ຽວຂ້ອງໄດ້ຄືແນວໃດ.ບອກໃຫ້ຜູ້ເຂົ້າຮ່ວມຮູ້ເຖິງລັກສະນະຂອງສາຍນ້ຳ ແລະ ພວກເຂົາຕ້ອງໄດ້ແຕ້ມຮູບສາຍນ້ຳເພື່ອນຳສະເໜີເຫດ ການນັ້ນໆ
3. ອະທິບາຍໃຫ້ຜູ້ເຂົ້າຮ່ວມຮູ້ວ່າ ຄຸນຄ່າຂອງການປະກອບຄຳຄິດເຫັນແມ່ນເຄື່ອງມືຂອງການຮຽນຮູ້ ໂດຍຂຶ້ນກັບປະສົບການຂອງພວກເຮົາເອງ.

# ພາກທີ 20: ເປົ້າໝາຍແບບ SMART (ການຂຽນແຜນ)
# ເວລາ 15 ນາທີ

| | |
|---|---|
| S | Specific ຫຼື ສະເພາະເຈາະຈົງ |
| M | Measurable ຫຼື ວັດແທກໄດ້ |
| A | Achievable ຫຼື ສາມາດເຮັດໄດ້ |
| R | Resources needed or Relevant ຫຼື ຊັບພະຍາກອນທີ່ຕ້ອງການ, ຄວາມສອດຄ່ອງ, |
| T | Timebound ຫຼື ມີກຳນົດເວລາ |

## ຈຸດປະສົງ

ເພື່ອເປັນການອຳນວຍຄວາມສະດວກ ໃຫ້ຜູ້ເຂົ້າຮ່ວມຕັ້ງເປົ້າໝາຍກ່ຽວກັບວ່າຈະເຮັດແນວໃດຕົນເອງຈຶ່ງຈະກາຍເປັນຜູ້ອຳນວຍຄວາມສະດວກທີ່ດີທີ່ສຸດ.

## ວິທີການ

1) ແນະນຳວິທີການຂັ້ນຕອນຂຽນແຜນ ຕາມຫຼັກການແບບ SMART.
2) ອະທິບາຍກ່ຽວກັບຄວາມໝາຍຂອງຕົວອັກສອນຫຍໍ້ແຕ່ລະຕົວ ວ່າຫຍໍ້ມາຈາກໃສ ດັ່ງເນື້ອໃນລຸ່ມນີ້:

S = Specific ຫຼື ສະເພາະເຈາະຈົງ

M = Measurable ຫຼື ວັດແທກໄດ້

A = Achievable ຫຼື ສາມາດເຮັດໄດ້

R = Resources needed or Relevant ຫຼື ຊັບພະຍາກອນທີ່ຕ້ອງການ, ຄວາມສອດຄ່ອງ

T = ຫຼື ມີກຳນົດເວລາ

ອະທິບາຍໃຫ້ທຸກຄົນເຂົ້າໃຈ ຄວາມໝາຍຂອງການຂຽນແຜນ ເຊັ່ນ: ເປົ້າໝາຍທີ່ມີຄວາມລະອຽດສະເພາະເຈາະຈົງວ່າແມ່ນຫຍັງຄວນຂຽນແບບໃດ, ແມ່ນໃຜເປັນຜູ້ຈັດຕັ້ງປະຕິບັດ, ຈະວັດແທກຫຍັງ ຕົວເລກປະລິມານ ຫຼື ຄຸນນະພາບ, ກຸ່ມເປົ້າໝາຍຜູ້ທີ່ຈະໄປຖ່າຍທອດຄວາມຮູ້ໃຫ້ແມ່ນລະດັບໃດ, ຊັບພະຍາກອນຫຍັງແດ່ທີ່ຕ້ອງການການສະໜັບສະໜູນຕໍ່ ແລະ ຈະຈັດຕັ້ງປະຕິບັດເມື່ອໃດ ສິ່ງເຫຼົ່ານີ້ແມ່ນໄດ້ມາຈາກການໄຕ່ຕອງ, ຄວາມສົມເຫດສົມຜົນ ແລະ ສາມາດເອົາໄປນຳໃຊ້ໄດ້ໃນພື້ນທີ່ບ້ານເປົ້າໝາຍໂຄງການຂອງເຂົາເຈົ້າ.

## ຄຳແນະນຳສຳລັບຄູຝຶກ

1. ທຸກຄົນຈະມີການບັນທຶກ ແລະ ສິ່ງເຕືອນຄວາມຊົງຈຳ ກ່ຽວກັບການວາງແຜນທີ່ຊັດເຈນ ແລະ ມີເປົ້າ ໝາຍທີ່ສົ່ງເສີມຄວາມຮັບຜິດຊອບ, ມີການຕິດຕາມ ແລະ ມີການຊຸກຍູ້ ໃຫ້ເປັນຈິງ.
2. ຜູ້ອຳນວຍຄວາມສະດວກ, ຈຳເປັນຕ້ອງປຶກສາກັບຜູ້ເຂົ້າຮ່ວມ ວ່າແມ່ນໃຜຈະເປັນຜູ້ຊ່ວຍ ແລະ ໃກ້ຊິດຕິດແທດເຂົາເຈົ້າ ເວລາເຂົາເຈົ້າເອົາບົດຮຽນໄປນຳໃຊ້ໃນການຈັດຕັ້ງປະຕິບັດຕົວຈິງກັບກຸ່ມເປົ້າໝາຍຂັ້ນຕ່າງໆ.

ຢໍ້າເຕືອນຜູ້ເຂົ້າຮ່ວມວ່າ ການຮຽນຮູ້ຈະແມ່ນການຮຽນຮູ້ ກໍຕໍ່ເມື່ອເອົາໄປນຳໃຊ້.

## ພາກທີ 21: ການວັດລະດັບຕົວເອງ
## ເວລາ: 10 ນາທີ




## ຈຸດປະສົງ:

- ເພື່ອວັດແທກການປ່ຽນແປງຂອງຜົນທີ່ໄດ້ຮັບຈາກການຝຶກອົບຮົມຄັ້ງນີ້.
- ເພື່ອສົນທະນາປຶກສາຫາລືກັບຜູ້ເຂົ້າຮ່ວມວ່າ ແມ່ນຫຍັງທີ່ເຮັດໃຫ້ເກີດມີຄວາມປ່ຽນແປງໃນດ້ານຄວາມສາມາດໃນການເປັນຜູ້ອຳນວຍຄວາມສະດວກ.

1) ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມເຫັນໄດ້ວ່າເຂົາເຈົ້າມີວິທີການພັດທະນາລະດັບຄວາມສາມາດໃນການເປັນຜູ້ອຳນວຍຄວາມສະດວກຂອງເຂົາເຈົ້າຄືແນວໃດ.

## ວິທີການ

ໃຫ້ຜູ້ເຂົ້າຮ່ວມຢືນລຽນວັດລະດັບຕາມຕົວເລກເປີເຊັນ.

2) ຄູຝຶກຕັ້ງຄຳຖາມເຖິງການປ່ຽນແປງ.
3) ຖ່າຍຮູບ ແລ້ວເອົາສົມທຽບກັບຮູບຖ່າຍມື້ທີ1 (ວັດລະດັບກ່ອນການຝຶກອົບຮົມ).
4) ໃຫ້ຜູ້ເຂົ້າຮ່ວມໄປຢືນຢູ່ບ່ອນທີ່ຄູຝຶກໄດ້ກະກຽມການວັດລະດັບຕົນເອງໃນສັງຄົມ ຕາມຄວາມເປັນຈິງ. (ໃຫ້ຜູ້ເຂົ້າຮ່ວມຢືນລຽງຕາມລຳດັບຈາກຜູ້ທີ່ມີປະສົບການໜ້ອຍໃນການເປັນຜູ້ອຳນວຍຄວາມສະດວກຫາຜູ້ທີ່ມີປະສົບການຫຼາຍໃນການເປັນຜູ້ອຳນວຍຄວາມສະດວກ)
5) ຄູຝຶກຖາມວ່າ: ເຂົາເຈົ້າຮູ້ສຶກວ່າເຂົາເຈົ້າໄດ້ມີການປັບປຸງທີ່ດີຂຶ້ນບໍ່, ຖ້າວ່າບໍ່ໄດ້ປັບປຸງຂຶ້ນແມ່ນຍ້ອນຫຍັງ ແລະ ຍ້ອນຫຍັງຜູ້ເຂົ້າຮ່ວມຈຶ່ງຢືນຢູ່ຕ່າງຈາກບ່ອນມື້ທີໜຶ່ງ?
6) ສົນທະນາປຶກສາຫາລືກັບຜູ້ເຂົ້າຮ່ວມວ່າ ແມ່ນຫຍັງທີ່ເຮັດໃຫ້ເກີດມີຄວາມປ່ຽນແປງໃນດ້ານຄວາມສາມາດໃນການເປັນຜູ້ອຳນວຍຄວາມສະດວກ ຂອງເຂົາເຈົ້າປ່ຽນໄປໃນທາງທີ່ດີ.
7) ຄູຝຶກຖ່າຍຮູບເອົາໄວ້ເພື່ອປຽບທຽບກັບຮູບຂອງມື້ທີ 1.

ຄູຝຶກເອົາຮູບທີ່ໄດ້ຖ່າຍໄວ້ໃຫ້ຜູ້ເຂົ້າຮ່ວມເບິ່ງ ເພື່ອປຽບທຽບຕົວຊີ້ວັດຄວາມປ່ຽນແປງ ຫຼັງຈາກການຝຶກອົບຮົມ 2 ວັນ.

## ຄຳແນະນຳສຳລັບຄູຝຶກ

ຖ່າຍຮູບເວລາຜູ້ເຂົ້າຮ່ວມຢືນລຽງແຖວໃນກິດຈະກຳການວັດລະດັບຕົວເອງໃນສັງຄົມ ເພື່ອບັນທຶກການຕິດຕາມ ແລະ ການປະເມີນຜົນ ພ້ອມທັງຂຽນໃສ່ບົດລາຍງານ.

ສຸດທ້າຍແມ່ນຖ່າຍຮູບລວມ ແລ້ວໃຫ້ຜູ້ເຂົ້າຮ່ວມຈັບເຈັ້ຍຮູບພາບແມ່ນ້ຳຂອງຫຼັກສູດ.

**ຂອບໃຈ...ລາກ່ອນ...ຢ່າລືມນຳໃຊ້ສິ່ງທີ່ໄດ້ຮຽນຮູ້ ແລະ ພົບກັນໃນການຝຶກອົບຮົມເທື່ອໜ້າ.**

# ເອກະສານປະກອບການຝຶກອົບຮົມ

- ສູນກາງແນວລາວສ້າງຊາດສະເໜີກ່ຽວກັບບັນຫາທີ່ດິນ ຕໍ່ສະພາແຫ່ງຊາດ
- ກໍລະນີສຶກສາທີ່ດິນຢູ່ປະເທດກຳປູເຈຍ
- ກໍລະນີສຶກສາທີ່ດິນ ແລະ ຊົນເຜົ່າ ຈາກປະເທດໄທ

## ສາມກໍລະນີສຶກສາ ທີ່ໃຊ້ສຳລັບກິດຈະກຳແບ່ງກຸ່ມ ການແລກປ່ຽນກໍລະນີສຶກສາ

### 1. ສູນກາງລາວສ້າງຊາດ ສະເໜີກ່ຽວກັບບັນຫາທີ່ດິນ ຕໍ່ສະພາແຫ່ງຊາດ

ວັນທີ 15/11/2021, ແຫຼ່ງຂໍ້ມູນຈາກ ຂ່າວຜູ້ແທນປະຊາຊົນ: https://bit.ly/3bUbsbZ




ທ່ານ ນາງ ຄ□າຈັນ ພົມແສງສະຫວັນ ຮອງປະທານສູນກາງແນວລາວສ້າງຊາດ ໄດ້ຕາງໜ້າໃຫ້ສູນກາງ ແນວລາວສ້າງຊາດ ມີຄຳເຫັນຕໍ່ບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະແຜນການ ເຄື່ອນໄຫວ ປີ 2022 ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງ ສະພາແຫ່ງຊາດ ຊຸດທີ IX ວັນທີ 8 ພະຈິກ ນີ້. ທ່ານ ຮອງປະທານສູນກາງແນວລາວສ້າງຊາດ ໄດ້ມີຄຳສະເໜີຂອງປະຊາຊົນ ຕໍ່ສະພາແຫ່ງຊາດ ຜ່ານໄປຍັງພາກ ສ່ວນກ່ຽວຂ້ອງ ເພື່ອພິຈາລະນາ ຫຼາຍບັນຫາສຳຄັນ ເຊິ່ງໜຶ່ງໃນນັ້ນແມ່ນເລື່ອງຂອງບັນຫາທີ່ດິນ. ໂດຍຕົ້ນຕໍແມ່ນ:

- ສະເໜີໃຫ້ສະພາແຫ່ງຊາດ ເພີ່ມທະວີການຕິດຕາມກວດກາ, ກະຕຸກຊຸກຍູ້ ຕໍ່ການປະຕິບັດໂຄງການ ພັດທະນາຂອງລັດຖະບານ, ບໍລິສັດກ່ຽວຂ້ອງ ທີ່ປະຊາຊົນໄດ້ຮັບຜົນກະທົບ ແຕ່ບໍ່ທັນໄດ້ຮັບການ ແກ້ໄຂເຊັ່ນ: ໂຄງການກໍ່ສ້າງເຂື່ອນໄຟຟ້າຫ້ວຍເປາະ ຍັງບໍ່ທັນໄດ້ມີການຊົດເຊີຍ ເນື້ອທີ່ດິນ ທຳການ ຜະລິດຂອງປະຊາຊົນ ບ້ານສັນທົ່ງ ເມືອງເລົ່າງາມ ແຂວງ ສາລະວັນ ແລະ ບໍລິສັດເອກະຊົນສຳ ປະທານເນື້ອທີ່ດິນທຳການຜະລິດຂອງປະຊາຊົນ ຢູ່ບ້ານ ນາທັນ ເມືອງເລົ່າງາມ ແຂວງ ສາລະວັນ; ການຈ່າຍຄ່າແຮງງານ ໃຫ້ກຳມະກອນທີ່ອອກແຮງງານ ປຸກສ້າງທີ່ພັກອາໄສຂອງໂຄງການກໍ່ສ້າງ ເຂື່ອນໄຟຟ້ານ້ຳທາ 1 ຢູ່ເມືອງນາແລ ແຂວງ ຫຼວງນ້ຳທາ ແຕ່ປີ 2015 ຍັງບໍ່ທັນແກ້ໄຂໄດ້ ລວມທັງຄ່າ

ຊົດເຊີຍທີ່ດິນປຸກສ້າງ ແລະ ຈັດສັນທີ່ດິນທຳການຜະລິດຂອງປະຊາຊົນ; ປະຊາຊົນເມືອງ ຊຳໃຕ້ ແຂວງຫົວພັນ ສະເໜີກ່ຽວກັບການແກ້ໄຂຜົນກະທົບຂອງການກໍ່ສ້າງເຂື່ອນໄຟຟ້ານ້ຳຊຳ 1 ໂດຍສະເພາະແມ່ນປ່າຊ້າ ຈຳນວນ 421 ຂຸມຝັງສົບ ຍັງບໍ່ທັນໄດ້ຮັບການຊົດເຊີຍ.

- ຕໍ່ບັນຫາທີ່ດິນ ການຈັບຈອງທີ່ດິນ ປ່າ, ດິນຫວງຫ້າມ, ດິນບ້ານ ແລະ ດິນປະເພດຕ່າງໆ ເປັນຈຳນວນຫຼາຍ ໄວ້ຫຼາຍປີ ແຕ່ບໍ່ໄດ້ມີການພັດທະນາຫຍັງ ທັງບໍ່ທັນໄດ້ເສຍພັນທະຕໍ່ລັດ ຂອງບຸກຄົນ, ນິຕິບຸກຄົນ ຍັງມີຢູ່ທ້ອງຖິ່ນຕ່າງໆ ແຕ່ປະຊາຊົນຈຳນວນບໍ່ໜ້ອຍ ບໍ່ມີບ່ອນປຸກສ້າງທີ່ຢູ່ອາໄສ, ບໍ່ມີທີ່ດິນທຳການຜະລິດ, ບໍ່ມີລາຍຮັບທີ່ໝັ້ນຄົງ, ມີຄວາມທຸກຍາກ ຕໍ່ສະພາບການດັ່ງກ່າວ ຄວນໄດ້ເອົາໃຈໃສ່ກວດກາຄືນ ແລະ ມີການຈັດສັນ, ມີຊ່ອງທາງເພື່ອຊ່ວຍເຫຼືອແກ້ໄຂໃຫ້ເຂົາເຈົ້າ:ຂໍໃຫ້ມີການກວດກາ ຕໍ່ສະພາບການຊື້-ຂາຍດິນ ແລະ ເຮືອນ ໃຫ້ຄົນຕ່າງປະເທດ ແຕ່ອອກຊື່ເປັນຄົນລາວມີຢ່າງແຜ່ຫຼາຍ, ເກີດມີສະພາບການສໍ້ໂກງກັນລະຫວ່າງຜູ້ຊື້ດິນ ແລະ ຜູ້ອອກຊື່ ໃນໃບຕາດິນ ພາໃຫ້ເກີດມີຄວາມບໍ່ສະຫງົບ ສະເໜີໃຫ້ມີວິທີການແກ້ໄຂຢ່າງເປັນຮູບປະທຳ.
- ບັນຫາຂໍ້ຂັດແຍ່ງ ໃນການຊົດເຊີຍຜົນເສຍຫາຍຕໍ່ການຜະລິດກະສິກຳ ຂອງປະຊາຊົນບັນດາເຜົ່າທີ່ຖືກຜົນກະທົບ ຈາກໂຄງການກໍ່ສ້າງ, ສຳປະທານ ເພື່ອເຮັດກິດຈະກຳຕ່າງໆຂອງລັດ ແລະ ເອກະຊົນຈຳນວນໜຶ່ງ ຍັງບໍ່ທັນຖືກຕ້ອງສອດຄ່ອງກັບແນວທາງ, ກົດໝາຍ ສະພາບຕົວຈິງຍັງມີຫາງສຽງ, ມີການສະເໜີ, ຮ້ອງທຸກ ຕໍ່ການຈັດຕັ້ງກ່ຽວຂ້ອງຂັ້ນຕ່າງໆ ແຕ່ການແກ້ໄຂຕົວຈິງຍັງມີຄວາມຫຍຸ້ງຍາກ , ຊັກຊ້າແກ່ຍາວ; ທັງຍັງມີບາງບ່ອນ ມັກໃຊ້ອຳນາດບໍລິຫານຕໍ່ປະຊາຊົນ ຢ່າງບໍ່ມີເຫດຜົນພຽງພໍ.
- ສະເໜີສະພາແຫ່ງຊາດ ລົງຕິດຕາມກວດກາ ບັນຫາຂໍ້ຂັດແຍ້ງ ທີ່ດິນລະຫວ່າງບໍລິສັດນ້ຳທາກໍ່ສ້າງຂົວທາງ ກັບປະຊາຊົນຢູ່ບ້ານຊຽງດາ ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ ຈຳນວນ 126 ຄອບຄົວ, ແກ່ຍາວມາຫຼາຍປີ ປັດຈຸບັນເຫັນວ່າມັນກາຍເປັນບັນຫາລະຫວ່າງປະຊາຊົນ ກັບບໍລິສັດ ແລະ ອົງການປົກຄອງນະຄອນຫຼວງ; ຖ້າບໍ່ໄດ້ຮັບການແກ້ໄຂຢ່າງສົມເຫດສົມຜົນ ອາດຈະເປັນບັນຫາກວ້າງຕື່ມ.

*ເບິ່ງວິດີໂອຂ່າວນີ້ ໄດ້ທີ່ນີ້:*

*https://www.facebook.com/laolandinfo/videos/654026632449264/*


VILLAGE FOCUS INTERNATIONAL
ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
Brot für die Welt
ສະຫະພາບ ເອີຣົບ European Union
ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

## 2. ກໍລະນີສຶກສາ ຈາກປະເທດໄທ ກໍລະນີ ບີວລີ່ ເຖິງໃຈແຜ່ນດິນ: ການຕໍ່ສູ້ເພື່ອສິດທິຂອງຄົນຊົນເຜົ່າ ແລະ ການປົກປ້ອງປ່າໄມ້



ໃນເຂດຫຼາຍພື້ນທີ່ປ່າໄມ້ໃນປະເທດໄທ ແມ່ນມີປະຊາຊົນດໍາລົງຊີວິດຢູ່ມາຢ່າງຍາວນານ ໂດຍສະເພາະ ປະຊາຊົນຊົນເຜົ່າ ເຊິ່ງຕໍ່ມາ ລັດຖະບານໄທ ກໍ່ໄດ້ມີການປະກາດ ເປັນປ່າສະຫງວນ ຫຼື ອຸທະຍານແຫ່ງ ຊາດຫຼາຍແຫ່ງ ເຊິ່ງເຮັດໃຫ້ເກີດບັນຫາໃນປະເດັນຂອງ ການໃຫ້ປະຊາຊົນອອກຈາກພື້ນທີ່ປ່າ ແຕ່ ປະຊາຊົນຫຼາຍຊົນເຜົ່າໃນປະເທດໄທ ກໍ່ຢືນຢັດ ໃນສິດທິຂອງຕົນເອງໃນການດໍາລົງຊີວິດໃນເຂດປ່າ ເນື່ອງຈາກເຂົາເຈົ້າແມ່ນຢູ່ໃນປ່ານັ້ນມາກ່ອນທີ່ຈະມີການປະກາດເປັນເຂດອຸທະຍານແຫ່ງຊາດ ແລະ ໄດ້ມີ ຫຼາຍພື້ນທີ່ກໍ່ໄດ້ມີຄວາມພະຍາຍາມໃນການຕໍ່ສູ້ເພື່ອສິດທິຂອງຕົນເອງ ແລະ ໄດ້ມີການສະເໜີຫາ ພາກສ່ວນລັດຖະບານໃນການໃຫ້ຮັບຮູ້ສິດຂອງເຂົາເຈົ້າໃນການດໍາລົງຊີວິດຢູ່ໃນປ່າ ພ້ອມທັງໄດ້ມີຂໍ້ສະເ ໜີໃຫ້ແກ່ລັດຖະບານໃນເລື່ອງຂອງການດໍາລົງຊີວິດ ແລະ ການປົກປ້ອງປ່າ ເພື່ອຢັ້ງຢືນວ່າເຂົາເຈົ້າສາມາດ ຢູ່ໃນປ່າ ແລະ ສາມາດປົກປ້ອງປ່າໄດ້.

**ກໍລະນີຂອງ ບີວລີ່:**

- ພໍລະຈີ ຣັກຈົງຈະເລີນ ຫຼື ບີວລີ່ ເປັນນັກປົກປ້ອງສິດ ທີ່ເປັນຄົນຊົນເຜົ່າປາກາກະຢໍ (ກະຣ່ຽງ) ແລະ ເປັນຫຼານຊາຍຂອງ ປູ່ອີ້ ທີ່ເປັນຜູ້ນໍາທາງຈິດວິນຍານຂອງປະຊາຊົນຊົນເຜົ່າປາກາກະຢໍ ຢູ່ໃນເຂດປ່າ ແກ່ງກະຈານ, ແຂວງ ເພັດບູຣີ ປະເທດໄທ
- ບີວລີ່ ໄດ້ມີການຮຽກຮ້ອງ ສິດທິຊຸມຊົນ ເຊິ່ງໃນຫຼາຍກໍລະນີແມ່ນເປັນຂໍ້ຂັດແຍ້ງລະຫວ່າງ ຊົນເປົ່າ ປາກາກະຢໍ ກັບ ເຈົ້າໜ້າທີ່ພາກລັດ ໂດຍສະເພາະແມ່ນປະເດັນທີ່ກ່ຽວຂ້ອງກັບ ທີ່ຢູ່ອາໄສ ແລະ ການ

ຂັບໄລ່ປະຊາຊົນໃຫ້ອອກຈາກພື້ນທີ່. ເຊິ່ງໃນຫຼາຍກໍລະນີ ບິວລີ່ໄດ້ກາຍເປັນໜຶ່ງໃນແກນນໍາໃນການກຽມຮ້ອງຟ້ອງຄະດີຕໍ່ກັບເຈົ້າໜ້າທີ່ພາກລັດ ໃນກໍລະນີ ທີ່ເຈົ້າໜ້າທີ່ລັດໄດ້ມີການທໍາລາຍບ້ານເຮືອນ ແລະ ຊັບສິນຂອງປະຊາຊົນຫຼາຍກວ່າ 20 ຄອບຄົວ ຢູ່ທີ່ ບ້ານ ໃຈແຜ່ນດິນ ໃນປີ 2010.

- ໃນເດືອນ ກໍລະກົດ ປີ 2010 ປູ່ອີ້ ໄດ້ຮ່ວມກັບ ປະຊາຊົນ 6 ຄົນ ຈາກບ້ານ ບາງກອຍ ແລະ ບ້ານ ໃຈແຜ່ນດິນ ທີ່ແຂວງ ເພັດບູລີ ປະເທດໄທ ໄດ້ຍື່ນຟ້ອງ ກົມ ອຸທະຍານແຫ່ງຊາດ ສັດປ່າ ແລະ ພັນພືດ ໃນຄະດີທີ່ ມີການໃຊ້ກໍາລັງເຂົ້າໄປຮື້ທໍາລາຍບ້ານເຮືອນ ແລະ ຊັບສິນ ຂອງປະຊາຊາຊົນ ຫຼາຍກວ່າ 20 ຄອບຄົວ ຫຼັງຈາກໃຊ້ເວລາໃນການຕໍ່ສູ້ໃນຂະບວນການຍຸຕິທໍາ ເກືອບ 3 ປີ ເຊິ່ງ ສານປົກຄອງພາກກາງ ໄດ້ໃຫ້ ພະຍານ ເຂົ້າໃຫ້ຂໍ້ມູນໃນ ອາທິດສຸດທ້າຍຂອງເດືອນ ພຶດສະພາ ປີ 2014.
- ແຕ່ວ່າກ່ອນໜຶ່ງເດືອນ ທີ່ສານປົກຄອງຈະໃຫ້ພະຍານ ເຂົ້າມາໃຫ້ຂໍ້ມູນ ໃນວັນທີ 17 ເມສາ 2014 ບິວລີ່ ຜູ້ເປັນແກນນໍາ ຂອງປະຊາຊົນທີ່ຮ້ອງຟ້ອງ ທີ່ຕ້ອງເປັນຜູ້ໃຫ້ປາກຄໍາກັບຫາຍຕົວໄປຢ່າງລຶກລັບ ໂດຍທີ່ຕອນເຊົ້າໃນມື້ນັ້ນ ລາວໄດ້ເດີນທາງງອອກຈາກບ້ານ ໂປ່ງລຶກ-ບາງກອຍ ເພື່ອໄປ ເມືອງແກ່ງກະຈານ. ເຊິ່ງພະຍານໄດ້ພົບເຫັນ ບິວລີ່ເປັນຄັ້ງສຸດທ້າຍ ໄດ້ລະບຸວ່າ ລາວເຫັນ ບິວລີ່ ຖືກເຈົ້າໜ້າທີ່ເຂົ້າຈັບກຸມຕົວທີ່ດ່ານ ມະເຣວ ອຸທະຍານແຫ່ງຊາດແກ່ງກະຈານ ຕໍາບົນ ຫ້ວຍແມ່ພຽງ ອໍາເພີແກ່ງກະຈານ ແຂວງ ເພັດບູລີ ໃນວັນທີ 18 ເມສາ 2014 ເວລາ 6 ໂມງເຊົ້າ. ຄົນໃນຄອບຄົວກໍ່ຢືນຢັນວ່າ ບິວລີ່ຍັງບໍ່ໄດ້ກັບມາບ້ານຈົນເຖິງເວລາ 8ໂມງເຊົ້າ. ຈາກນັ້ນປະຊາຊົນໄດ້ອອກຄົ້ນຫາຈົນເຖິງເວລາ 20:00 ໂມງ ເຊິ່ງຜູ້ໃຫຍ່ບ້ານ ບ້ານບາງກອຍໄດ້ເຈົ້າແຈ້ງຄວາມຄົນຫາຍ ທີ່ສະຖານີຕໍາຫຼວດ... ເຈີນເຖິງປັດຈຸບັນ ຄວາມຍຸຕິທໍາຍັງບໍ່ທັນຫວນຄືນສູ່ບິ່ວລີ່.
- ແລະ ຈົນເຖິງທຸກມື້ນີ້ ປະຊາຊົນບ້ານ ບາງກອຍ ຍັງຄົງປະເຊີນໜ້າກັບການຖືກດໍາເນີນຄະດີ ໃນຂໍ້ຫາ ບຸກລຸກປ່າ ແລະ ຖືກຈັບກຸມ ລວມເຖິງການບັງຄັບໃຫ້ຍົກຍ້າຍລົງມາຈາກ ບາງກອຍເໜືອ ແລະ ບໍ່ມີທີ່ດິນໃນການທໍາມາຫາກິນພຽງພໍ ໂດຍໄດ້ຮັບການຈັດສັນພື້ນທີ່ຢູ່ປະມານ 7 ໄຣ່. ເຊິ່ງສິ່ງນີ້ ໄດ້ສົ່ງຜົນໃຫ້ຄວາມໝັ້ນຄົງທາງດ້ານສະບຽງອາຫານຈາກການເຮັດໄຮ່ໝູນວຽນ ແລະ ວັດທະນາທໍາປາກກະຢໍໃນພື້ນທີ່ດັ່ງກ່າວຫາຍໄປ ແລະ ປະຊາຊົນບ້ານບາງກອຍກໍ່ຈໍາຕ້ອງໄດ້ອອກໄປເຮັດວຽກຮັບຈ້າງ ຢູ່ໃນເຂດຕົວເມືອງ.
- ໃນປັດຈຸບັນ ປະຊາຊົນ ບ້ານບາງກອຍ ກໍ່ຍັງມີຄວາມມຸ້ງໝັ້ນ ໃນການຕໍ່ສູ້ ເພື່ອຫວັງວ່າ ມື້ໜຶ່ງຈະໄດ້ກັບຄືນສູ່ ບ້ານ ໃຈແຜ່ນດິນອີກຄັ້ງໃນນາມ "ບາງກອຍຄືນຖິ່ນ"
- ຕໍ່ກັບ ບັນຫາສິດທິມະນຸດທີ່ເກີດຂຶ້ນໃນພື້ນທີ່ດັ່ງກ່າວນັ້ນ ຄະນະກໍາມະການສິດທິມະນຸດແຫ່ງຊາດກໍ່ໄດ້ມີການຊີ້ແນະໃຫ້ລັດຖະບານ ໂຈະການສະເໜີຊື່ ຂຶ້ນທະບຽນເປັນມໍລະດົກໂລກ ໄວ້ກ່ອນເນື່ອງຈາກມີຄວາມກັງວົນໃນເລື່ອງຂອງບັນຫາສິດທິມະນຸດຂອງຊົນເຜົ່າພື້ນເມືອງ ໂດຍສະເພາະຊົນເຜົ່າປາກກະຍໍ ບາງກອຍ ທີ່ຍັງບໍ່ທັນໄດ້ຮັບການແກ້ໄຂ ແລະ ກໍ່ໄດ້ມີການສົ່ງໜັງສືເຖິງນາຍົກລັດຖະມົນຕີ ແລະ ປະທານຄະນະກໍາມະການແຫ່ງຊາດວ່າດ້ວຍ ອະນຸສັນຍາຄຸ້ມຄອງມໍລະດົກໂລກ ລົງວັນທີ 12 ກໍລະກົດ ປີ 2021

**ແຫຼ່ງອ້າງອ້າງຂໍ້ມູນຈາກ:**

ການລາຍງານຜົນກໍລະນີຂອງ ການຫາຍຕົວໄປຂອງ ບິວລີ່: https://www.amnesty.or.th/latest/news/741/
ໃຈແຜ່ນດິນ: https://www.amnesty.or.th/latest/blog/1000/
ການໃຫ້ໂຈະຊື່ວຄາວໃນການສະເໜີຊື່ຂຶ້ນເປັນມໍລະດົກໂລກ: https://www.khaosod.co.th/politics/news_6531811


VILLAGE FOCUS INTERNATIONAL · ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG · Brot für die Welt · ສະຫະພາບ ເອີຣົບ European Union
ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

ພາສາໄທ: https://www.amnesty.or.th/latest/blog/987-2/

English: https://www.amnesty.or.th/en/latest/news/785-2/

## ບາງຮູບພາບກ່ຽວກັບກໍລະນີສຶກສາ







3. ກໍລະນີສຶກສາ ໂຄງການສໍາປະທານທີ່ດິນທາງເສດຖະກິດ ເພື່ອປູກອ້ອຍ ແລະ ສ້າງຕັ້ງໂຮງງານນໍ້າຕານ ທີ່ ແຂວງ ເກາະກົງ, ປະເທດກໍາປູເຈຍ

"ນໍ້າຕານຂົມ: ການຍຶດຄອງທີ່ດິນ ແລະ ການບັງຄັບໃຫ້ຍົກຍ້າຍ ເພື່ອປູກອ້ອຍຜະລິດນໍ້າຕານ"



- ວັນທີ 2 ສິງຫາ ໃນປີ 2006 ລັດຖະບານ ປະເທດກໍາປູເຈຍໄດ້ອະນຸມັດການສໍາປະທານທີ່ດິນໃຫ້ແກ່ ສອງບໍລິສັດ: ບໍລິສັດ ເກາະກົງ ການກະສິກໍາ ຈໍາກັດ (KPT) ແລະ ບໍລິສັດ ນໍ້າຕານເກາະກົງ (KSI) ເຊິ່ງເປັນບໍລິສັດລູກທີ່ຕັ້ງຂຶ້ນໃໝ່ (ໃນບໍລິສັດດັ່ງກ່າວ ກໍ່ມີນັກການເມືອງອາວຸໂສ ຖືຫຸ້ນດ້ວຍ) ເພື່ອດໍາເນີນທຸລະກິດໃນປະເທດກໍາປູເຈຍ ຂອງ ບໍລິສັດນໍ້າຕານຂອນແກ່ນ ຈໍາກັດ (ມະຫາຊົນ) ຂອງປະເທດໄທ. ໃນ ບໍລິເວນ 3 ບ້ານ ທີ່ ເມືອງ ເຮອໍາເບີ, ແຂວງເກາະກົງ ຈໍານວນ 19,100 ເຮັກຕາ ດ້ວຍອາຍຸສໍາປະທານ 90 ປີ;
- ຈໍານວນເງິນທຶນທີ່ບໍລິສັດໄດ້ຮັບແມ່ນເປັນຈະໃຊ້ເພື່ອຜະລິດນໍ້າຕານສົ່ງອອກສູ່ເອີຣົບ ອີງຕາມໂຄຕ້າພິເສດ ທີ່ຊື່ວ່າ "ທຸກໆສິ່ງຍົກເວັ້ນ ອາວຸດ" ຫຼື Everything Things but Arms- EBA. ເຊິ່ງຈາກການລາຍງານໃນໄລຍະຕໍ່ວ່າເຫັນວ່າ ເນື້ອທີ່ການສໍາປະທານທີ່ດິນແມ່ນເກີນຈໍານວນທີ່ກົດໝາຍທີ່ດິນປີ 2001 ຂອງ ກໍາປູເຈຍທີ່ກໍານົດໄວ້;
- ພື້ນທີ່ທີ່ຖືກສໍາປະທານນັ້ນ ເປັນພື້ນທີ່ ທີ່ຢູ່ອາໄສ ແລະ ການທໍາມາຫາກິນຂອງປະຊາຊົນ ເຊິ່ງມີການບຸກເບີກມາຢ່າງຍາວນານກວ່າ 70 ປີ (ກ່ອນຈະມີກົດໝາຍທີ່ດິນ) ແລ້ວໂດຍສະເພາະ 3 ບ້ານ ແລະ ພື້ນທີ່ດັ່ງການກໍ່ໄດ້ຮັບການຈັດສັນທີ່ດິນແບບມີສ່ວນຮ່ວມ (PLUP) ເຊິ່ງກົງກັບຕາມຂໍ້ກໍານົດຄຸນສົມບັດໃນການຂໍ້ຂຶ້ນທະບຽນອອກໃບຕາດິນ ແລະ ມູນຄ່າຂອງທີ່ດິນຕ້ອງມີການປະເມີນຕາມລາຄາຕະຫຼາດທີ່ດິນ ຫາກມີກໍລະນີການເວນຄືນທີ່ດິນ (ຕາມກົດໝາຍທີ່ດິນຂອງກໍາປູເຈຍ);


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

- ການເຂົ້າມາຂອງບໍລິສັດ ດັ່ງກ່າວເຮັດໃຫ້ປະຊາຊົນສູນເສຍທີ່ຢູ່ອາໄສ ແລະ ທີ່ດິນໃນການທຳມາຫາກິນ ພ້ອມທັງເຮັດໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບສູນເສຍລາຍໄດ້ ແລະ ເຂົາເຈົ້າກໍ່ບໍ່ສາມາດເຂົ້າໄປຊອກຫາອາຫານໃນເຂດພື້ນທີ່ດັ່ງກ່າວຫຼັງຈາກທີ່ມີການສຳປະທານທີ່ດິນ; ເນື່ອງຈາກມີການບຸກເບີກປູກອ້ອຍເປັນບໍລິເວນກວ້າງ ພື້ນທີ່ທີ່ເຄີຍເປັນເຂດປ່າອຸດົມສົມບູນ ໄດ້ເຊື່ອມໂຊມລົງ.

**ຈາກບົດລາຍງານກວດສອບຂອງ ຄະນະກຳມະການ ສິດທິມະນຸດແຫ່ງຊາດ ປະຈຳປະເທດໄທ ໃນປີ 2015 ໄດ້ໃຫ້ຮູ້ວ່າ:** ການສຳປະທານທີ່ດິນຂອງໂຄງການນີ້ ແມ່ນລະເມີດສິດທິ ຕໍ່ກັບການດຳລົງຊີວິດ ແລະ ກຳນົດຊະຕາຊີວິດຂອງຕົນເອງ ຂອງປະຊາຊົນທ້ອງຖິ່ນ ເຊິ່ງລວມເຖິງ ສິດທິຕໍ່ກັບການຈັດການ ແລະ ໄດ້ຮັບຜົນປະໂຫຍດ ຈາກຊັບພະຍາ ກອນທຳມະຊາດ ແລະ ສິດທິໃນການໄດ້ຮັບການພັດທະນາ. ກໍລະນີດັ່ງກ່າວແມ່ນເປັນກໍລະນີ ຂ້າມພົມແດນທຳອິດ ທີ່ຖືກຍອມຮັບຈາກຄະນະກຳມະການ ສິດທິມະນຸດແຫ່ງຊາດ ປະຈຳປະເທດໄທ (NHRCT) ອັນໄດ້ເປັນຊ່ອງທາງ ໃນການຮ້ອງຟ້ອງຕໍ່ສານໃນປະເທດໄທໄດ້. ໃນບົດລາຍງານຂອງ NHRCT ໄດ້ລະບຸຊັດເຈນວ່າບໍລິສັດລົງທຶນນັ້ນ ຕ້ອງຮັບຜິດຊອບຕໍ່ກັບການລະເມີດສິດທິມະນຸດທີ່ເກີດຂຶ້ນ ເນື່ອງຈາກເຂົາເຈົ້າເປັນຜູ້ທີ່ຮັບປະໂຫຍດຈາກ ການສຳປະທານທີ່ດິນດັ່ງກ່າວ ອັນໄດ້ນຳພາເຮັດໃຫ້ມີການລະເມີດສິດທິຕ່າງໆເກີດຂຶ້ນ ເຖິງແມ່ນວ່າ ບໍລິສັດດັ່ງກ່າວຈະບໍ່ຍອມຮັບຕໍ່ກັບຜົນຂອງບົດລາຍປະເມີນດັ່ງກ່າວກໍ່ຕາມ.

- ຕະຫຼອດໄລຍະເວລາຂອງການດຳເນີນໂຄງການນີ້ ແມ່ນບໍ່ມີການຮັບຟັງຄວາມຄິດເຫັນລ່ວງໜ້າ, ບໍ່ມີການປະກາດໃຫ້ຮູ້ ແລະ ບໍ່ມີການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ດ້ວຍ
- ມີການບັງຄັບໃຫ້ປະຊາຊົນອອກຈາກທີ່ດິນຂອງເຂົາເຈົ້າ ໂດຍໃນເວລາທີ່ບໍລິສັດເຂົ້າມາບັງຄັບໃຫ້ປະຊາຊົນອອກຈາກພື້ນທີ່ ແມ່ນໄດ້ເກີດມີການປະທະກັນ ເຮັດໃຫ້ຊາວບ້ານ 5 ຄົນ ໄດ້ຮັບບາດເຈັບ ຈາກການຖືກທຳລາຍຂອງຕຳຫຼວດ ພ້ອມທັງຖືກຍິງ ແລະ ຖືກຕີດ້ວຍປືນ, ມີການທຳລາຍໄຮ່ສວນ ແລະ ສັບຊິນຕ່າງໆຂອງປະຊາຊົນ ອັນໄດ້ເຮັດໃຫ້ປະຊາຊົນກວ່າ 456 ຄອບຄົວ ໃນ 3 ບ້ານ ນັ້ນ ສູນເສຍພື້ນທີ່ດິນຂອງຕົນເອງກວ່າ 5000 ເຮັກຕາ ເຊິ່ງເຫດການດັ່ງກ່າວ ຖືກບັນທຶກພາບໄວ້ໂດຍຊາວບ້ານຜູ້ໜຶ່ງ ແຕ່ໄລຍະຕໍ່ມາຊາວບ້ານຜູ້ນັ້ນຖືກລອບສັງຫານຈົນເສຍຊີວິດ. ພ້ອມນັ້ນປະຊາຊົນທີ່ຢືນຢັດຕໍ່ສູ້ເພື່ອປົກປ້ອງສິດທິ ແລະ ພື້ນທີ່ດິນຂອງຕົນເອງ ພ້ອມດ້ວຍທະນາຍຄວາມ ແລະ ນັກເຄື່ອນໄຫວກິດຈະກຳທາງສັງຄົມ ແມ່ນຖືກຕິດຕາມ ແລະ ຖືກຄຸກຄາມຕະຫຼອດເວລາ ທີ່ມີການໄປພື້ນທີ່ດັ່ງກ່າວ; ເຫດການນີ້ແມ່ນເກີດຂຶ້ນກ່ອນທີ່ຈະມີການລົງນາມເຊັນສັນຍາສຳປະທານໂຄງການນີ້
- ຕໍ່ກັບບັນຫາ ແລະ ຄວາມຮຸນແຮງທີ່ເກີດຂຶ້ນ ຕົວແທນຈາກລັດຖະບານ ໄດ້ມີການຈັດກອງປະຊຸມລະຫວ່າງ ບໍລິສັດ ແລະ ຕົວແທນຊາວບ້ານ ແລະ ສູນການສຶກສາ ກົດໝາຍຊຸມຊົນ ໂດຍມີຂໍ້ສະເໜີແນະໃຫ້ບໍລິສັດຢຸດໃນການບັງຂັບໄລ່ຊາວບ້ານອອກຈາກພື້ນທີ່ ແລະ ໃຫ້ບໍລິສັດ ປະສານງານຮ່ວມກັບ ອົງການຈັດຕັ້ງທາງສັງຄົມ ເພື່ອແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ. ແຕ່ໃນຊ່ວງໄລຍະໜຶ່ງ 1 ຫຼັງຈາກທີ່ມີການຈັດກອງປະຊຸມນັ້ນ ກໍ່ບໍ່ໄດ້ຮັບການຕອບຮັບໃດໆເລີຍຈາກບໍລິສັດ ແລະ ໜ່ວຍງານພາກລັດຂັ້ນທ້ອງຖິ່ນກໍ່ບໍ່ເອົາໃຈໃສ່ໃນການຕິດຕາມຂໍ້ສະເໜີ ທີ່ໄດ້ສະເໜີໄປໃນທີ່ປະຊຸມ ເຮັດໃຫ້ຊາວບ້ານບາງສ່ວນຕັດສິນໃຈຮັບຄ່າຊົດເຊີຍຈາກບໍລິສັດ ຈຳນວນປະມານ 1,000 ໂດລາ ຕໍ່ກັບ

ທີ່ດິນ 1 ເຮັກຕາ ເຊິ່ງຈຳນວນດັ່ງກ່າວ ແມ່ນເປັນມູນຄ່າທີ່ຕ່ຳຫຼາຍ ຕໍ່ກັບສິ່ງທີ່ຊາວບ້ານຕ້ອງສູນເສຍໄປ;

- ການສູນເສຍທີ່ດິນ ໄດ້ບີບໃຫ້ຊາວບ້ານຕ້ອງຈຳໃຈໄປເຮັດວຽກໃຫ້ກັບບໍລິສັດ ດັ່ງກ່າວ ໂດຍການເປັນລູກຈ້າງລາຍວັນ ແລະ ຍັງຖືກກົດຄ່າແຮງງານ ແລະ ເຮັດໃຫ້ເຂົາເຈົ້າທຸກຍາກລົງໄປທຸກມື້ ຈົນເຮັດໃຫ້ບໍ່ມີຄ່າໃຊ້ຈ່າຍໃນການສົ່ງລູກຮຽນໜັງສື ແລະ ເດັກນ້ອຍຈາກຫຼາຍຄອບຄົວຈຳຕ້ອງໄດ້ອອກຈາກໂຮງຮຽນ ມາຊ່ວຍວຽກພໍ່ແມ່ເຮັດວຽກໃນສວນອ້ອຍ ເພື່ອຫາລາຍໄດ້ໃຫ້ຄອບຄົວ;
- ບັນຫາທີ່ເກີດຂຶ້ນ ປະຊາຊົນ ແມ່ນໄດ້ມີຄວາມພະຍາຍາມຕະຫຼອດມາໃນການສະເໜີໃຫ້ໜ່ວຍງານທີ່ກ່ຽວຂ້ອງຢູ່ພາຍໃນປະເທດກຳປູເຈຍເຂົ້າມາແກ້ໄຂບັນຫາ ພ້ອມທັງມີການສະເໜີເລື່ອງຫາ ສານປະຊາຊົນຢູ່ພາຍໃນປະເທດ ແຕ່ສຸດທ້າຍ ແມ່ນບໍ່ໄດ້ຮັບການແກ້ໄຂ, ຈຶ່ງເຮັດໃຫ້ປະຊາຊົນທີ່ຢືນຢັດໃນການຕໍ່ສູ້ ໄດ້ມີການສົ່ງຟ້ອງຫາສານໃນປະເທດໄທ ເພື່ອຫາຊ່ອງທາງແກ້ໄຂບັນຫາ;

ນອກຈາກປະເດັນທາງດ້ານສິດທິມະນຸດແລ້ວ ກໍລະນີສຶກສານີ້ ຍັງສະແດງໃຫ້ເຫັນເຖິງຊ່ອງວ່າງທາງດ້ານກົດໝາຍ ແລະ ຄວາມຮັບຜິດຊອບຂອງໜ່ວຍງານທີ່ກ່ຽວຂ້ອງ;

ນອກຈາກການຮ້ອງທຸກຢູ່ພາຍໃນປະເທດ ແລະ ໃນປະປະເທດໄທແລ້ວ, ກໍ່ຍັງໄດ້ມີການນຳໃຊ້ກົນໄກສາກົນ ໂດຍ ໄດ້ການສະໜັບສະໜູນຈາກ ນັກກົດໝາຍປະເທດກຳປູເຈຍ ແລະ ປະເທດອັງກິດ ໃນນາມທີ່ເປັນຕົວແທນຂອງປະຊາຊົນຈຳນວນ 200 ກວ່າຄອບຄົວ ໃນການສ້າງຖະແຫຼງການ ເພື່ອດຳເນີນທາງກົດໝາຍໃນກໍລະນີລະຫວ່າງ ຊາວບ້ານ ກັບ ບໍລິສັດ ນ້ຳຕານເກາະກົງ ແລະ ບໍລິສັດ ເທດ ແອນ ໄລລ໌ (Tate & Lyle) ທີ່ເປັນບໍລິສັດນ້ຳຕານລາຍໃຫຍ່ຂອງປະເທດອັງກິດ ທີ່ຮັບຊື້ນ້ຳຕານຈາກ ບໍລິສັດນ້ຳຕານຂ້ອນແກ່ນ. ການສົ່ງຖະແຫຼງການ ຫາ ບໍລິສັດ ເທດ ແອນ ໄລລ໌ ທີ່ປະເທດອັງກິດ ກໍ່ຍ້ອນວ່າ ຊາວບ້ານຢາກສະເໜີໃຫ້ບໍລິສັດດັ່ງກ່າວນັ້ນ ໄດ້ຮັບຮູ້ວ່າບໍລິສັດຂອງຕົນເອງ ແມ່ນກຳລັງຮັບຊື້ນ້ຳຕານ ຈາກ ບໍລິສັດທີ່ມີການລະເມີດສິດທິມະນຸດ ແຕ່ເຖິງຢ່າງໃດກໍ່ຕາມ ກໍ່ໄດ້ມີການຈັດກອງປະຊຸມຫຼາຍຕໍ່ຫຼາຍຄັ້ງ ແລະ ໃຊ້ເວລາຍາວນານໃນການໄກ່ເກ່ຍ ແລະ ແກ້ໄຂຂໍ້ຂັດແຍ້ງທີ່ເກີດຂຶ້ນ. ຈົນມາເຖິງປີ 2021 ທາງ ບໍລິສັດ ເທດ ແອນ ໄລລ໌ ໄດ້ຕອບກັບວ່າ ບໍລິສັດຕົນຈະບໍ່ຮັບຜິດຊອບຄ່າຊົດເຊີຍໃດໆໃຫ້ແກ່ ປະຊາຊົນຈຳນວນ 200 ຄອບຄົວນັ້ນ ແຕ່ບໍລິສັດຂອງຕົນເອງແມ່ນຈະສືບຕໍ່ກົດດັນໃຫ້ບໍລິສັດ ນ້ຳຕານເກາະກົງ ຈຳກັດ ເປັນຜູ້ຊົດເຊີຍຕໍ່ຜົນເສຍຫາຍທີ່ເກີດຂຶ້ນ.

ຈາກການສະເໜີຂອງ ທີມນັກກົດໝາຍຮ່ວມກັບປະຊາຊົນ ໄດ້ເຮັດໃຫ້ ບໍລິສັດ ນ້ຳຕານເກາະກົງ ມີການຈັດກອງປະຊຸມຊ່ອງໜ້າກັນ ເພື່ອໃຫ້ມີການຕົກລົງກັນໂດຍສະເພາະ ແມ່ນເລື່ອງຂອງຄ່າຊົດເຊີຍ (ເຊິ່ງໃນຂໍ້ສະເໜີຂອງຝ່າຍທີມນັກກົດໝາຍ ແມ່ນໃຫ້ບໍລິສັດເຊີນໜ່ວຍງານ ອົງການຈັດຕັ້ງທາງສັງຄົມມາເປັນພະຍານນຳ ແຕ່ເຂົາເຈົ້າບໍ່ໄດ້ເຊີນ). ຈາກກອງປະຊຸມ ບໍລິສັດ ໄດ້ມີການສົ່ງຈົດໝາຍກັບມາຫາທາງທີມນັດກົດໝາຍໂດຍລະບຸວ່າ ບໍລິສັດຈະມີການຊົດເຊີຍຈຳນວນໜຶ່ງໃຫ້ປະຊາຊົນ ແຕ່ພັດບໍ່ໄດ້ບອກຈຳນວນເງິນທີ່ແນ່ນອນ ແລະ ບໍ່ໄດ້ລະບຸວ່າ ບໍລິສັດຈະໃຫ້ເງິນຄ່າຊົດເຊີຍແກ່ຊາວບ້ານທີ່ສູນເສຍທີ່ດິນນັ້ນໄປເປັນຈຳນວນເທົ່າໃດ.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

ກໍລະນີນີ້ທີ່ເກີດຂຶ້ນ ແມ່ນໄດ້ຮັບຄວາມສົນໃຈເປັນວົງກວ້າງ ອັນໄດ້ເຮັດໃຫ້ເກີດມີການເຂົ້າມາກວດສອບຂອງໜ່ວຍງານສາກົນຫຼາຍຄັ້ງ ໂດຍສະເພາະ ການເຂົ້າມາກວດສອບເບິ່ງຕົວຈິງຂອງຜູ້ແທນພິເສດ ທາງດ້ານສິດທິມະນຸດ ຈາກ ສປຊ ອັນໄດ້ເຮັດໃຫ້ບັນຫານີ້ຖືກຕີແຜ່ເປັນວົງກວ້າງ ແລະ ມີທ່າທີວ່າ ບໍລິສັດເລີ່ມເຂົ້າມາແກ້ໄຂສະຖານະການທີ່ເກີດຂຶ້ນ.

ໃນຕະຫຼອດຫຼາຍປີທີ່ຜ່ານມາ ມີການຮ້ອງຟ້ອງຫຼາຍຄັ້ງ ແລະ ມີການປ່ຽນຜູ້ຖືຮຸ້ນໃນບໍລິສັດດ້ວຍ ແລະ ມີຫຼາຍອົງການທາງດ້ານສິດທິມະນຸດຈາກສາກົນ ໄດ້ເຝົ້າຕິດຕາມສະຖານະການຢ່າງໃກ້ຊິດ ຈົນເຮັດໃຫ້ປີ 2018 ກະຊວງ ການຈັດການກ່ຽວກັບທີ່ດິນຂອງປະເທດກຳປູເຈຍ ໄດ້ມີການຈັດສັນທີ່ດິນຈຳນວນ 300 ເຮັກຕາ ໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ 200 ຄອບຄົວ ເພື່ອເປັນຄ່າຊົດເຊີຍ ແຕ່ໃນຊ່ວງຄ່າຊົດເຊີຍທີ່ເປັນເງິນນັ້ນ ຊາວບ້ານຍັງບໍ່ທັນໄດ້ຮັບຕາມຄຳໝັ້ນສັນຍາທີ່ບໍລິສັດເຄີຍສະເໜີໄວ້.

ໃນຊ່ວງໄລຍະເວລາໃກ້ຄຽງກັນນັ້ນ ສະຫະພາບເອີຣົບ ກໍ່ໄດ້ປະກາດເຕືອນ ປະເທດກຳປູເຈຍວ່າ ຈະຕັດສິດສິດທິພິເສດ ທາງການຄ້າໃນມາດຕະການ EBA ເນື່ອງຈາກຢູ່ພາຍໃນປະເທດບໍ່ມີຄວາມໂປ່ງໃສໃນການເລືອກຕັ້ງ ແລະ ມີການລະເມີດສິດທິມະນຸດຢ່າງຮຸນແຮງຫຼາຍກໍລະນີເກີດຂຶ້ນໃນປະເທດ (ເຊິ່ງຕໍ່ມາໃນປີ 2020 ທາງ ສະຫະພາບ ເອີຣົບ ກໍ່ໄດ້ມີການຢຸດຕິ ມາດຕະການພິເສດ EBA ກັບ ປະເທດກຳປູເຈຍ ອັນໄດ້ສົ່ງຜົນຕໍ່ກັບສິນຄ້າທີ່ຜະລິດໃນປະເທດກຳປູເຈຍທີ່ຈະສົ່ງອອກໄປເອີຣົບທັງໝົດ ເຊິ່ງໃນນັ້ນ ແມ່ນລວມເຖິງນ້ຳຕານດ້ວຍ).

ໃນໄລຍະຕໍ່ມາ ບໍລິສັດ ກໍ່ໄດ້ມີການຢຸດຕິໃນການດຳເນີນກິດຈະການທັງໝົດ ເຊິ່ງເຫດການນີ້ຖືໄດ້ວ່າເປັນບາດກ້າວໄຊຊະນະຂອງປະຊາຊົນທີ່ຕໍ່ສູ້ ເຊິ່ງແມ່ນວ່າ ພວກເຂົາສູນເສຍຫຼາຍຢ່າງໄປ ແລະ ຍັງຄົງລໍຄອຍວ່າຕົນເອງຈະໄດ້ຮັບຄ່າຊົດເຊີຍຄືນຢ່າງເປັນທຳຫຼືບໍ່.

(ຂໍ້ມູນລ່າສຸດ: ການຕໍ່ສູ້ຂອງຄອບຄົວຈຳນວນ 200 ຄົນນັ້ນ ໄດ້ກະຕຸ້ນໃຫ້ປະຊາຊົນທີ່ເຄີຍບໍ່ໄດ້ຮັບຄວາມເປັນທຳ ໄດ້ຕໍ່ສູ້ເພື່ອຮຽກຮ້ອງຄວາມເປັນທຳໃຫ້ແກ່ຕົນເອງ ໂດຍໄດ້ມີການສະເໜີໄປຫາສານປະຊາຊົນແຂວງ ແຕ່ສານບໍ່ຮັບຄຳຮ້ອງຟ້ອງ ແລະ ແຈ້ງວ່າ ຄະດີນີ້ແມ່ນໄດ້ຮັບແກ້ໄຂ ແລະ ຈົບສິ້ນລົງແລ້ວ ສະນັ້ນຈະບໍ່ມີການຊົດເຊີຍໃຫ້ອີກ ແຕ່ປະຊາຊົນຫຼາຍຄົນແມ່ນບໍ່ມີທີ່ຢູ່ອາໄສ ແລະ ທີ່ທຳກິນ ສະນັ້ນ ເຂົາເຈົ້າຈຶ່ງຮຽກຮ້ອງໃຫ້ສານເຂົ້າມາແກ້ໄຂບັນຫານີ້.

ອ່ານຂ່າວນີ້ ເປັນພາສາອັງກິດທີ່: https://www.phnompenhpost.com/national/koh-kong-families-row-sugarcane-firm-already-settled)

**ແຫຼ່ງຂໍ້ມູນອ້າງອີງຈາກ:**

- ຂໍ້ມູນຈາກ ບົດລາຍງານ ການລົງທຶນຂອງບໍລິສັດຈາກປະເທດໄທ ໄປລົງທຶນໃນຕ່າງປະເທດ (ໜ້າ 131-138), ໂດຍ ຄະນະຕິດຕາມ ການລົງທຶນຂ້າມພົມແດນ ຂອງບໍລິສັດໄທ ຫຼື ETO Watch (ພາສາໄທ): http://library.nhrc.or.th/ulib/document/Fulltext/F09950.pdf

- KOH KONG SUGAR PLANTATION, ໂດຍ ERI (ພາສາອັງກິດ): https://earthrights.org/case/koh-kong-sugar-plantation/
- ຂໍ້ມູນຈາກ Thai Publica (ພາສາໄທ): https://thaipublica.org/2014/10/200-koh-kong-families-need-to-talk/
- ຄວາມຫວານອັນຂົມຂື່ນ: ເມື່ອທີ່ດິນຂອງປະຊາຊົນທີ່ກຳປູເຈຍ ຕ້ອງກາຍເປັນສວນອ້ອຍຂອງນາຍທຶນໄທ: https://www.the101.world/sre-ambel-documentary/

*ອ່ານເພີ່ມເຕີມ:*
- ເລື່ອງບໍ່ຄ່ອຍຫວານ ຂອງນໍ້າຕານໄທໃນຕ່າງແດນ, ໂດຍສາລະຄະດີ (ພາສາໄທ): https://www.sarakadee.com/2018/09/26/thai-sugar-cane/
- ບົດຄວາມກ່ຽວກັບ ຄະດີຮ້ອງຟ້ອງ ກໍລະນີ ຂອງການປູກອ້ອຍ ໃນແຂວງ ເກາະກົງ, ປະເທດກຳປູເຈຍ, ໂດຍ Business & Human Rights Resource Centre (ພາສາອັງກິດ): https://www.business-humanrights.org/en/latest-news/koh-kong-sugar-plantation-lawsuits-re-cambodia/
- EU Partially Withdraws Cambodia Trade Deal Amid Rights Concerns: https://thediplomat.com/2020/02/eu-partially-withdraws-cambodia-trade-deal-amid-rights-concerns/
- Green News reports about court case of Oddar sugarcane plantation: https://greennews.agency/?p=21501
- Land grabbing and forced evictions by Koh Kong's sugar industry, Cambodia: https://ejatlas.org/conflict/land-grabbing-and-forced-evictions-by-koh-kongs-sugar-industry-cambodia
- Tate & Lyle accused of betraying Cambodia families whose land was allegedly taken: https://www.theguardian.com/business/2021/jan/02/tate-lyle-accused-of-betraying-cambodia-families-whose-land-was-allegedly-taken

## ບາງຮູບພາບກ່ຽວກັບກໍລະນີສຶກສາ






ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org









# ເຄື່ອງມືສຳລັບການຝຶກອົບຮົມ

ໂພສເຕີ້ ແລະ ພາບປະກອບກິດຈະກຳ

# ເຄື່ອງມືສຳລັບການຝຶກອົບຮົມໂພສເຕີ້

## ແຜນວາດແນວຄວາມຄິດ




| P | M | I |
|---|---|---|
| | | |

## ກິດຈະກຳ ຫົວ-ຫົວໃຈ-ມື










ແຜນວາດສາຍນ້ຳ

# ຮູບພາບປະກອບກິດຈະກຳ















**ຂອບເຂດຄວາມຮັບຜິດຊອບ:**

ສິ່ງພິມນີ້ແມ່ນເປັນການຮວບຮວມເອກະສານການຝຶກອົບຮົມ ແລະ ເຄື່ອງມືທີ່ພັດທະນາໂດຍ ໂຄງການສ້າງຄວາມສາມາດທີ່ມີເອກະລັກສະເພາະແນໃສ່ປັບປຸງຈິດສຳນຶກ, ຄວາມຮູ້ດ້ານກົດໝາຍ ແລະ ຄວາມສາມາດ ເພື່ອເພີ່ມທະວີສິດທິການຄອບຄອງທີ່ດິນ - LIFE (VFI). ເຊິ່ງເອກະສານສະບັບນີ້ຖືກຮວບຮວມໂດຍ ອົງການ ເຮວວີຕັດ ເພື່ອການຮ່ວມມືສາກົນ ປະຈຳ ສປປ ລາວ ແລະ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ພາຍໃຕ້ໂຄງການ PIASVC ໃນເດືອນ ມັງກອນ 2023.

ເຄື່ອງມືການຝຶກອົບຮົມນີ້ຍັງຄົງຢູ່ພາຍໃຕ້ກຳມະສິດຂອງ ໂຄງການ LIFE ແລະ ອົງການຈັດຕັ້ງອື່ນໆທີ່ມີສ່ວນຮ່ວມໃນການພັດທະນາຂອງຕົນ.

ເພື່ອການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ເອກະສານນີ້ສາມາດຖືກນຳໃຊ້ໂດຍບໍ່ມີຄ່າໃຊ້ຈ່າຍໃດໆ ໂດຍຜູ້ທີ່ສົນໃຈສຳລັບການນຳໃຊ້ທີ່ບໍ່ແມ່ນຈຸດປະສົງທາງດ້ານການຄ້າເທົ່ານັ້ນ, ການນຳໃຊ້ວິທີການສື່ສານ ແລະ ການແປ ທີ່ແຕກຕ່າງກັນ (ທັງ ສຳເນົາເອກະສານ, ລິ້ງຂໍ້ມູນໃນເວັບໄຊທ໌, ສຽງ ແລະ ຮູບພາບອື່ນໆ) ໂດຍໄດ້ລະບຸກຳມະສິດດັ້ງເດີມ ແລະ ຮັບຮູ້ຢ່າງຈະແຈ້ງດ້ວຍໂລໂກ້ ແລະ/ຫຼື ຊື່ອົງການທີ່ກ່ຽວຂ້ອງທີ່ປະກົດໃນເອກະສານສະບັບນີ້.

**Disclaimer:**

This publication is a compilation of training materials and tools developed by Land learning Initiative for Food security Enhancement Project - LIFE (VFI). It has been compiled by Helvetas Laos and LIWG under the PIASVC project in January 2023.

Ownership of this training materials and tools however remains with LIFE Project and any other organisations originally involved in its development.

In the spirit of promoting access to information, this document will be freely available to interested parties for non-commercial use only, using different means of communication and translation (printed hard copies, link on a website, audio-visual etc.) provided original ownership is clearly acknowledged with the respective logos and/or organization name.

ປັບແກ້ ແລະ ປັບປຸງໂດຍ/ Revised and updated by:

HELVETAS LAOS

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

ໃຫ້ທຶນສະໜັບສະໜູນໂດຍ/ Funded by:

Government of Japan

JSDF Japan Social Development Fund

THE WORLD BANK IBRD • IDA | WORLD BANK GROUP

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC